WORLD TRADE ORGANIZATION

WT/MIN(13)/36
WT/L/911

11 ທັນວາ 2013

(13-6825)



**ກອງປະຊຸມລັດຖະມົນຕີ**
**ຄັ້ງທີ 9, ທີ່ ບາຫຼີ, 3-6 ທັນວາ 2013**

**ສັນຍາວ່າດ້ວຍ ການອຳນວຍຄວາມສະດວກທາງການຄ້າ**

ຂໍ້ຕົກລົງຂອງລັດຖະມົນຕີ ສະບັບວັນທີ 7 ທັນວາ 2013

ກອງປະຊຸມຂອງລັດຖະມົນຕີ

*ອີງຕາມ* ວັກທີ 1 ມາດຕາ IX ຂອງສັນຍາມາຣາແກສ ວ່າດ້ວຍການສ້າງຕັ້ງອົງການການຄ້າໂລກ (ສັນຍາ "ອົງການການຄ້າໂລກ");

ໄດ້ຕົກລົງກັນດັ່ງລຸ່ມນີ້

1. ໃນນີ້, ພວກເຮົາ ສະຫຼຸບການເຈລະຈາສັນຍາ ວ່າດ້ວຍ ການອຳນວຍຄວາມສະດວກທາງການຄ້າ ("ສັນຍາ"), ເຊິ່ງເປັນເອກະສານຊ້ອນທ້າຍ, ຕ້ອງໄດ້ທົບທວນຄືນທາງດ້ານກົດ ໝາຍ ເພື່ອແກ້ໄຂໃຫ້ຖືກຕ້ອງຕາມລັກສະນະທີ່ເປັນທາງການທີ່ບໍ່ມີຜົນກະທົບຕໍ່ເນື້ອໃນຂອງສັນຍາດັ່ງກ່າວ.
2. ໃນນີ້, ພວກເຮົາ ສ້າງຕັ້ງ ຄະນະກຳມະ ການກະກຽມກ່ຽວກັບການອໍານວຍຄວາມສະດວກທາງການຄ້າ (ຄະນະກຳມະການກະກຽມ) ພາຍໃຕ້ ສະພາທົ່ວໄປ, ເປີດໃຫ້ກັບສະມາຊິກທັງໝົດ, ເພື່ອປະຕິບັດໜ້າທີ່ນັ້ນ ທີ່ອາດຈະຈໍາເປັນໃນການຮັບປະກັນ ໃຫ້ມີຜົນບັງຄັບໃຊ້ສັນຍາໂດຍໄວ ແລະ ເພື່ອກະກຽມເພື່ອການປະຕິບັດງານຂອງສັນຍາຢ່າງມີປະສິດທິຜົນໃນເວລາທີ່ມີຜົນບັງຄັບໃຊ້. ໂດຍສະເພາະ, ຄະນະກຳມະການກະກຽມ ຕ້ອງດໍາເນີນການທົບທວນທາງດ້ານກົດໝາຍຂອງ ສັນຍາ ໂດຍອີງໃສ່ ວັກທີ 1 ຂ້າງເທິງນີ້, ໄດ້ຮັບແຈ້ງການຂອງຂໍ້ຜູກພັນກຸ່ມປະເພດ A, ແລະ ສ້າງ ອະນຸສັນຍາຂອງການປັບປຸງນີ້ ("ອະນຸສັນຍາ") ເພື່ອສອດແຊກເພີ່ມສັນຍານີ້ ເຂົ້າໃນເອກະສານຊ້ອນທ້າຍ 1A ຂອງສັນຍາອົງການການຄ້າໂລກ.
3. ສະພາທົ່ວໄປ ຕ້ອງພົບປະ ຊ້າສຸດບໍ່ເກີນ ວັນທີ 31 ກໍລະກົດ ປີ 2014 ເພື່ອເຮັດເອກະສານຊ້ອນທ້າຍເຂົ້າໃນສັນຍາທີ່ເປັນການແຈ້ງການກ່ຽວກັບຂໍ້ຜູກພັນພາຍໃຕ້ກຸ່ມປະເພດ A, ເພື່ອຮັບຮອງເອົາອະນຸສັນຍາທີ່ສ້າງຂຶ້ນໂດຍຄະນະກຳມະການກະກຽມ, ແລະ ເປີດໃຫ້ ຮັບຮອງເອົາ ອະນຸສັນຍາ ຈົນເຖິງວັນທີ 31 ກໍລະກົດ 2015. ອະນຸສັນ ຍາ ຕ້ອງມີຜົນບັງຄັບໃຊ້ຕາມມາດຕາ X: 3 ຂອງສັນຍາອົງການການຄ້າໂລກ.

**ເອກະສານຊ້ອນທ້າຍ**
**ສັນຍາວ່າດ້ວຍ ການອຳນວຍຄວາມສະດວກທາງດ້ານການຄ້າ**

## ອະລຳພະບົດ

*ສະມາຊິກ,*

*ອີງຕາມ* ການເຈລະຈາຮອບໂດຮາ ຂອງການເຈລະຈາການຄ້າຫຼາຍຝ່າຍ;

*ເພື່ອທວນຄືນ ແລະ ຢືນຢັນ* ກ່ຽວກັບ ຄຳສັ່ງ ແລະ ຫຼັກການ ຢູ່ໃນວັກທີ 27 ຂອງ ຖະແຫຼງການໂດຮາຂອງລັດຖະມົນຕີ ແລະ ເອກະສານຊ້ອນ D ກ່ຽວກັບ ຂໍ້ຕົກລົງວ່າດ້ວຍແຜນງານໂດຮາ ຊຶ່ງຮັບຮອງ ໂດຍສະພາທົ່ວໄປ ໃນວັນທີ 1 ສິງຫາ 2004, ພ້ອມທັງ ວັກທີ 33 ແລະ ເອກະສານຊ້ອນ E ຂອງຖະແຫຼງການຮົງກົງຂອງລັດຖະມົນຕີ;

*ປາຖະໜາ* ເພື່ອສ້າງຄວາມຈະແຈ້ງ ແລະ ປັບປຸງຮູບການທີ່ກ່ຽວຂ້ອງ ຂອງມາດຕາ V, VIII ແລະ X ຂອງ GATT 1994 ພ້ອມທັງ ເຫັນໄດ້ ເພື່ອເລັ່ງລັດການເຄື່ອນຍ້າຍ, ການປ່ອຍສິນຄ້າ ແລະ ການສະສາງ (ການແຈ້ງຕາມລະບຽບການຂອງພາສີ) ສິນຄ້າ, ລວມທັງ ສິນຄ້າຜ່ານແດນ;

*ຮັບຮູ້* ຄວາມຕ້ອງການສະເພາະຂອງປະເທດກຳລັງພັດທະນາ ແລະ ໂດຍສະເພາະ ໂດຍສະເພາະແມ່ນ ປະເທດດ້ອຍພັດທະນາທີ່ເປັນສະມາຊິກ ແລະ ປາຖະໜາ ເພື່ອເສີມຂະຫຍາຍ ການຊ່ວຍເຫຼືອ ແລະ ສະໜັບສະໜູນສຳລັບການສ້າງຂີດຄວາມສາມາດໃນຂົງເຂດນີ້;

*ຮັບຮູ້* ຄວາມຈຳເປັນສຳລັບການຮ່ວມມືຢ່າງມີປະສິດທິຜົນ ພາຍໃນບັນດາສະມາຊິກກ່ຽວກັບການ ອຳນວຍຄວາມສະດວກທາງດ້ານການຄ້າ ແລະ ບັນຫາຄວາມສອດຄ່ອງທາງດ້ານວຽກງານພາສີ:

ໃນນີ້, ຕົກລົງກັນ ດັ່ງລຸ່ມນີ້:

## ພາກທີ I

### ມາດຕາ 1: ການຈັດພິມເຜີຍແຜ່ຂໍ້ມູນແລະ ການມີຂໍ້ມູນໄວ້

## 1. ການຈັດພິມເຜີຍແຜ່ຂໍ້ມູນ

1.1 ແຕ່ລະສະມາຊິກ ຕ້ອງຈັດພິມເຜີຍແຜ່ທັນທີ ກ່ຽວກັບຂໍ້ມູນດັ່ງຕໍ່ໄປນີ້ ໃນລັກສະນະທີ່ບໍ່ມີການ ຈຳແນກ ແລະ ສາມາດເຂົ້າເຖິງໄດ້ງ່າຍ ເພື່ອເຮັດໃຫ້ບັນດາລັດຖະບານ , ຜູ້ຄ້າ ແລະ ຜູ້ທີ່ສົນໃຈ ອື່ນໆ ໃຫ້ພວກເຂົາໄດ້ຮູ້ຈັກຄຸ້ນເຄີຍ ຄື:

ກ. ້ຂັ້ນຕອນການນຳເຂົ້າ, ການສົ່ງອອກ ແລະ ການຄ້າຜ່ານແດນ (ລວມທັງ ້ຂັ້ນຕອນທີ່ທ່າເຮືອ, ສະໜາມບິນ, ແລະ ຈຸດຂາເຂົ້າອື່ນໆ) ແລະ ບັນດາແບບຟອມ ແລະ ເອກະສານທີ່ຕ້ອງການ;

ຂ. ອັດຕາພາສີທີ່ນຳໃຊ້ ແລະ ທຸກປະເພດອາກອນທີ່ເກັບ ຫຼື ກ່ຽວຂ້ອງກັບການນຳເຂົ້າ ຫຼື ການສົ່ງອອກ;

ຄ. ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ທີ່ເກັບໂດຍ ຫຼື ເພື່ອໜ່ວຍງານຕ່າງໆ ຂອງລັດຖະບານ ຫຼື ກ່ຽວຂ້ອງກັບການນຳເຂົ້າ, ການສົ່ງອອກ ຫຼື ການຂົນສົ່ງຜ່ານແດນ;

ງ. ລະບຽບການຕ່າງໆສຳລັບການຈັດປະເພດ ຫຼື ການປະເມີນມູນຄ່າຂອງຜະລິດຕະພັນ ເພື່ອຈຸດປະ ສົງທາງດ້ານພາສີ;

ຈ. ກົດໝາຍ, ້ຂໍ້ກຳນົດ ແລະ ລະບຽບການທາງດ້ານບໍລິຫານທີ່ນຳໃຊ້ທົ່ວໄປ ຊຶ່ງກ່ຽວຂ້ອງກັບລະບຽບແຫຼ່ງກຳເນີດສິນຄ້າ;

ສ. ການຈຳກັດ ຫຼື ຫ້າມການນຳເຂົ້າ, ການສົ່ງອອກ ຫຼື ການຂົນສົ່ງຜ່ານແດນ;

ຊ. ບົດບັນຍັດກ່ຽວກັບການລົງໂທດຕໍ່ກັບການລະເມີດລະບຽບການນຳເຂົ້າ, ການສົ່ງອອກ, ຫຼື ການຂົນສົ່ງຜ່ານແດນ;

ຍ. ້ຂັ້ນຕອນການອຸທອນ;

ດ. ສັນຍາ ຫຼື ພາກສ່ວນຂອງສັນຍາ ກັບປະເທດ ຫຼື ບັນດາປະເທດທີ່ກ່ຽວຂ້ອງກັບການນຳເຂົ້າ, ການສົ່ງອອກ ຫຼື ການຂົນສົ່ງຜ່ານແດນ;

ຕ. ຂັ້ນຕອນຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງບໍລິຫານພາສີໂກຕາ

1.2 ບໍ່ມີປະໂຫຍກໃດໃນບົດບັນຍັດເຫຼົ່ານີ້ ຕ້ອງຖືວ່າ ເປັນການຮຽກຮ້ອງໃຫ້ມີການພິມເຜີຍແຜ່ ຫຼື ການສະໜອງຂໍ້ມູນ ນອກເໜືອຈາກເປັນພາສາຂອງສະມາຊິກເອງ ຍົກເວັ້ນ ດັ່ງທີ່ໄດ້ ກ່າວໄວ້ໃນວັກທີ 2.2

## 2 ການສະໜອງຂໍ້ມູນຜ່ານທາງອິນເຕີເນັດ

2.1 ທຸກໆສະມາຊິກ ຕ້ອງເຮັດໃຫ້ມີ, ແລະ ປັບປຸງຂໍ້ມູນຫຼ້າສຸດດັ່ງລຸ່ມນີ້ ຜ່ານທາງອິນເຕີເນັດ ໃນຂອບເຂດທີ່ເປັນໄປໄດ້ ແລະ ຕາມຄວາມເໝາະສົມ ຄື:

ກ. ລາຍລະອຽດທີ 1 ຂອງຂັ້ນຕອນການນຳເຂົ້າ, ການສົ່ງອອກ , ແລະ ການຂົນສົ່ງຜ່ານແດນ, ລວມທັງຂັ້ນຕອນການອຸທອນ ທີ່ແຈ້ງບອກໃຫ້ລັດຖະບານ, ຜູ້ຄ້າ ແລະ ຜູ້ທີ່ສົນໃຈອື່ນໆ ກ່ຽວກັບຂັ້ນຕອນການປະຕິບັດຕົວຈິງທີ່ຈຳເປັນຕ້ອງການສຳລັບການນຳເຂົ້າ ແລະ ສົ່ງອອກ, ແລະ ເພື່ອການຂົນສົ່ງຜ່ານແດນ;

ຂ. ບັນດາແບບຟອມ ແລະ ເອກະສານ ທີ່ຈຳເປັນຕ້ອງການສຳລັບການນຳເຂົ້າມາໃນ, ການສົ່ງອອກຈາກ , ຫຼື ການຂົນສົ່ງຜ່ານແດນອານາເຂດຂອງສະມາຊິກນັ້ນ;

ຄ. ຂໍ້ມູນຕິດຕໍ່ກ່ຽວກັບຈຸດສອບຖາມ

2.2 ເມື່ອໃດກໍຕາມທີ່ສາມາດຈັດຕັ້ງປະຕິບັດໄດ້ , ລາຍລະອຽດທີ່ໄດ້ກ່າວມາຂ້າງເທິງໃນຫຍໍ້ໜ້າຍ່ອຍຂອງວັກທີ 2.1. ກ ຕ້ອງໄດ້ສ້າງໃຫ້ມີໄວ້ເປັນພາສາໃດໜຶ່ງທີ່ເປັນ ພາສາທາງການຂອງອົງການການຄ້າໂລກ;

2.3 ບັນດາສະມາຊິກ ໄດ້ຮັບການຊຸກຍູ້ໃຫ້ສະໜອງຂໍ້ມູນຂ່າວສານທາງການຄ້າໂດຍ ຜ່ານທາງ ອິນເຕີເນັດ, ລວມທັງ ນິຕິກຳທີ່ກ່ຽວຂ້ອງກັບການຄ້າ ແລະ ລາຍການອື່ນໆ ທີ່ອ້າງເຖິງ ໃນວັກທີ 1.1.

### 3 ຈຸດສອບຖາມ

3.1 ພາຍໃຕ້ຊັບພະຍາກອນທີ່ມີຢູ່ຂອງຕົນ, ທຸກສະມາຊິກ ຕ້ອງສ້າງຕັ້ງ ຫຼື ຮັກສາໄວ້ ໜຶ່ງຈຸດສອບຖາມ ຫຼື ຫຼາຍກວ່ານັ້ນ ເພື່ອ ຕອບຄຳຖາມທີ່ສົມເຫດສົມຜົນຂອງລັດຖະບານ, ຜູ້ຄ້າ ແລະ ຜູ້ທີ່ສົນໃຈ ຕໍ່ກັບ ບັນຫາທີ່ລະບຸໄວ້ໃນວັກທີ 1.1, ພ້ອມທັງ, ສະໜອງບັນດາແບບຟອມ ແລະ ເອກະສານທີ່ຕ້ອງການ ຊຶ່ງອ້າງອີງເຖິງໃນວັກທີ 1.1. ກ.

3.2 ສະມາຊິກຂອງສະຫະພາບພາສີດຽວ ຫຼື ກ່ຽວຂ້ອງກັບການເຊື່ອມໂຍງພາກພື້ນ ອາດສ້າງຕັ້ງ ຫຼື ຮັກສາໄວ້ ບັນດາຈຸດສອບຖາມທົ່ວໄປ ໃນລະດັບພາກພື້ນ ເພື່ອໃຫ້ ສອດຄ່ອງກັບຂໍ້ກຳນົດທີ່ລະບຸໄວ້ໃນວັກທີ 3.1 ສຳລັບ ຂັ້ນຕອນທົ່ວໄປ.

3.3 ສະມາຊິກ ແມ່ນຖືກຊຸກຍູ້ບໍ່ໃຫ້ຮຽກຮ້ອງໃຫ້ມີການຈ່າຍຄ່າທຳນຽມສຳລັບການຕອບ ຄຳຖາມ ແລະ ການສະໜອງແບບຟອມ ແລະ ເອກະສານທີ່ຕ້ອງການ. ຖ້າຫາກມີ, ສະມາຊິກ ຕ້ອງຈຳກັດຈຳນວນເງິນຄ່າທຳນຽມ ແລະ ຄ່າບໍລິການຂອງຕົນ ໃຫ້ເປັນຕົ້ນທຶນ ພໍປະມານຂອງການບໍລິການທີ່ສະໜອງໃຫ້.

3.4 ບັນດາຈຸດສອບຖາມ ຕ້ອງຕອບຄຳຖາມ ແລະ ສະໜອງບັນດາແບບຟອມ ແລະ ເອກະສານ ພາຍໃນໄລຍະເວລາທີ່ສົມເຫດສົມຜົນ ຕາມທີ່ໄດ້ກຳນົດໂດຍແຕ່ລະສະມາຊິກ , ຊຶ່ງອາດຈະແຕກຕ່າງກັນໄປຂຶ້ນກັບລັກສະນະ ຫຼື ຄວາມຊັບຊ້ອນຂອງການຮ້ອງຂໍນັ້ນ.

### 4 ການແຈ້ງການ

4.1 ທຸກປະເທດສະມາຊິກ ຕ້ອງແຈ້ງການໃຫ້ຄະນະກຳມະການຂອງ:

ກ. ບ່ອນທີ່ເປັນທາງການ ຊຶ່ງເປັນບ່ອນທີ່ລາຍການຕ່າງໆ ໃນວັກຍ່ອຍ 1.1 (ກ) ເຖິງ (ຕ) ໄດ້ລົງເຜີຍແຜ່; ແລະ

ຂ. URLs ຂອງເວັບໄຊ ທີ່ອ້າງອີງເຖິງໃນວັກທີ 2.1, ພ້ອມທັງ ຂໍ້ມູນການຕິດຕໍ່ຂອງຈຸດສອບຖາມ ທີ່ໄດ້ອ້າງອີງເຖິງໃນ ວັກທີ 3.1.

## ມາດຕາ 2: ໂອກາດໃນການປະກອບຄຳເຫັນ, ຂໍ້ມູນກ່ອນມີຜົນບັງຄັບໃຊ້ ແລະ ການປຶກສາຫາລື

### 1 ໂອກາດໃນການປະກອບຄຳເຫັນ ແລະ ຂໍ້ມູນກ່ອນມີຜົນບັງຄັບໃຊ້

1.1 ເທົ່າທີ່ສາມາດປະຕິບັດໄດ້ ແລະ ໃນລັກສະນະທີ່ສອດຄ່ອງກັບກົດໝາຍ ແລະ ລະບົບນິຕິກຳ ພາຍໃນປະເທດຂອງຕົນ, ທຸກສະມາຊິກ ຕ້ອງໃຫ້ໂອກາດຕ່າງໆ ແລະ ໄລຍະເວລາທີ່ ເໝາະສົມ ແກ່ ຜູ້ຄ້າ ແລະ ຜູ້ທີ່ສົນໃຈ ເພື່ອປະກອບຄຳເຫັນເຂົ້າໃນ ການນຳສະເໜີ ຫຼື ການປັບປຸງ ກົດໝາຍ ແລະ ຂໍ້ກຳນົດທີ່ນຳໃຊ້ທົ່ວໄປ ຊຶ່ງກ່ຽວຂ້ອງກັບການເຄື່ອນຍ້າຍ, ການປ່ອຍ ແລະ ການສະສາງ ສິນຄ້າ , ລວມທັງ ສິນຄ້າຜ່ານແດນ.

1.2 ເທົ່າທີ່ສາມາດປະຕິບັດໄດ້ ແລະ ໃນລັກສະນະທີ່ສອດຄ່ອງກັບກົດໝາຍ ແລະ ລະບົບນິຕິກຳ ພາຍໃນປະເທດຂອງຕົນ, ທຸກສະມາຊິກ ຕ້ອງຮັບປະກັນວ່າ ກົດໝາຍ ແລະ ຂໍ້ກຳນົດໃໝ່ ຫຼື ສະບັບປັບປຸງທີ່ນຳໃຊ້ທົ່ວໄປ ຊຶ່ງກ່ຽວຂ້ອງກັບການເຄື່ອນຍ້າຍ, ການປ່ອຍ ແລະ ການສະສາງສິນຄ້າ, ລວມທັງ ສິນຄ້າຜ່ານແດນ ຕ້ອງຖືກຈັດພິມ, ຫຼື ບໍ່ດັ່ງນັ້ນ, ເຮັດໃຫ້ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບສິ່ງເຫຼົ່ານັ້ນ ຕ້ອງໄດ້ມີໄວ້ໃຫ້ສາທາລະນະ ໃນເວລາ ເບື້ອງຕົ້ນເທົ່າທີ່ຈະເປັນໄປໄດ້ ກ່ອນທີ່ຈະມີຜົນບັງຄັບໃຊ້ , ເພື່ອເຮັດໃຫ້ຜູ້ຄ້າ ແລະ ຜູ້ທີ່ສົນໃຈອື່ນໆ ໃຫ້ມີຄວາມຄຸ້ນເຄີຍກັບກົດໝາຍ ແລະ ຂໍ້ກຳນົດເຫຼົ່ານັ້ນ.

1.3 ການປ່ຽນແປງອັດຕາ ພາສີ ຫຼື ອັດຕາພາສີທີ່ເກັບ, ພ້ອມທັງ ມາດຕະການທີ່ມີຜົນໃນ ການບັນເທົາພາລະພາສີ ຫຼື ມີປະສິດທິພາບ ອາດຈະຖືກຍົກເວັ້ນ ການ ພິມເຜີຍແຜ່ກ່ອນ ມີຜົນບັງຄັບໃຊ້ , ບັນດາມາດຕະການທີ່ນຳໃຊ້ໃນສະຖານະການສຸກເສີນ, ຫຼື ການ ປ່ຽນແປງ ເລັກໜ້ອຍຂອງກົດໝາຍ ແລະ ລະບົບນິຕິກຳພາຍໃນປະເທດ ແມ່ນຍົກເວັ້ນຈາກພັນທະໃນ ວັກທີ 1.1 ແລະ 1.2 ຂ້າງເທິງ.

## 2 ການປຶກສາຫາລື

ທຸກສະມາຊິກ ຕ້ອງສະໜອງຂໍ້ມູນຕາມຄວາມເໝາະສົມ ສຳລັບການປຶກສາຫາລືຢ່າງເປັນປົກກະຕິ ລະຫ່ວາງບັນດາໜ່ວຍງານທີ່ເຮັດວຽກທີ່ດ່ານຊາຍແດນ ກັບ ບັນດາຜູ້ຄ້າ ຫຼື ຜູ້ມີສ່ວນກ່ຽວຂ້ອງອື່ນໆ ພາຍໃນອານາເຂດຂອງຕົນ.

## ມາດຕາ 3: ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ

1. ທຸກສະມາຊິກ ຕ້ອງອອກອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ ໃນລັກສະນະ ທີ່ສົມເຫດສົມຜົນ, ພາຍໃນກຳນົດເວລາ ໃຫ້ແກ່ຜູ້ສະເໜີຮ້ອງຂໍ ທີ່ໄດ້ສົ່ງເອກະສານຄຳຮ້ອງເປັນລາຍລັກອັກສອນ ຊຶ່ງປະກອບດ້ວຍຂໍ້ມູນທີ່ຈຳເປັນຕ້ອງການທັງໝົດ. ຖ້າວ່າ ສະມາຊິກ ປະຕິເສດທີ່ຈະອອກອະນຸມັດ ລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ, ສະມາຊິກ ຕ້ອງແຈ້ງທັນທີ ໃຫ້ກັບຜູ້ສະເໜີຮ້ອງຂໍເປັນລາຍລັກອັກສອນ, ໂດຍລະບຸ ຂໍ້ມູນຄວາມຈິງທີ່ກ່ຽວຂ້ອງ ແລະ ພື້ນຖານຂອງການຕັດສິນໃຈດັ່ງກ່າວ.
2. ສະມາຊິກອາດປະຕິເສດໃນການອອກອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີຕໍ່ກັບ ຜູ້ສະເໜີຮ້ອງຂໍ ໃນກໍລະນີທີ່ຄຳຖາມຍົກຂຶ້ນໃນໃບສະເໜີຄື:

   ກ. ແມ່ນພວມໂຈະຄ້າງໄວ້ແລ້ວໃນກໍລະນີຂອງຜູ້ສະເໜີຮ້ອງຂໍ ກ່ອນ ໜ່ວຍງານຂອງລັດຖະບານໃດໜຶ່ງ , ຄະນະໄຕ່ສວນການອຸທອນ ຫຼື ສານອຸທອນ; ຫຼື

   ຂ. ໄດ້ມີການຕັດສິນແລ້ວ ໂດຍ ຄະນະໄຕ່ສວນການອຸທອນ ຫຼື ສານອຸທອນ.
3. ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ ຕ້ອງມີຜົນບັງຄັບໃຊ້ພາຍໃນໄລຍະ ເວລາທີ່ເໝາະສົມ ຫຼັງຈາກການອອກອະນຸມັດນັ້ນ; ເວັ້ນເສຍແຕ່ ກົດໝາຍ , ຄວາມຈິງ ຫຼື ສະຖານະການ ໄດ້ເຮັດໃຫ້ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີເຄົ້າເດີມ ນັ້ນ ໄດ້ປ່ຽນແປງໄປ.
4. ໃນກໍລະນີ ທີ່ ສະ ມາຊິກ ລົບລ້າງ, ດັດສົມ ຫຼື ຍົກເລີກ ການອະນຸມັດລ່ວງໜ້າ ກ່ຽວກັບ ຂັ້ນຕອນການແຈ້ງພາສີ, ຕ້ອງແຈ້ງບອກໃຫ້ກັບຜູ້ສະເໜີຮ້ອງຂໍ ເປັນລາຍລັກອັກສອນ ໂດຍ ລະບຸຄວາມຈິງທີ່ກ່ຽວຂ້ອງ ແລະ ພື້ນຖານຂອງການຕັດສິນໃຈັດ່ງກ່າວ. ໃນກໍລະນີ ທີ່ ສະ ມາຊິກ ລົບລ້າງ, ດັດສົມ ຫຼື ຍົກເລີກ ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນ ການແຈ້ງພາສີທີ່ມີຜົນກະທົບຍ້ອນຫຼັງ , ສະມາຊິກ

ອາດຈະດຳເນີນການດັ່ງກ່າວ ພຽງແຕ່ໃນກໍລະນີ ທີ່ການອະນຸມັດນັ້ນ ແມ່ນອີງໃສ່ຂໍ້ມູນທີ່ບໍ່ຄົບຖ້ວນ , ບໍ່ຖືກຕ້ອງ, ຜິດພາດ ຫຼື ເຮັດໃຫ້ເຂົ້າໃຈຜິດ.

5. ການອະນຸມັດລ່ວງໜ້າກ່ຽວກັບການແຈ້ງພາສີ ຊຶ່ງອອກໃຫ້ໂດຍ ສະມາຊິກໜຶ່ງ ຕ້ອງ ເປັນການຜູກມັດທາງສັນຍາຂອງສະມາຊິກນັ້ນ ກ່ຽວຂ້ອງກັບຜູ້ສະເໜີທີ່ຮ້ອງຂໍການອະນຸມັດ ລ່ວງໜ້າດັ່ງກ່າວ. ສະມາຊິກອາດຈະ ສະ ໜອງວ່າ ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນ ການແຈ້ງພາສີນັ້ນເປັນການຜູກມັດທາງສັນຍາຂອງຜູ້ສະເໜີຮ້ອງຂໍ.

6. ທຸກສະມາຊິກ ຕ້ອງພິມເຜີຍແຜ່, ຢ່າງໜ້ອຍສຸດຄື:

ກ. ຂໍ້ກຳນົດ ຫຼື ຄວາມຮຽກຮ້ອງຕ້ອງການຂອງຜູ້ສະເໜີຮ້ອງຂໍ ສຳລັບການຂໍອະນຸມັດ ລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ, ລວມທັງ ຂໍ້ມູນທີ່ຈະສະໜອງໃຫ້ ແລະ ຮ່າງຮູບແບບຂອງເອກະສານ;

ຂ. ໄລຍະເວລາທີ່ໃຊ້ໃນການຈະອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ; ແລະ

ຄ. ໄລຍະເວລາທີ່ມີຜົນບັງຄັບໃຊ້ຂອງການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ.

7. ບົນພື້ນຖານການຮ້ອງຂໍຂຽນເປັນລາຍລັກອັກສອນ, ທຸກສະມາຊິກ ຕ້ອງໃຫ້ການທົບທວນ ຄືນ ກ່ຽວກັບ ການອະນຸມັດລ່ວງໜ້າຂັ້ນຕອນການແຈ້ງພາສີ ຫຼື ການຕັດສິນໃຈໃນການ ລົບລ້າງ, ດັດສົມ ຫຼື ຍົກເລີກ ການອະນຸມັດລ່ວງໜ້າກ່ຽວກັບການແຈ້ງພາສີ.[1]

8. ທຸກສະມາຊິກ ຕ້ອງພະຍາຍາມ ເຮັດໃຫ້ຂໍ້ມູນມີໄວ້ໃຫ້ສາທາລະນະ ກ່ຽວກັບ ການອະນຸມັດລ່ວງໜ້າຂັ້ນຕອນການແຈ້ງພາສີ ຊຶ່ງ ສະມາຊິກ ຖືວ່າ ເປັນຜົນປະໂຫຍດຢ່າງຫຼວງຫຼາຍ ຕໍ່ກັບ ຜູ້ທີ່ສົນໃຈອື່ນໆ, ໂດຍໃຫ້ຄວາມສຳຄັນ ຕໍ່ກັບ ຄວາມຕ້ອງການທີ່ຈຳເປັນໃນການປົກປ້ອງຂໍ້ມູນທີ່ເປັນຄວາມລັບທາງການຄ້າ.

9. ນິຍາມ ແລະ ຂອບເຂດ

ກ. ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ ແມ່ນ ການຕັດສິນທີ່ຂຽນ ເປັນລາຍລັກອັກສອນ ຊຶ່ງ ສະໜອງໂດຍ ສະມາຊິກ ໃຫ້ແກ່ຜູ້ສະເໜີຮ້ອງຂໍ ກ່ອນການນຳເຂົ້າສິນຄ້າ ຊຶ່ງຢູ່ພາຍໃຕ້ຜູ້ສະເໜີຮ້ອງຂໍ ຊຶ່ງສ້າງຂຶ້ນກ່ອນການ ປະຕິບັດທີ່ ສະມາຊິກ ຕ້ອງສະໜອງໃຫ້ກັບສິນຄ້າໃນເວລາທີ່ນຳເຂົ້າ ກ່ຽວກັບ:

i. ການຈັດປະເພດພາສີຂອງສິນຄ້າ, ແລະ

ii. ແຫຼ່ງກຳເນີດສິນຄ້າ;[2]

ຂ. ນອກ ຈາກ ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ ທີ່ກຳນົດໄວ້ໃນ ວັກຍ່ອຍ 3.9 ກ. ແລ້ວ, ສະມາຊິກ ໄດ້ຮັບການຊຸກຍູ້ໃຫ້ ອອກອະນຸມັດລ່ວງໜ້າ ຂັ້ນຕອນການແຈ້ງພາສີ ກ່ຽວກັບ:

[1] ພາຍໃຕ້ວັກນີ້: ກ) ການກວດຄືນ ອາດຈະປະຕິບັດກ່ອນ ຫຼື ຫຼັງ ການອະນຸມັດ ໂດຍ ທາງການ, ຫ້ອງການ ຫຼື ອຳນາດການປົກຄອງ ທີ່ອອກການອະນຸມັດດັ່ງກ່າວ, ອຳນາດການປົກຄອງຂອງຝ່າຍບໍລິຫານທີ່ສູງກວ່າ ຫຼື ທີ່ເປັນໜ່ວຍງານເອກະລາດ, ຫຼື ອຳນາດການປົກຄອງ ຂອງຝ່າຍຕຸລາການ; ແລະ ຂ) ສະມາຊິກ ບໍ່ຖືກຮຽກຮ້ອງໃຫ້ສະໜອງແກ່ ຜູ້ສະເໜີຮ້ອງຂໍ ໂດຍອີງຕາມມາດຕາ 4.1.1 ຂອງສັນຍາ ສະບັບນີ້.

[2] ເປັນທີ່ເຂົ້າໃຈວ່າ ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງແຫຼ່ງກຳເນີດສິນຄ້າ ອາດຈະປະເມີນແຫຼ່ງກຳເນີດ ເພື່ອຈຸດປະສົງຕາມສັນຍາວ່າດ້ວຍແຫຼ່ງກຳເນີດສິນຄ້າ ຊຶ່ງ ການອະນຸມັດລ່ວງໜ້າດັ່ງກ່າວ ປະຕິບັດຕາມຂໍ້ກຳນົດຂອງສັນຍາສະບັບນີ້ ແລະ ສັນຍາວ່າດ້ວຍແຫຼ່ງກຳເນີດສິນຄ້າ. ເຊັ່ນດຽວກັນ , ການປະເມີນກ່ຽວກັບແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາວ່າດ້ວຍແຫຼ່ງກຳເນີດສິນຄ້າ ອາດຈະເປັນການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງແຫຼ່ງກຳເນີດສິນຄ້າ ເພື່ອຈຸດປະສົງຂອງສັນຍາສະບັບນີ້, ໃນກໍລະນີ ທີ່ ການອະນຸມັດນັ້ນ ສອດຄ່ອງຖືກຕ້ອງຕາມທັງສອງສັນຍາ. ສະມາຊິກ ບໍ່ໄດ້ຖືກຮຽກຮ້ອງໃຫ້ມີການສ້າງຕັ້ງການຈັດການແຍກອອກຈາກກັນພາຍໃຕ້ບົດບັນຍັດນີ້ ເພື່ອເພີ່ມຕື່ມເຂົ້າໃນການຈັດການທີ່ໄດ້ສ້າງແລ້ວພາຍໃຕ້ສັນຍາວ່າດ້ວຍແຫຼ່ງກຳເນີດສິນຄ້າ ທີ່ກ່ຽວຂ້ອງກັບການປະເມີນແຫຼ່ງກຳເນີດສິນຄ້າ ດ້ວຍເງື່ອນໄຂທີ່ວ່າ ຂໍ້ກຳນົດທີ່ຮຽກຮ້ອງໃນມາດຕານີ້ ແມ່ນປະຕິບັດໄດ້ສົມບູນ.

i. ວິທີການ ຫຼື ມາດຖານທີ່ເໝາະສົມ, ແລະ ການນຳໃຊ້ທີ່ກ່ຽວຂ້ອງນັ້ນ, ເພື່ອໃຊ້ ສຳລັບການກຳນົດມູນຄ່າແຈ້ງພາສີ ພາຍໃຕ້ຄວາມຈິງຕ່າງໆທີ່ກ່ຽວຂ້ອງສະເພາະ;

ii. ຂໍ້ກຳນົດທີ່ຕ້ອງການຂອງສະມາຊິກທີ່ນຳໃຊ້ໄດ້ ເພື່ອຜ່ອນຜັນ ຫຼື ການຍົກເວັ້ນ ການເກັບພາສີ;

iii. ການນຳໃຊ້ຂໍ້ກຳນົດຕ່າງໆຂອງສະມາຊິກ ສຳລັບການຈັດສັນໂກຕາ , ລວມທັງການຈັດສັນພາສີ-ໂກຕາ; ແລະ

iv. ບັນຫາເງື່ອນໄຂເພີ່ມຕື່ມອື່ນໆ ຊຶ່ງ ສະມາຊິກ ພິຈາລະນາເຫັນວ່າ ເໝາະສົມໃນການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ.

ຄ. ຜູ້ສະໝັກແມ່ນ ຜູ້ສົ່ງອອກ, ຜູ້ນຳເຂົ້າ ຫຼື ບຸກຄົນໃດໜຶ່ງທີ່ໄດ້ຮັບການຢັ້ງຢືນ ຫຼື ເປັນຜູ້ຕາງໜ້າຢ່າງເໝາະສົມນັ້ນ.

ງ. ສະມາຊິກ ອາດຈະຮຽກຮ້ອງໃຫ້ຜູ້ສະເໜີຮ້ອງຂໍ ມີຕົວແທນທີ່ຖືກຕ້ອງທາງດ້ານກົດໝາຍ ຫຼື ມີການຈົດທະບຽນຢູ່ໃນດິນແດນຂອງຕົນ. ໃນຂອບເຂດເທົ່າທີ່ຈະເປັນໄປໄດ້ , ການຮຽກຮ້ອງດັ່ງກ່າວ ຕ້ອງບໍ່ຈຳກັດ ປະເພດຂອງບຸກຄົນທີ່ມີສິດ ເພື່ອສະໝັກຮ້ອງຂໍ ການອະນຸມັດລ່ວງໜ້າກ່ຽວກັບຂັ້ນຕອນການແຈ້ງພາສີ, ພ້ອມທັງ ການພິຈາລະນາສະເພາະ ສຳລັບຄວາມຕ້ອງການສະເພາະຂອງບັນດາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ. ຂໍ້ກຳນົດເຫຼົ່ານີ້ ຕ້ອງຈະແຈ້ງ ແລະ ໂປ່ງໃສ ແລະ ບໍ່ປະກອບເປັນປັດໄຈຂອງການຈຳແນກທີ່ບໍ່ສົມເຫດສົມຜົນ ຫຼື ປະຕິບັດຕາມໃຈ.

## ມາດຕາ 4: ຂັ້ນຕອນຂອງການອຸທອນ ແລະ ການທົບທວນຄືນ

### 1 ສິດໃນການອຸທອນ ແລະ ການທົບທວນຄືນ

1.1. ພາຍໃນອານາເຂດຂອງຕົນ, ສະມາຊິກ ຕ້ອງສະໜອງໃຫ້ ບຸກຄົນໃດກໍຕາມ ຊຶ່ງເປັນຜູ້ເຈົ້າໜ້າທີ່ພາສີໄດ້ຕັດສິນທາງດ້ານບໍລິຫານ, ໄດ້ມີສິດ ເພື່ອ:

ກ. ການອຸທອນທາງດ້ານບໍລິຫານໄປຍັງ ຫຼື ການທົບທວນຄືນ ໂດຍອຳນາດການປົກຄອງຝ່າຍບໍລິຫານທີ່ສູງກວ່າ ຫຼື ເຈົ້າໜ້າທີ່ ຫຼື ຫ້ອງການທີ່ເປັນເອກະລາດ ຊຶ່ງອອກຂໍ້ຕົກລົງ; ແລະ/ຫຼື

ຂ. ການອຸທອນ ຫຼື ການທົບທວນຄືນ ການຕັດສິນພາຍໃຕ້ຂະບວນການສານ.

1.2. ນິຕິກຳຂອງສະມາຊິກ ອາດຮຽກຮ້ອງໃຫ້ມີການອຸທອນ ຫຼື ການທົບທວນຄືນພາຍໃຕ້ຝ່າຍບໍລິຫານກ່ອນ ການອຸທອນ ຫຼື ການທົບທວນຄືນພາຍໃຕ້ຝ່າຍຕຸລາການ (ຂະບວນການສານ)

1.3. ສະມາຊິກ ຕ້ອງຮັບປະກັນວ່າຂັ້ນຕອນການອຸທອນ ຫຼື ການທົບທວນຄືນ ແມ່ນ ຕ້ອງປະຕິບັດຕາມຫຼັກການບໍ່ຈຳແນກປະຕິບັດ.

1.4. ແຕ່ລະສະມາຊິກ ຕ້ອງຮັບປະກັນວ່າ , ໃນກໍລະນີທີ່ການຕັດສິນການອຸທອນ ຫຼື ການທົບທວນຄືນພາຍໃຕ້ວັກຍ່ອຍ 1.1 ກ. ບໍ່ໄດ້ຕັດສິນ ຕາມວັກຍ່ອຍ i. ພາຍໃນໄລຍະເວລາທີ່ກຳນົດດັ່ງທີ່ລະບຸສະເພາະໄວ້ ໃນກົດໝາຍ ຫຼື ລະບຽບການຕ່າງໆ ຫຼື ຕາມວັກຍ່ອຍ ii. ເພື່ອບໍ່ໃຫ້ມີການຊັກຊ້າໂດຍບໍ່ຈຳ

ເປັນ, ຜູ້ຂໍອຸທອນ ມີສິດໃນການອຸທອນ ຫຼື ການທົບທວນຄືນ ເພີ່ມຕື່ມອີກ ໂດຍອຳນາດການປົກຄອງຂອງຝ່າຍບໍລິຫານ ຫຼື ອຳນາດຕຸລາການ ຫຼື ອາໄສອຳນາດການປົກຄອງຂອງສານອື່ນ.[3]

1.5. ສະມາຊິກ ຕ້ອງຮັບປະກັນວ່າ ບຸກຄົນທີ່ໄດ້ກ່າວເຖິງໃນວັກ 1.1 ໄດ້ຮັບເຫດຜົນກ່ຽວກັບ ການຕັດສິນຂອງຝ່າຍບໍລິຫານ ເພື່ອເຮັດໃຫ້ບຸກຄົນດັ່ງກ່າວ ສາມາດນຳໃຊ້ ໃນຂັ້ນຕອນການອຸທອນ ຫຼື ການທົບທວນຄືນ ໃນກໍລະນີທີ່ຈຳເປັນ.

1.6. ສະມາຊິກ ແມ່ນໄດ້ຮັບການ ສະໜັບສະໜູນໃຫ້ສ້າງບົດບັນຍັດຂອງມາດຕານີ້ ຕໍ່ກັບການຕັດສິນໃຈຂອງຝ່າຍບໍລິຫານ ທີ່ອອກໃຫ້ໂດຍໜ່ວຍງານທີ່ດ່ານຊາຍແດນທີ່ກ່ຽວຂ້ອງ, ນອກເໜືອຈາກພາສີ.

## ມາດຕາ 5: ມາດຕະການອື່ນໆ ເພື່ອສົ່ງເສີມຄວາມຍຸຕິທຳ, ການບໍ່ຈຳແນກປະຕິບັດ ແລະ ຄວາມໂປ່ງໃສ

### 1 ແຈ້ງການສຳລັບການຄວບຄຸມ ຫຼື ການກວດກາທີ່ເພີ່ມຂຶ້ນ

ໃນກໍລະນີ ສະມາຊິກ ນຳໃຊ້ ຫຼື ຮັກສາລະບົບຂອງການອອກແຈ້ງການ ຫຼື ຂໍ້ແນະນຳ ສຳລັບ ອຳນາດການປົກຄອງທີ່ກ່ຽວຂ້ອງຂອງຕົນ ໃນການເພີ່ມລະດັບການຄວບຄຸມ ຫຼື ການກວດກາ ຢູ່ຕາມດ່ານຊາຍແດນ ກ່ຽວກັບອາຫານ, ເຄື່ອງດື່ມ ຫຼື ອາຫານສັດ ທີ່ຢູ່ພາຍໃຕ້ແຈ້ງການ ຫຼື ຂໍ້ແນະນຳ ເພື່ອປົກປ້ອງຊີວິດ ຫຼື ສຸຂະພາບຂອງຄົນ, ສັດ, ຫຼື ພືດ ພາຍໃນອານາເຂດຂອງຕົນ, ບັນດາລະບຽບວິໄນຕໍ່ໄປນີ້ ຕ້ອງນຳໃຊ້ ໃນກໍລະນີ ທີ່ມີການອອກ, ການສິ້ນສຸດ ຫຼື ການໂຈະແຈ້ງການ ຄື:

ກ. ສະມາຊິກອາດອອກແຈ້ງການ ຫຼື ຂໍ້ແນະນຳໂດຍອີງໃສ່ຄວາມສ່ຽງຕາມຄວາມເໝາະສົມ.

ຂ. ສະມາຊິກ ອາດ ອອກແຈ້ງການ ຫຼື ຂໍ້ແນະນຳ ເພື່ອນຳໃຊ້ຮູບແບບດຽວກັນສະເພາະຈຸດ ນຳເຂົ້າທີ່ແຈ້ງການ ຫຼື ຂໍ້ແນະນຳກ່ຽວກັບເງື່ອນໄຂທາງດ້ານສຸຂານາໄມ ແລະ ສຸຂານາໄມພືດ ທີ່ນຳໃຊ້ເທົ່ານັ້ນ.

ຄ. ສະມາຊິກ ຕ້ອງຢຸດຕິ ຫຼື ໂຈະ ແຈ້ງການ ຫຼື ຂໍ້ແນະນຳທັນທີ ໃນກໍລະນີ ສະພາບການທີ່ເກີດຂຶ້ນດັ່ງກ່າວສິ້ນສຸດ, ຫຼື ຖ້າຫາກວ່າສະຖານະການດັ່ງກ່າວທີ່ປ່ຽນແປງນັ້ນ ສາມາດໄດ້ຮັບການແກ້ໄຂ ໃນທາງທີ່ເປັນການຈຳກັດທາງການຄ້າໜ້ອຍລົງ.

ງ. ໃນເວລາທີ່ ສະມາຊິກຕັດສິນໃຈທີ່ຈະສິ້ນສຸດ ຫຼື ໂຈະການແຈ້ງການ ຫຼື ຂໍ້ແນະນຳ, ສະມາຊິກ ຕ້ອງຕ້ອງເຜີຍແຜ່ ການແຈ້ງຍົກເລີກ ຫຼື ສິ້ນສຸດດັ່ງກ່າວທັນທີ ຕາມຄວາມເຫມາະສົມ ໃນລັກສະນະທີ່ບໍ່ຈຳແນກປະຕິບັດ ແລະ ສາມາດເຂົ້າເຖິງໄດ້ງ່າຍ, ຫຼື ແຈ້ງໃຫ້ ສະມາຊິກຜູ້ສົ່ງອອກ ຫຼື ຜູ້ນຳເຂົ້າ.

### 2 ການກັກກັນ

ສະມາຊິກ ຕ້ອງໄດ້ແຈ້ງຜູ້ຂົນສົ່ງ ຫຼື ຜູ້ນຳເຂົ້າທັນທີ ໃນກໍລະນີທີ່ມີການກັກກັນສິນຄ້າທີ່ໄດ້ມີແຈ້ງ ສຳລັບການນຳເຂົ້າ ເພື່ອການກວດກາ ໂດຍເຈົ້າໜ້າທີ່ພາສີ ຫຼື ອົງການຄຸ້ມຄອງອື່ນໆ.

[3] ບໍ່ມີວັກໃດ ໃນສັນຍານີ້ ຫ້າມສະມາຊິກຮັບຮູ້ການຂັ້ນຕອນການທາງຝ່າຍບໍລິຫານທີ່ຈັດຕັ້ງປະຕິບັດ ກ່ຽວກັບ ການອຸທອນ ຫຼື ການທົບທວນຄືນ ການຕັດສິນ ເພື່ອເອື້ອປະໂຫຍດໃຫ້ແກ່ຜູ້ຮ້ອງຟ້ອງ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

### 3 ັຂັ້ນຕອນຂອງການທົດສອບ

3.1. ອີງຕາມການຮ້ອງຂໍ, ສະມາຊິກໃດໜຶ່ງ ອາດໃຫ້ໂອກາດສຳລັບການທົດສອບຄັ້ງທີສອງ ໃນ ກໍລະນີທີ່ໄດ້ຜົນມາຈາກການທົດສອບຕົວຢ່າງຄັ້ງທຳອິດໃນເວລາສິນຄ້າມາຮອດດ່ານ ເພື່ອແຈ້ງນຳເຂົ້ານັ້ນ ສະແດງໃຫ້ເຫັນວ່າ ມີຜົນທີ່ກົງກັນຂ້າມ ຫຼື ແຕກຕ່າງກັນ.

3.2. ສະມາຊິກ ຕ້ອງເຜີຍແຜ່ ໃນລັກສະນະທີ່ບໍ່ຈຳແນກປະຕິບັດ ແລະ ສາມາດເຮັດໃຫ້ເຂົ້າເຖິງໄດ້ງ່າຍ, ກ່ຽວກັບຊື່ ແລະ ທີ່ຢູ່ຂອງຫ້ອງທົດລອງ ທີ່ໃຊ້ໃນການທົດສອບ ຫຼື ສະໜອງຂໍ້ມູນ ໃຫ້ຜູ້ນຳເຂົ້າ ໃນເມື່ອໄດ້ຮັບໂອກາດ ພາຍໃຕ້ວັກທີ 3.1.

3.3. ສະມາຊິກ ຕ້ອງພິຈາລະນາຜົນໄດ້ຮັບຂອງການທົດສອບຄັ້ງທີສອງ ໃນການປ່ອຍ ແລະ ການສະສາງສິນຄ້າ, ແລະ ຖ້າຫາກວ່າເໝາະສົມ, ອາດຈະຮັບເອົາຜົນທີ່ໄດ້ຮັບຂອງການທົດສອບນັ້ນ.

## ມາດຕາ 6: ລະບຽບວິໄນຕໍ່ກັບການເກັບຄ່າທຳນຽມ ແລະ ຄ່າບໍລິການ ສຳລັບ ຫຼື ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ

### 1 ລະບຽບວິໄນທົ່ວໄປຕໍ່ກັບການເກັບຄ່າທຳນຽມ ແລະ ຄ່າບໍລິການສຳລັບ ຫຼື ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກ

6.1. ບົດບັນຍັດຂອງວັກທີ 6.1 ຕ້ອງນຳໃຊ້ກັບ ທຸກຄ່າທຳນຽມ ແລະ ຄ່າບໍລິການ ທີ່ນອກເໜືອຈາກຄ່າ ພາສີນຳເຂົ້າ ແລະ ສົ່ງອອກ ແລະ ນອກເໜືອຈາກ ຄ່າອາກອນຕ່າງໆທີ່ໄດ້ກຳນົດໄວ້ໃນມາດຕາ III ຂອງສັນຍາແກັດ 1994 ທີ່ຈັດເກັບໂດຍສະມາຊິກ ສຳລັບ ຫຼື ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກສິນຄ້າ.

6.2. ຂໍ້ມູນກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ຕ້ອງຖືກຈັດພິມເຜີຍແຜ່ຕາມຂໍ້ກຳນົດຂອງມາດຕາ 1 ຂອງສັນຍານີ້. ຂໍ້ມູນນີ້ ຕ້ອງປະກອບມີຄ່າທຳນຽມ ແລະ ຄ່າບໍລິການຕ່າງໆທີ່ຈະຈັດເກັບ, ເຫດຜົນໃນການເກັບຄ່າທຳນຽມ ແລະ ຄ່າບໍລິການນັ້ນ, ໜ່ວຍງານຮັບຜິດຊອບ ແລະ ການຈ່າຍເງິນນັ້ນ ຕ້ອງຈ່າຍໃນເວລາໃດ ແລະ ໃນຮູບແບບໃດ.

6.3. ໄລຍະເວລາ ລະຫວ່າງການຈັດພິມເຜີຍແຜ່ຂອງຄ່າທຳນຽມທີ່ສ້າງຂຶ້ນໃໝ່ ຫຼື ການປັບປຸງ ກັບເວລາຂອງການບັງຄັບໃຊ້ ຕ້ອງມີຢ່າງພຽງພໍເໝາະສົມ; ຍົກເວັ້ນໃນກໍລະນີຮີບດ່ວນ. ຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວ ຈະບໍ່ຖືກຈັດຕັ້ງປະຕິບັດ ຈົນກວ່າວ່າ ຂໍ້ມູນດັ່ງກ່າວຈະຖືກຈັດພິມເຜີຍແຜ່ ເສຍກ່ອນ.

6.4. ແຕ່ລະສະມາຊິກຕ້ອງທົບທວນຄ່າທຳນຽມ ແລະ ຄ່າບໍລິການຂອງຕົນເປັນແຕ່ລະໄລຍະ ໂດຍມີຈຸດປະສົງເພື່ອຫຼຸດຜ່ອນຈຳນວນ ແລະ ຄວາມຫຼາກຫຼາຍລົງ, ໃນຈຸດທີ່ເຫັນວ່າສາມາດ ປະຕິບັດໄດ້.

### 2 ລະບຽບວິໄນສະເພາະຂອງການເກັບຄ່າທຳນຽມ ແລະ ຄ່າບໍລິການສຳລັບ ຫຼື ກ່ຽວຂ້ອງກັບ ການນຳເຂົ້າ ແລະ ສົ່ງອອກ

6.2.1 ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆສຳລັບຂັ້ນຕອນພາສີ:

i. ຕ້ອງຈຳກັດຢູ່ໃນ ຈຳນວນຄ່າໃຊ້ຈ່າຍໃນການໃຫ້ບໍລິການຕົວຈິງ ໂດຍຄ່າປະມານການ ສຳລັບ ຫຼື ກ່ຽວຂ້ອງກັບການດຳເນີນງານເພື່ອນຳເຂົ້າ ແລະ ສົ່ງອອກສິນຄ້ານັ້ນ; ແລະ

ii. ບໍ່ໄດ້ກຳນົດໃຫ້ຕ້ອງກ່ຽວຂ້ອງກັບການດຳເນີນງານໃນຂະບວນການສົ່ງອອກ ຫຼື ນຳເຂົ້າ ສິນຄ້າສະເພາະ ຊຶ່ງເກັບສຳລັບຄ່າໃຫ້ບໍລິການທີ່ກ່ຽວຂ້ອງກັບຂັ້ນຕອນພາສີຢ່າງໃກ້ຊິດ.

### 3 ລະບຽບວິໄນສໍາລັບການປັບໃໝ

6.3.1 ເພື່ອຈຸດປະສົງຂອງມາດຕາ 6.3, ຄໍາວ່າ "ປັບໃໝ" ຕ້ອງມີຄວາມໝາຍວ່າເປັນມາດຕະການ ປັບໃໝໂດຍຝ່າຍບໍລິຫານດ້ານພາສີ ຕໍ່ກັບການລະເມີດກົດໝາຍ, ຂໍ້ກໍານົດ, ຫຼື ຂັ້ນຕອນຕ່າງໆ ຂອງພາສີຂອງສະມາຊິກ.

6.3.2 ແຕ່ລະສະມາຊິກຕ້ອງຮັບປະກັນວ່າການປັບໃໝສໍາລັບການລະເມີດກົດໝາຍ, ຂໍ້ກໍານົດ, ຫຼື ຂັ້ນຕອນຕ່າງໆ ຂອງພາສີ ຕ້ອງນໍາໃຊ້ສະເພາະ ກັບ ບຸກຄົນທີ່ຮັບຜິດຊອບຕໍ່ກັບການລະເມີດພາຍໃຕ້ ກົດໝາຍຂອງຕົນເທົ່ານັ້ນ.

6.3.3 ການປັບໃໝຕ້ອງຂຶ້ນກັບຂໍ້ມູນຄວາມຈິງ ແລະ ສະຖານະການຈິງຕາມແຕ່ລະກໍລະນີ ແລະ ຕ້ອງປະກອບຕາມລະດັບ ແລະ ຄວາມຮຸນແຮງຂອງການລະເມີດນັ້ນ.

6.3.4 ແຕ່ລະສະມາຊິກຕ້ອງຮັບປະກັນວ່າຕົນເອງໄດ້ຮັກສາມາດຕະການຕ່າງໆເພື່ອຫຼີກລ່ຽງ:

6.3.5 ຄວາມຂັດແຍ່ງກັນທາງຜົນປະໂຫຍດໃນຂັ້ນຕອນການປະເມີນ ແລະ ການເກັບຄ່າ ປັບໃໝ ແລະ ພາສີ; ແລະ

6.3.6 ສ້າງແຮງຈູງໃຈໃນການປະເມີນ ຫຼື ເກັບຄ່າປັບໃໝທີ່ບໍ່ສອດຄ່ອງກັບວັກທີ 3.3.

6.3.7 ສະມາຊິກຕ້ອງຮັບປະກັນວ່າເມື່ອໃສ່ມາດຕະການປັບໃໝສໍາລັບການລະເມີດກົດໝາຍ, ຂໍ້ກໍານົດ, ຫຼື ຂັ້ນຕອນຕ່າງໆຂອງພາສີ, ຕ້ອງໄດ້ມີການອະທິບາຍເປັນລາຍລັກອັກສອນໃຫ້ແກ່ບຸກຄົນ ຜູ້ທີ່ຖືກປັບໃໝ ໂດຍອະທິບາຍກ່ຽວກັບການລະເມີດຕໍ່ກົດໝາຍ, ຂໍ້ກໍານົດ ຫຼື ຂັ້ນຕອນຕ່າງໆ ໃສ່ຢູ່ທາງລຸ່ມຂອງຈໍານວນ ຫຼື ຂອບເຂດການປັບໃໝສໍາລັບການລະເມີດທີ່ໄດ້ລະບຸໄວ້ນັ້ນ.

6.3.8 ໃນກໍລະນີບຸກຄົນສະໝັກໃຈທີ່ຈະເປີດເຜີຍຂໍ້ມູນໃຫ້ແກ່ເຈົ້າໜ້າທີ່ພາສີຂອງສະມາຊິກກ່ຽວກັບເຫດການການລະເມີດກົດໝາຍ, ຂໍ້ກໍານົດ, ຫຼື ຂັ້ນຕອນຕ່າງໆ ກ່ອນທີ່ເຈົ້າໜ້າທີ່ພາສີຈະພົບເຫັນ; ສະມາຊິກ ໄດ້ຮັບການຊຸກຍູ້ໃຫ້ ພິຈາລະນາຂໍ້ມູນນີ້ວ່າເປັນປັດໃຈທີ່ເປັນໄປໄດ້ທີ່ຈະໄດ້ຮັບການຜ່ອນຜັນ ໃນເວລາ ປັບໃໝຕໍ່ບຸກຄົນນັ້ນ, ຕາມກໍລະນີທີ່ເໝາະສົມ.

6.3.9 ບົດບັນຍັດໃນວັກນີ້ ຕ້ອງຖືກນໍາໃຊ້ໃນການກໍານົດການປັບໃໝຕ່າງໆ ໃນການຈໍລະຈອນສິນຄ້າ ຜ່ານແດນທີ່ໄດ້ກໍານົດໄວ້ໃນວັກທີ 3.1.

## ມາດຕາ 7: ການປ່ອຍ ແລະ ສະສາງສິນຄ້າ

### 1 ຂະບວນການກ່ອນສິນຄ້າມາເຖິງ

1. ທຸກສະມາຊິກ ຕ້ອງຮັບຮອງເອົາ ຫຼື ຮັກສາຂັ້ນຕອນຕ່າງໆທີ່ອະນຸຍາດໃຫ້ຜູ້ນໍາເຂົ້າຍື່ນເອກະສານ ນໍາເຂົ້າ ແລະ ຂໍ້ມູນຕ່າງໆທີ່ຈໍາເປັນ, ລວມເຖິງເອກະສານຢັ້ງຢືນ, ເພື່ອເລີ່ມຕົ້ນຂະບວນການ ອະນຸມັດກ່ອນການມາຮອດຂອງສິນຄ້າ ເພື່ອເລັ່ງລັດໃຫ້ໄດ້ປ່ອຍສິນຄ້າໃນເວລາທີ່ສິນຄ້າມາເຖິງ ໂດຍໄວ.
2. ສະມາຊິກຕ້ອງ, ໃນກໍລະນີເໝາະສົມ, ສະມາຊິກ ຕ້ອງສະໜອງໃຫ້ມີການຍື່ນເອກະສານທາງ ອີເລັກໂຫຼນິກ ເພື່ອຂະບວນການອະນຸມັດກ່ອນການມາເຖິງຂອງສິນຄ້າຕໍ່ເອກະສານດັ່ງກ່າວ.

### 2 ການຊໍາລະທາງອີເລັກໂຫຼນິກ

ເທົ່າທີ່ສາມາດປະຕິບັດໄດ້, ທຸກສະມາຊິກຕ້ອງ ຮັບຮອງ ຫຼື ຮັກສາຂັ້ນຕອນຕ່າງໆ ເພື່ອອະນຸຍາດໃຫ້ມີທາງເລືອກໃນການຊໍາລະທາງອີເລັກໂຫຼນິກ ສໍາລັບ ພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການ ທີ່ຈັດເກັບໂດຍພະນັກງານພາສີທີ່ເປັນຄ່າໃຊ້ຈ່າຍສໍາລັບການນໍາເຂົ້າ ແລະ ສົ່ງອອກ.

## 3 ການແຍກການປ່ອຍສິນຄ້າອອກຈາກ ການກຳນົດສຸດທ້າຍກ່ຽວກັບອັດຕາພາສີ, ອາກອນ, ແລະ ຄ່າທຳນຽມ ແລະ ຄ່າບໍລິການ

1. ແຕ່ລະສະມາຊິກ ຕ້ອງຮັບຮອງ ແລະ ຮັກສາຂັ້ນຕອນຕ່າງໆທີ່ອະນຸຍາດໃຫ້ມີການປ່ອຍສິນຄ້າ ກ່ອນ ການກຳນົດສຸດທ້າຍກ່ຽວກັບ ອັດຕາພາສີ, ອາກອນ, ແລະ ຄ່າທຳນຽມ ແລະ ຄ່າບໍລິການ, ຖ້າຫາກວ່າການກຳນົດດັ່ງກ່າວ ບໍ່ໄດ້ສຳເລັດກ່ອນໜ້າ ຫຼື ໃນເວລາທີ່ສິນຄ້າມາເຖິງ, ຫຼື ຕ້ອງເຮັດໃຫ້ໄວເທົ່າທີ່ຈະໄວໄດ້ ພາຍຫຼັງຈາກການມາເຖິງຂອງສິນຄ້າ ແລະ ດ້ວຍເງື່ອນໄຂທີ່ວ່າ ໄດ້ຜ່ານເງື່ອນໄຂຕ່າງໆຕາມຂໍ້ກຳນົດອື່ນໆໝົດແລ້ວ.
2. ເພື່ອໃຫ້ເປັນເງື່ອນໄຂໃນການປ່ອຍສິນຄ້ານັ້ນ, ສະມາຊິກ ອາດຈະຮຽກຮ້ອງສິ່ງຕ່າງໆດັ່ງຕໍ່ໄປນີ້:
   ກ. ການຊຳລະຄ່າພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ກຳນົດໄວ້ ກ່ອນການມາເຖິງຂອງສິນຄ້າ ຫຼື ໃນເວລາສິນຄ້າມາຮອດ ແລະ ຄ່າຄ້ຳປະກັນສຳລັບມູນຄ່າ ໃດໜຶ່ງທີ່ຍັງບໍ່ທັນໄດ້ຖືກກຳນົດມູນຄ່າທີ່ແນ່ນອນເທື່ອ, ເງິນມັດຈຳ ຫຼື ໃນຮູບແບບອື່ນໆ ທີ່ເໝາະສົມດັ່ງທີ່ໄດ້ລະບຸໄວ້ໃນກົດໝາຍ ແລະ ລະບຽບການ; ຫຼື
   ຂ. ເງິນຄ້ຳປະກັນເພື່ອຮັບປະກັນຄວາມແນ່ນອນ; ເງິນມັດຈຳ ຫຼື ຮູບແບບອື່ນໆທີ່ເໝາະສົມ ທີ່ໄດ້ລະບຸໄວ້ໃນກົດໝາຍ ແລະ ລະບຽບການຕ່າງໆ.
3. ເງິນຄ້ຳປະກັນດັ່ງກ່າວ ຕ້ອງບໍ່ສູງກວ່າມູນຄ່າທີ່ສະມາຊິກຮຽກຮ້ອງເພື່ອຮັບປະກັນຕໍ່ການຈ່າຍ ຄ່າພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການລວມກັນທັງໝົດສຳລັບສິນຄ້າພາຍໃຕ້ການ ຄ້ຳປະກັນນັ້ນ.
4. ໃນກໍລະນີທີ່ການກະທຳຜິດ ຊຶ່ງຮຽກຮ້ອງໃຫ້ມີການວາງເງິນປັບໃໝ ໃສ່ໂທດທາງການເງິນ ຫຼື ຄ່າປັບໃໝທີ່ໄດ້ຖືກກວດພົບ, ເງິນຄ້ຳປະກັນອາດຮຽກຮ້ອງຄ່າປັບໃໝຕໍ່ການ ລະເມີດທີ່ອາດຈະ ນຳໃຊ້ນັ້ນຕື່ມ.
5. ການຄ້ຳປະກັນທີ່ໄດ້ກຳນົດໄວ້ໃນວັກທີ 3.2 ແລະ 3.4 ຕ້ອງຖືກສົ່ງຄືນ ຫຼື ຍົກເລີກເມື່ອບໍ່ມີຄວາມຈຳເປັນອີກຕໍ່ໄປ.
6. ບໍ່ມີສ່ວນໃດໃນບົດບັນຍັດເຫຼົ່ານີ້ ຕ້ອງສົ່ງຜົນກະທົບຕໍ່ສິດຂອງສະມາຊິກໃນການກວດສອບ, ກັກກັນ, ຍຶດໄວ້ຊົ່ວຄາວ ຫຼື ຍຶດເປັນຂອງລັດ ຫຼື ຈັດການກັບສິນຄ້າໃນວິທີການໃດໆກໍຕາມທີ່ບໍ່ຂັດ ກັບສິດ ແລະ ພັນທະຂອງສະມາຊິກ ອຄລ.

## 4 ການປະເມີນຄວາມສ່ຽງ

1. ເທົ່າທີ່ຈະເປັນໄປໄດ້, ສະມາຊິກ ຕ້ອງ ຮັບຮອງເອົາ ຫຼື ຮັກສາລະບົບການປະເມີນຄວາມສ່ຽງ ສຳລັບການຄວບຄຸມຂອງພາສີ.
2. ສະມາຊິກ ຕ້ອງໄດ້ອອກແບບ ແລະ ນຳໃຊ້ການປະເມີນຄວາມສ່ຽງໃນລັກສະນະທີ່ເປັນການຫຼີກລ່ຽງການຈຳແນກຕາມອຳເພີໃຈ ຫຼື ບໍ່ສົມເຫດສົມຜົນ, ຫຼື ເປັນການຈຳກັດທີ່ເຊື່ອງຊ້ອນຕໍ່ການຄ້າສາກົນ.
3. ສະມາຊິກ ຕ້ອງເອົາໃຈໃສ່ແຕ່ການຄຸ້ມຄອງພາສີ ແລະ ເທົ່າທີ່ເປັນໄປໄດ້ໃນອີງກອນອື່ນທີ່ກ່ຽວຂ້ອງຊຶ່ງຄຸ້ມຄອງທີ່ດ່ານຊາຍແດນ, ຕໍ່ສິນຄ້າປະເພດທີ່ມີຄວາມສ່ຽງສູງ ແລະ ອຳນວຍຄວາມສະດວກໃຫ້ໄວໃນການປ່ອຍສິນຄ້າປະເພດທີ່ມີຄວາມສ່ຽງຕ່ຳ. ສະມາຊິກອາດເລືອກເອົາ, ແບບກວດສຸ່ມ, ສິນຄ້າເພື່ອການກວດສອບຕາມການຄຸ້ມຄອງຄວາມສ່ຽງຂອງຕົນ.
4. ສະມາຊິກ ຕ້ອງອີງການຄຸ້ມຄອງຄວາມສ່ຽງຂອງຕົນໃສ່ການປະເມີນຄວາມສ່ຽງໂດຍຜ່ານການຈັດລຽງມາດຖານທີ່ເໝາະສົມ. ການຈັດລຽງມາດຖານດັ່ງກ່າວອາດປະກອບມີ, *ຫຼື ໜຶ່ງໃນອົງປະກອບເຫຼົ່ານີ້,* ລະຫັດສາລະບານພາສີ, ປະເພດ ແລະ ຄຳອະທິບາຍສິນຄ້າ, ປະເທດແຫຼ່ງກຳເນີດສິນຄ້າ, ປະເທດທີ່ສິນຄ້າຖືກຂົນສົ່ງມາຈາກ, ມູນຄ່າຂອງສິນຄ້າ, ປະຫວັດການປະຕິບັດຄວາມສອດຄ່ອງຕາມລະບຽບການຂອງຜູ້ນຳເຂົ້າ, ແລະ ປະເພດຂອງການຂົນ ສົ່ງ.

### 5 ການກວດສອບຄືນພາຍຫຼັງການປ່ອຍສິນຄ້າ

1. ໂດຍທົ່ວໄປ ເພື່ອໃຫ້ການປ່ອຍສິນຄ້າໄດ້ຢ່າງວ່ອງໄວ, ແຕ່ລະສະມາຊິກ ຕ້ອງຮັບຮອງ ຫຼື ຮັກສາການກວດສອບຄືນພາຍຫຼັງການປ່ອຍສິນຄ້າ ເພື່ອຮັບປະກັນການປະຕິບັດຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງພາສີ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.
2. ສະມາຊິກຕ້ອງເລືອກການກວດສອບຄືນພາຍຫຼັງການປ່ອຍສິນຄ້າບໍ່ວ່າຈະເປັນບຸກຄົນ ຫຼື ຖ້ຽວສິນຄ້າ ໃນລັກສະນະອີງໃສ່ຄວາມສ່ຽງ, ຊຶ່ງ ອາດຈະລວມເອົາການຈັດປະເພດມາດຖານທີ່ເໝາະສົມ. ໃນກໍລະນີທີ່ມີບຸກຄົນກ່ຽວຂ້ອງກັບຂະບວນການກວດສອບ ແລະ ຜົນທີ່ໄດ້ຮັບລວມກັນເປັນທີ່ຮຽບຮ້ອຍແລ້ວ; ສະມາຊິກຕ້ອງ, ໂດຍບໍ່ແກ່ຍາວເວລາ, ແຈ້ງໃຫ້ບຸກຄົນນັ້ນຜູ້ທີ່ມີຊື່ຢູ່ໃນບັນຊີການກວດສອບໂດຍປະກອບມີ, ສິດ ແລະພັນທະ ແລະ ເຫດຜົນຂອງຂໍ້ສະຫຼຸບ (ຜົນທີ່ໄດ້ຮັບຈາກການກວດສອບນັ້ນ)ໃຫ້ແກ່ຜູ້ກ່ຽວ.
3. ສະມາຊິກຮັບຊາບວ່າຂໍ້ມູນທີ່ໄດ້ຈາກການກວດສອບພາຍຫຼັງການປ່ອຍສິນຄ້າອາດຖືກນໍາໃຊ້ເພື່ອຂະບວນການການດໍາເນີນຄະດີຂອງຝ່າຍບໍລິຫານ ຫຼື ຂອງຝ່າຍຕຸລາການໃນຂັ້ນຕອນຕໍ່ໄປ.
4. ໃນກໍລະນີໃດກໍຕາມທີ່ສາມາດປະຕິບັດໄດ້, ສະມາຊິກຕ້ອງນໍາໃຊ້ບົດສະຫຼຸບ (ຜົນ) ຂອງການກວດສອບຄືນພາຍຫຼັງການປ່ອຍສິນຄ້າໃນການນໍາໃຊ້ການຄຸ້ມຄອງບໍລິຫານຄວາມສ່ຽງ.

### 6 ການສ້າງຕັ້ງ ແລະ ພິມເຜີຍແຜ່ກ່ຽວກັບໄລຍະເວລາສະເລ່ຍໃນການປ່ອຍສິນຄ້າ

1. ຊຸກຍູ້ໃຫ້ສະມາຊິກຄິດໄລ່ ແລະ ພິມເຜີຍແຜ່ໄລຍະເວລາສະເລ່ຍໃນການປ່ອຍສິນຄ້າຂອງຕົນເປັນແຕ່ລະໄລຍະ ແລະ ເປັນລັກສະນະສອດຄ່ອງ, ຊຶ່ງ ນໍາໃຊ້ເຄື່ອງມືຕ່າງໆເຊັ່ນ: *ຫຼື ໜຶ່ງໃນສິ່ງຕໍ່ໄປນີ້,* ບົດສຶກສາກ່ຽວກັບໄລຍະເວລາໃນການປ່ອຍສິນຄ້າຂອງອົງການພາສີໂລກ.[4]
2. ຊຸກຍູ້ໃຫ້ສະມາຊິກແລກປ່ຽນຂໍ້ມູນກັບຄະນະກໍາມະການກ່ຽວກັບປະສົບການໃນການຄິດໄລ່ໄລຍະເວລາສະເລ່ຍໃນການປ່ອຍສິນຄ້າ, ປະກອບດ້ວຍ, ວິທີການທີ່ນໍາໃຊ້, ສິ່ງທ້າທາຍທີ່ຄົ້ນພົບ, ແລະ ຜົນສະຫຼຸບຕ່າງໆທີ່ສົ່ງຜົນກະທົບຕໍ່ປະສິດທິພາບ.

### 7 ມາດຕະການການອໍານວຍຄວາມສະດວກດ້ານການຄ້າສໍາລັບຜູ້ໄດ້ຮັບອະນຸຍາດ

1. ສະມາຊິກ ຕ້ອງສະໜອງມາດຕະການເພີ່ມເຕີມກ່ຽວກັບການອໍານວຍຄວາມສະດວກດ້ານການຄ້າທີ່ຕິດພັນກັບລະບຽບ ແລະ ຂັ້ນຕອນຂອງການນໍາເຂົ້າ, ສົ່ງອອກ ຫຼື ຜ່ານແດນ, ອີງຕາມວັກທີ 7.3, ໃຫ້ແກ່ ຜູ້ດໍາເນີນງານ (ທຸລະກິດ) ທີ່ປະຕິບັດໄດ້ຕາມມາດຖານສະເພາະທີ່ກໍານົດໄວ້, ຫຼັງຈາກນີ້ຈະເອີ້ນວ່າ ຜູ້ທີ່ໄດ້ຮັບອະນຸຍາດ. ອີກວິທີໜຶ່ງ, ສະມາຊິກອາດສະເໜີມາດຕະການອໍານວຍຄວາມສະດວກດັ່ງກ່າວໂດຍຜ່ານຂັ້ນຕອນຕ່າງໆຂອງພາສີໂດຍທົ່ວໄປທີ່ມີຢູ່ ສໍາລັບ ຜູ້ປະຕິບັດງານ (ທຸລະກິດ) ທັງໝົດ ແລະ ບໍ່ຮຽກຮ້ອງໃຫ້ສ້າງລະບອບລະບຽບແຍກຕ່າງຫາກອີກ.
2. ປະເພດມາດຖານສະເພາະ ຕ້ອງກ່ຽວຂ້ອງກັບຄວາມສອດຄ່ອງ, ຫຼື ຄວາມສ່ຽງທີ່ຈະປະຕິບັດຕາມ, ພ້ອມກັບ ຂໍ້ກໍານົດທີ່ລະບຸໄວ້ໃນກົດໝາຍ, ຂໍ້ຕົກລົງ ຫຼື ຂັ້ນຕອນຕ່າງໆຂອງສະມາຊິກ. ປະເພດມາດຖານສະເພາະທີ່ຕ້ອງພິມເຜີຍແຜ່, ອາດປະກອບດ້ວຍ:
   ກ. ການບັນທຶກທີ່ເໝາະສົມ ກ່ຽວກັບ ປະຫວັດການປະຕິບັດສອດຄ່ອງກັບກົດໝາຍ ແລະ ຂໍ້ຕົກລົງຕ່າງໆຂອງພາສີ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
   ຂ. ລະບົບການເກັບກໍາການບັນທຶກປະຫວັດ ເພື່ອນໍາໃຊ້ເຂົ້າໃນລະບົບການຄຸ້ມຄອງພາຍໃນທີ່ຈໍາເປັນ;
   ຄ. ການລົ້ມລະລາຍທາງດ້ານການເງິນ, ລວມທັງ ການສະໜອງໃຫ້ທາງດ້ານຄວາມປອດໄພ/ການຄໍ້າປະກັນທີ່ພຽງພໍ; ແລະ

---

[4] ສະມາຊິກອາດກໍານົດເອົາຂອບເຂດ ແລະ ວິທີໃນການຄິດໄລ່ໄລຍະເວລາສະເລ່ຍໃນການປ່ອຍສິນຄ້າພົນພື້ນຖານຄວາມຈໍາເປັນ ແລະ ຂີດຄວາມສາມາດຂອງຕົນ.

ງ. ຄວາມປອດໄພໃນແຕ່ລະຂັ້ນຕອນຂອງຕ່ອງໂສການສະໜອງສິນຄ້າ

ມາດຖານສະເພາະເພື່ອໃຫ້ໄດ້ຮັບຄຸນສົມບັດຂອງການເປັນຜູ້ປະຕິບັດງານ (ທຸລະກິດ)ແມ່ນຕ້ອງບໍ່:

ກ. ຖືກອອກແບບ ຫຼື ນຳໃຊ້ເພື່ອໃຫ້ກາຍເປັນ ຫຼື ສ້າງການຈຳແນກປະຕິບັດແບບຕາມໃຈ ຫຼື ບໍ່ສົມເຫດສົມຜົນ ລະຫວ່າງ ຜູ້ປະຕິບັດງານ (ທຸລະກິດ)ທີ່ມີເງື່ອນໄຂຄືກັນ; ແລະ

ຂ. ເທົ່າທີ່ເປັນໄປໄດ້, ຈຳກັດການມີສ່ວນຮ່ວມຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ.

3. ມາດຕະການການອຳນວຍຄວາມສະດວກທາງດ້ານການຄ້າທີ່ໄດ້ລະບຸໄວ້ຕາມວັກທີ 7.1 ຕ້ອງປະກອບມີຢ່າງຕ່ຳສຸດແມ່ນ 3 ໃນບັນດາມາດຕະການດັ່ງຕໍ່ໄປນີ້: [5]

ກ. ຂໍ້ກຳນົດທາງດ້ານເອກະສານ ແລະ ຂໍ້ມູນໃຫ້ມີໜ້ອຍ ຕາມຄວາມເໝາະສົມ;

ຂ. ນຳໃຊ້ການກວດສອບ ແລະ ພິສູດຕົວຈິງໂດຍບຸກຄົນ ໃຫ້ມີໜ້ອຍ ຕາມຄວາມເໝາະສົມ;

ຄ. ໄລຍະເວລາໃນການປ່ອຍສິນຄ້າຢ່າງວ່ອງໄວຕາມຄວາມເໝາະສົມ;

ງ. ແກ່ຍາວເວລາໃນການຊຳລະຄ່າພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ;

ຈ. ນຳໃຊ້ລະບົບການຄ້ຳປະກັນແບບຄົບຊຸດ ຫຼື ຫຼຸດຜ່ອນໃນການຄ້ຳປະກັນ;

ສ. ເອກະສານແຈ້ງພາສີສະບັບດຽວສຳລັບການນຳເຂົ້າ ຫຼື ສົ່ງອອກທັງໝົດໃນໄລຍະເວລາໃດໜຶ່ງ; ແລະ

ຊ. ການປ່ອຍສິນຄ້າໃນສະຖານທີ່ຂອງຜູ້ປະຕິບັດງານ (ທຸລະກິດ) ທີ່ໄດ້ຮັບອະນຸຍາດ ຫຼື ສະຖານທີ່ອື່ນທີ່ຖືກຮັບຮອງຈາກພາສີ.

4. ຊຸກຍູ້ໃຫ້ສະມາຊິກສ້າງລະບອບຜູ້ປະຕິບັດງານ (ທຸລະກິດ) ທີ່ໄດ້ອະນຸຍາດ (ຮັບຮອງ) ໂດຍອີງໃສ່ມາດຕະຖານສາກົນ, ໃນກໍລະນີທີ່ມີມາດຕະຖານນັ້ນ, ຍົກເວັ້ນໃນກໍລະນີທີ່ມາດຕະຖານດັ່ງກ່າວຈະບໍ່ແທດເໝາະ ຫຼື ບໍ່ແມ່ນເຄື່ອງມືທີ່ມີປະສິດທິຜົນ ໃນການບັນລຸຈຸດປະສົງອັນຊອບທຳທີ່ວາງໄວ້ນັ້ນ.

5. ເພື່ອທີ່ຈະພັດທະນາມາດຕະການການອຳນວຍຄວາມສະດວກໃຫ້ແກ່ຜູ້ປະຕິບັດງານ (ທຸລະກິດ)ທີ່ໄດ້ຮັບອະນຸຍາດ (ຮັບຮອງ), ສະມາຊິກ ຕ້ອງເປີດໂອກາດໃຫ້ສະມາຊິກອື່ນ ກ່ຽວກັບຄວາມເປັນໄປໄດ້ໃນການເຈລະຈາສັນຍາຮັບຮູ້ເຊິ່ງກັນແລະກັນໄດ້ກ່ຽວກັບລະບອບຜູ້ປະຕິບັດງານ (ທຸລະກິດ) ທີ່ໄດ້ຮັບອະນຸຍາດ (ຮັບຮອງ)ນັ້ນ.

6. ສະມາຊິກຕ້ອງແລກປ່ຽນຂໍ້ມູນທີ່ກ່ຽວຂ້ອງພາຍໃນຄະນະກຳມະການ ກ່ຽວກັບລະບອບຜູ້ປະຕິບັດງານ (ທຸລະກິດ) ທີ່ໄດ້ຮັບອະນຸຍາດ(ຮັບຮອງ) ທີ່ກຳລັງຈັດຕັ້ງປະຕິບັດ.

## 8 ການຂົນສົ່ງທີ່ວ່ອງໄວ

1. ແຕ່ລະສະມາຊິກ ຕ້ອງຮັບຮອງເອົາ ຫຼື ຮັກສາຂັ້ນຕອນຕ່າງໆໃນການອະນຸຍາດໃຫ້ມີການປ່ອຍສິນຄ້າແບບວ່ອງໄວ ຢ່າງໜ້ອຍສຸດແມ່ນສິນຄ້າທີ່ເຂົ້າມາໂດຍທາງອາກາດຫາບຸກຄົນທີ່ໄດ້ຂໍອະນຸມັດການບໍລິການດັ່ງກ່າວ, ໃນຂະນະທີ່ຍັງຮັກສາລະບົບຄຸ້ມຄອງພາສີ.[6] ຖ້າຫາກວ່າສະມາຊິກນຳໃຊ້ ມາດຖານເງື່ອນໄຂທີ່ຈຳກັດຜູ້ສະເໜີຮ້ອງຂໍ; ໃນການພິມເຜີຍແຜ່ມາດຖານເງື່ອນໄຂ, ເຊິ່ງເປັນເງື່ອນໄຂສຳລັບຄຸນສົມບັດຂອງຜູ້ເໜີຮ້ອງຂໍເພື່ອຂໍການບໍລິການທີ່ໄດ້ລະບຸໄວ້ໃນວັກທີ 8.2 ກ. – ງ.; ສະມາຊິກ ຕ້ອງ:

ກ. ສະໜອງພື້ນຖານໂຄງລ່າງທີ່ພຽງພໍ ແລະ ການຊຳລະຄ່າໃຊ້ຈ່າຍຕ່າງໆທີ່ກ່ຽວຂ້ອງກັບຂັ້ນຕອນພາສີສຳລັບຂະບວນການຂົນສົ່ງທີ່ວ່ອງໄວ, ໃນກໍລະນີທີ່ຜູ້ສະເໜີຮ້ອງຂໍ ປະຕິບັດໄດ້ຕາມເງື່ອນໄຂຄົບຖ້ວນຕາມຄວາມຮຽກຮ້ອງຕ້ອງການຂອງສະມາຊິກ, ໃນສະຖານທີ່ອຳນວຍຄວາມສະດວກທີ່ກຳນົດໄວ້;

---

[5] ມາດຕະຖານຕ່າງໆທີ່ໄດ້ລະບຸໄວ້ໃນຫຍໍ້ໜ້າຂອງວັກ ກ-ຊ. ຈະຖືວ່າເປັນມາດຕະການໃຫ້ ຜູ້ປະຕິບັດງານ (ທຸລະກິດ)ທີ່ໄດ້ຮັບອະນຸຍາດ(ຮັບຮອງ) ຖ້າຫາກວ່າ ລະບອບດັ່ງກ່າວ ອະນຸຍາດໃຫ້ທຸກຜູ້ປະຕິບັດງານ (ທຸລະກິດ)ທົ່ວໄປ.

[6] ໃນກໍລະນີທີ່ສະມາຊິກມີລະບຽບການຢູ່ແລ້ວທີ່ສະໜອງການບໍລິການທີ່ລະບຸໄວ້ໃນວັກ 8.2, ບົດບັນຍັດນີ້ຈະບໍ່ຮຽກຮ້ອງໃຫ້ສະມາຊິກນັ້ນຕ້ອງໄດ້ສ້າງຂັ້ນຕອນການປ່ອຍສິນຄ້າທີ່ວ່ອງໄວ ຊຶ່ງເປັນລະບຽບການແຍກຕ່າງຫາກຂຶ້ນມາໃໝ່ອີກ.

ຂ. ຍື່ນໃບສະເໜີກ່ຽວກັບຂໍ້ມູນທີ່ຈຳເປັນ ເພື່ອການປ່ອຍສິນຄ້າ ກ່ອນການມາຮອດຂອງສິນຄ້າ ໃນການຂົນສົ່ງທີ່ວ່ອງໄວ;

ຄ. ໄດ້ຮັບການປະເມີນຄ່າທຳນຽມທີ່ຈຳກັດແຕ່ໃນຈຳນວນມູນຄ່າຂອງການບໍລິການຕົວຈິງທີ່ກ່ຽວຂ້ອງເທົ່ານັ້ນເພື່ອໄດ້ຮັບການບໍລິການທີ່ໄດ້ລະບຸໄວ້ໃນວັກທີ 8.2 ກ. – ງ.;

ງ. ຮັກສາການຄຸ້ມຄອງການຂົນສົ່ງສິນຄ້າທີ່ວ່ອງໄວໃນລະດັບສູງໂດຍຜ່ານການນຳໃຊ້ລະບົບຮັກສາຄວາມປອດໄພພາຍໃນ, ລະບົບພາລາທິການ, ແລະ ເຕັກໂນໂລຊີການຕິດຕາມສິນຄ້າຈາກການຮັບເອົາສິນຄ້າທີ່ຕົ້ນທາງ ຈົນເຖິງປາຍທາງຂອງການຂົນສົ່ງ;

ຈ. ສະໜອງການຂົນສົ່ງແບບວ່ອງໄວ ຈາກ ການຮັບເອົາສິນຄ້າ ໄປຈົນຮອດ ການສົ່ງສິນຄ້າ;

ສ. ຄາດວ່າຄວາມຮັບຜິດຊອບໃນການຊຳລະເງິນຄ່າພາສີ, ອາກອນ, ແລະ ຄ່າທຳນຽມ ແລະ ຄ່າບໍລິການທັງໝົດຂອງສິນຄ້າໃຫ້ແກ່ອຳນາດການປົກຄອງພາສີ;

ຊ. ມີການບັນທຶກປະຫວັດການປະຕິບັດຄວາມສອດຄ່ອງທາງດ້ານພາສີ ແລະ ກົດໝາຍ ແລະ ຂໍ້ຕົກລົງອື່ນໆທີ່ກ່ຽວຂ້ອງ;

ຍ. ປະຕິບັດສອດຄ່ອງກັບເງື່ອນໄຂອື່ນໆທີ່ກ່ຽວຂ້ອງໂດຍກົງກັບການບັງຄັບໃຊ້ກົດໝາຍ, ຂໍ້ກຳນົດ ແລະ ຂັ້ນຕອນຕ່າງໆ ທີ່ມີຜົນບັງຄັບໃຊ້ຂອງສະມາຊິກ, ທີ່ກ່ຽວຂ້ອງສະເພາະກັບການບໍລິການທີ່ໄດ້ລະບຸໄວ້ໃນວັກທີ 8.2.

2. ອີງຕາມເນື້ອໃນຂອງວັກທີ 8.1 ແລະ 8.3, ສະມາຊິກຕ້ອງ:

a. ຫຼຸດຜ່ອນຈຳນວນເອກະສານທີ່ຕ້ອງການເພື່ອໃຫ້ປ່ອຍສິນຄ້າແບບວ່ອງໄວຕາມມາດຕາທີ 10.1, ແລະ ເທົ່າທີ່ເຮັດໄດ້, ສະໜອງການປ່ອຍສິນຄ້າອີງໃສ່ເອກະສານອັນດຽວທີ່ມີຂໍ້ມູນກ່ຽວກັບສິນຄ້າໄດ້ຍື່ນໃຫ້ກ່ອນໜ້າແລ້ວ;

b. ສະໜອງການປ່ອຍສິນຄ້າແບບວ່ອງໄວພາຍໃຕ້ສະພາບການປົກກະຕິໃຫ້ໄດ້ໄວເທົ່າທີ່ຈະໄວໄດ້ພາຍຫຼັງການມາຮອດຂອງສິນຄ້າ ພາຍໃຕ້ເງື່ອນໄຂທີ່ຂໍ້ມູນທີ່ຈຳເປັນໃນການປ່ອຍສິນຄ້າໄດ້ຖືກຍື່ນກ່ອນໜ້ານັ້ນ;

c. and ພະຍາຍາມນຳໃຊ້ການບໍລິການທີ່ໄດ້ລະບຸໄວ້ໃນຍໍ້ໜ້າທີ 8.2 a. ແລະ b. ຕໍ່ສິນຄ້າໃນທຸກນໍ້າໜັກ ຫຼື ທຸກມູນຄ່າ ຮັບຮູ້ວ່າອະນຸຍາດໃຫ້ສະມາຊິກຮຽກຮ້ອງຂັ້ນຕອນການນຳເຂົ້າເພີ່ມເຕີມ, ລວມມີເອກະ ສານແຈ້ງ ແລະ ເອກະສານຢັ້ງຢືນອື່ນໆ ແລະ ຊຳລະຄ່າພາສີ ແລະ ອາກອນ, ແລະ ຈຳກັດການບໍລິການດັ່ງກ່າວໂດຍອີງໃສ່ປະເພດຂອງສິນຄ້າ, ແຕ່ບໍ່ຈຳກັດແຕ່ໃນສິນຄ້າທີ່ມີມູນຄ່າຕໍ່າ, ເອກະສານດັ່ງກ່າວ; ແລະ

d. ສະໜອງ, ເທົ່າທີ່ເຮັດໄດ້, ສຳລັບສິນຄ້າທີ່ມີມູນຄ່າ ຫຼື ມູນຄ່າທີ່ສາມາດເກັບພາສີໄດ້ ໃນລະດັບຕໍ່າສຸດ ເພື່ອຍົກເວັ້ນການເກັບພາສີ ແລະ ອາກອນ, ຄຽງຄູ່ກັບສິນຄ້າທີ່ໄດ້ລະບຸໄວ້. ອາກອນພາຍໃນ, ເຊັ່ນ: ອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້, ທີ່ໃຊ້ຕໍ່ການນຳເຂົ້າໂດຍສອດຄ່ອງກັບມາດຕາ III ຂອງສັນຍາ GATT 1994 ແມ່ນບໍ່ເປັນເງື່ອນໄຂຂອງບົດບັນຍັດນີ້.

3. ບໍ່ມີຫຍັງໃນວັກທີ 8.1 ແລະ 8.2 ຈະສົ່ງຜົນກະທົບຕໍ່ສິດຂອງສະມາຊິກໃນການກວດສອບ, ກັກກັນ, ຢຶດໄວ້ຊົ່ວຄາວ, ຢຶດໄວ້ເປັນຂອງລັດ ຫຼື ປະຕິເສດທີ່ຈະອະນຸຍາດນຳເຂົ້າສິນຄ້າ, ຫຼື ດຳເນີນການກວດສອບພາຍຫຼັງປ່ອຍສິນຄ້າ, ລວມໄປເຖິງການນຳໃຊ້ລະບົບການປະເມີນຄວາມສ່ຽງ. ຍິ່ງໄປກວ່ານັ້ນ, ບໍ່ມີຫຍັງໃນວັກທີ 8.1 ແລະ 8.2 ຈະກີດກັ້ນໃຫ້ສະມາຊິກຮຽກຮ້ອງ, ດັ່ງເປັນເງື່ອນໄຂໃນການປ່ອຍສິນຄ້າ, ການສະໜອງຂໍ້ມູນເພີ່ມເຕີມ ແລະ ປະຕິບັດຕາມເງື່ອນໄຂໃນການໄດ້ຮັບການອະນຸຍາດນຳເຂົ້າແບບອັດຕະໂນມັດ.

### 9 Perishable Goods[7] ສິນຄ້າທີ່ເສຍຄຸນໄວ

1. ໃນທັດສະນະຂອງການປ້ອງກັນບໍ່ໃຫ້ເກີດມີຄວາມເສຍຫາຍ ຫຼື ເຊື່ອມຄຸນຂອງສິນຄ້າທີ່ເສຍຄຸນໄວ, ແລະ ພາຍໃຕ້ເງື່ອນໄຂທີ່ໄດ້ຜ່ານທຸກເງື່ອນໄຂທາງດ້ານນິຕິກຳມາໝົດແລ້ວ, ສະມາຊິກຕ້ອງ:
   ກ. ອະນຸຍາດໃຫ້ປ່ອຍສິນຄ້າທີ່ເສຍຄຸນໄວ ພາຍໃຕ້ສະພາບການປົກກະຕິພາຍໃນໄລຍະເວລາທີ່ສັ້ນທີ່ສຸດເທົ່າທີ່ເປັນໄປໄດ້; ແລະ
   ຂ. ອະນຸຍາດໃຫ້ປ່ອຍສິນຄ້າທີ່ເສຍຄຸນໄວ, ໃນສະຖານະການທີ່ຍົກເວັ້ນ ຊຶ່ງເປັນການເໝາະສົມທີ່ຈະປ່ອຍສິນຄ້າດັ່ງກ່າວ ນອກໂມງການຂອງພາສີ ແລະ ໜ່ວຍງານອື່ນໆທີ່ກ່ຽວຂ້ອງ.
2. ສະມາຊິກຕ້ອງຈັດລຽງບູລິມະສິດ ທີ່ເໝາະສົມຕໍ່ສິນຄ້າເສຍຄຸນໄວ ໃນເວລາສ້າງຕາຕະລາງໃນການກວດກາສິນຄ້າທີ່ອາດຈຳເປັນ.
3. ແຕ່ລະສະມາຊິກ ຕ້ອງໄດ້ເຮັດຢ່າງໃດຢ່າງໜຶ່ງລະຫວ່າງການຈັດແຈງ, ຫຼື ອະນຸຍາດໃຫ້ຜູ້ນຳເຂົ້າຈັດແຈງ, ໃຫ້ມີການເກັບມ້ຽນທີ່ເໝາະສົມສຳລັບສິນຄ້າເສຍຄຸນໄວທີ່ລໍຖ້າການປ່ອຍສິນຄ້າ. ສະມາຊິກ ອາດຮຽກຮ້ອງວ່າສິ່ງອຳນວຍຄວາມສະດວກໃນການເກັບຮັກສາສິນຄ້າ ທີ່ຈັດແຈງໂດຍຜູ້ນຳເຂົ້າ ແມ່ນໄດ້ຮັບອະນຸຍາດ ຫຼື ກຳນົດໂດຍບັນດາໜ່ວຍງານທີ່ກ່ຽວຂ້ອງ. ການເຄື່ອນຍ້າຍສິນຄ້າເຂົ້າໃນສະຖານທີ່ເກັບຮັກສາດັ່ງກ່າວ, ລວມທັງການອະນຸຍາດໃຫ້ຜູ້ປະຕິບັດງານ (ທຸລະກິດ) ເຄື່ອນຍ້າຍສິນຄ້າ, ອາດຕ້ອງໄດ້ຮັບການອະນຸຍາດ, ສຳລັບໜ່ວຍງານທີ່ຕ້ອງການ, ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ໃນກໍລະນີ ທີ່ສາມາດປະຕິບັດໄດ້ ແລະ ສອດຄ່ອງກັບລະບຽບການພາຍໃນ, ເມື່ອຖືກຮ້ອງຂໍຈາກຜູ້ນຳເຂົ້າ, ສະມາຊິກ ຕ້ອງສະໜອງໃຫ້ມີຂັ້ນຕອນຕ່າງໆທີ່ຈຳເປັນໃນການປ່ອຍສິນຄ້າຢູ່ສະຖານທີ່ເກັບຮັກສາຕ່າງໆເຫຼົ່ານັ້ນ.
4. ໃນກໍລະນີທີ່ມີການຊັກຊ້າຫຼາຍໃນການປ່ອຍສິນຄ້າທີ່ເນົ່າເປື່ອຍງ່າຍ, ແລະ ເມື່ອມີຄຳຮ້ອງເປັນລາຍລັກອັກສອນ, ສະມາຊິກທີ່ນຳເຂົ້າຕ້ອງສະໜອງການສື່ສານກ່ຽວກັບເຫດຜົນໃນການຊັກຊ້າດັ່ງກ່າວເທົ່າທີ່ຈະປະຕິບັດໄດ້.

## ມາດຕາ 8: ການຮ່ວມມືຢູ່ຊາຍແດນຂອງອົງການ

1. ສະມາຊິກຕ້ອງຮັບປະກັນວ່າໜ່ວຍງານ ແລະ ອົງການຄຸ້ມຄອງ ທີ່ຮັບຜິດຊອບການຄຸ້ມຄອງຊາຍແດນ ແລະ ຂັ້ນຕອນການນຳເຂົ້າ, ສົ່ງອອກ ແລະ ການຜ່ານຂອງສິນຄ້າ ມີການຮ່ວມມືເຊິ່ງກັນ ແລະ ກັນ ແລະ ປະສານກິດຈະກຳຂອງເຂົາເຈົ້າ ເພື່ອການອຳນວຍຄວາມສະດວກດ້ານການຄ້າ.
2. ສະມາຊິກຕ້ອງຮ່ວມມືກັບສະມາຊິກອື່ນທີ່ມີຊາຍແດນຮ່ວມໂດຍອີງຕາມເງື່ອນໄຂທີ່ໄດ້ເຫັນດີເປັນເອກະພາບໃນທັດສະນະທີ່ໃຫ້ມີການປະສານງານຂອງຂັ້ນຕອນໃນການຂ້າມຊາຍແດນ ເພື່ອອຳນວຍຄວາມສະດວກການຄ້າຊາຍແດນ ໃນຂອບເຂດທີ່ເປັນໄປໄດ້ ແລະ ສາມາດປະຕິບັດໄດ້. ການຮ່ວມມື ແລະ ປະສານງານດັ່ງກ່າວອາດລວມເຖິງ:
   i. ຄວາມສອດຄ່ອງຂອງວັນ ແລະ ໂມງລັດຖະການ;
   ii. ຄວາມສອດຄ່ອງຂອງຂັ້ນຕອນ ແລະ ພິທີການ;
   iii. ການພັດທະນາ ແລະ ໃຊ້ອຸປະກອນທົ່ວໄປຮ່ວມກັນ;
   iv. ການຄຸ້ມຄອງຮ່ວມ;
   v. ການສ້າງຕັ້ງຈຸດການຄຸ້ມຄອງຊາຍແດນເປັນຈຸດດຽວ.

## ມາດຕາ 9: ການເຄື່ອນຍ້າຍສິນຄ້າພາຍໃຕ້ການຄຸ້ມຄອງພາສີທີ່ມີຈຸດປະສົງສຳລັບການນຳເຂົ້າ

[7] ເພື່ອຈຸດປະສົງຂອງບົດບັນຍັດນີ້, ສິນຄ້າເສຍຄຸນໄວ ແມ່ນ ສິນຄ້າທີ່ມີການເຊື່ອມ, ເນົ່າເປື່ອຍ ໄວ ເນື່ອງຈາກ ຄຸນລັກສະນະທາງທຳມະຊາດຂອງສິນຄ້າ ໂດຍສະເພາະ ການຂາດເງື່ອນໄຂເກັບຮັກສາທີ່ເໝາະສົມ.

ແຕ່ລະສະມາຊິກ ຕ້ອງອະນຸຍາດໃຫ້ເຄື່ອນຍ້າຍສິນຄ້າທີ່ມີຈຸດປະສົງສໍາລັບການນໍາເຂົ້າໃນອານາເຂດຂອງຕົນພາຍໃຕ້ການຄຸ້ມຄອງດ້ານພາສີ ຈາກຫ້ອງການຄຸ້ມຄອງພາສີຂາເຂົ້າໄປຫາຫ້ອງການຄຸ້ມຄອງພາສີຂອງອານາເຂດອື່ນ ທີ່ສິນຄ້າຈະຖືກປ່ອຍອອກ ຫຼື ສະສາງ ໃນຂອບເຂດທີ່ສາມາດປະຕິບັດໄດ້ ແລະ ກໍລະນີທີ່ເງື່ອນໄຂທາງດ້ານລະບຽບການໄດ້ປະຕິບັດຄົບຖ້ວນ.

**ມາດຕາ 10: ພິທີການທີ່ຕິດພັນກັບການນໍາເຂົ້າ ແລະ ສົ່ງອອກ ແລະ ການຜ່ານຂອງສິນຄ້າ**

**1 ພິທີການ ແລະ ຂໍ້ກໍານົດດ້ານເອກະສານ**

1.1 ໃນທັດສະນະຂອງການຫຼຸດຜ່ອນເຫດການ ແລະ ຄວາມຫຍຸ້ງຍາກ, ທັງເຮັດໃຫ້ພິທີການ ແລະ ຂໍ້ກໍານົດດ້ານເອກະສານການນໍາເຂົ້າ, ສົ່ງອອກ ແລະ ການຜ່ານຂອງສິນຄ້າງ່າຍຂຶ້ນ ໂດຍທີ່ຄໍານຶງເຖິງຈຸດປະສົງທາງດ້ານນະໂຍບາຍທີ່ຖືກຕ້ອງ ແລະ ປັດໄຈອື່ນໆ ເຊັ່ນ: ການປ່ຽນແປງຂອງສະພາບການ, ຄວາມກ່ຽວຂ້ອງຂອງຂໍ້ມູນ ແລະ ການດໍາເນີນທຸລະກິດ, ການເຂົ້າເຖິງເຕັກນິກ ແລະ ເຕັກໂນໂລຊີ, ວິທີການປະຕິບັດທີ່ດີທີ່ສຸດ ແລະ ອົງປະກອບຈາກພາກສ່ວນທີ່ສົນໃຈ, ແຕ່ລະສະມາຊິກຕ້ອງທົບທວນພິທີການ ແລະ ຂໍ້ກໍານົດດ້ານເອກະສານດັ່ງກ່າວ ໂດຍອີງຕາມຜົນການທົບທວນ ຕາມຄວາມເໝາະສົມ, ທັງຮັບປະກັນ ວ່າພິທີການ ແລະ ຂໍ້ກໍານົດດ້ານເອກະສານດັ່ງກ່າວ:

ກ. ຖືກຮັບຮອງ ແລະ/ຫຼື ນໍາໃຊ້ໃນທັດສະນະທີ່ໃຫ້ມີການປ່ອຍ ແລະ ສະສາງສິນຄ້າທັນທີ ໂດຍສະເພາະສິນຄ້າທີ່ມີການເນົ່າເສຍໄວ;

ຂ. ຖືກຮັບຮອງ ແລະ/ຫຼື ນໍາໃຊ້ໃນວິທີການທີ່ມີຈຸດປະສົງຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍ ໃນການປະຕິບັດໃຫ້ສອດຄ່ອງ ສໍາລັບຜູ້ຄ້າຂາຍ ແລະ ຜູ້ດໍາເນີນການ;

ຄ. ເລືອກມາດຕະການທີ່ຈໍາກັດທາງການຄ້າໜ້ອຍທີ່ສຸດ ເຊິ່ງມີສອງ ຫຼື ຫຼາຍກວ່າສອງທາງເລືອກທີ່ສົມເຫດສົມຜົນ ໃນການບັນລຸຈຸດປະສົງທາງດ້ານນະໂຍບາຍ ຫຼື ຈຸດປະສົງໃນຄໍາຖາມ; ແລະ

ງ. ບໍ່ໃຫ້ຮັກສາໄວ້ ຖ້າບໍ່ມີຄວາມຮຽກຮ້ອງຕ້ອງການ ໂດຍລວມທັງພາກສ່ວນທີ່ຕິດພັນ

1.2. ຄະນະກໍາມະການຕ້ອງພັດທະນາຂັ້ນຕອນເພື່ອການແບ່ງປັນຂໍ້ມູນທີ່ກ່ຽວຂ້ອງ ແລະ ການປະຕິບັດທີ່ດີທີ່ສຸດຕາມເຫັນສົມຄວນ.

**2 ການຮັບເອົາສໍາເນົາ**

2.1. ແຕ່ລະສະມາຊິກຕ້ອງພະຍາຍາມຮັບເອົາເອກະສານສໍາລັບພິທີການການນໍາເຂົ້າ, ສົ່ງອອກ ຫຼື ການຜ່ານຂອງສິນຄ້າ ທີ່ສໍາເນົາເປັນເຈ້ຍ ຫຼື ທາງອີເລັກໂທນິກ ຕາມເຫັນສົມຄວນ.

2.2. ເມື່ອອົງການຂອງລັດຖະບານຂອງສະມາຊິກໄດ້ມີເອກະສານສະບັບຕົ້ນ, ອົງການຕ່າງໆຂອງສະມາຊິກອື່ນຕ້ອງຮັບສໍາເນົາທີ່ເປັນເຈ້ຍ ຫຼື ອີເລັກໂທນິກ ຈາກອົງການທີ່ມີສະບັບຕົ້ນທົດແທນເອກະສານສະບັບຕົ້ນໂດຍອີງຕາມຄວາມ ເໝາະສົມ.

2.3. ສະມາຊິກຕ້ອງບໍ່ຮຽກຮ້ອງເອົາເອກະສານການແຈ້ງການສົ່ງອອກສະບັບຕົ້ນ ຫຼື ສໍາເນົາ ທີ່ສົ່ງໃຫ້ເຈົ້າໜ້າທີ່ພາສີຂອງສະມາຊິກທີ່ສົ່ງອອກ ເປັນຂໍ້ກໍານົດໃນການນໍາເຂົ້າ. [8]

**3 ການນໍາໃຊ້ມາດຕະຖານສາກົນ**

3.1. ສະມາຊິກໄດ້ຖືກຊຸກຍູ້ໃຫ້ນໍາໃຊ້ມາດຕະຖານສາກົນ ຫຼື ສ່ວນໃດໜຶ່ງທີ່ກ່ຽວຂ້ອງ ເປັນພື້ນຖານໃນພິທີການ ແລະ ຂັ້ນຕອນການນໍາເຂົ້າ, ສົ່ງອອກ ຫຼື ການຜ່ານຂອງສິນຄ້າຂອງຕົນ ຍົກເວັ້ນທີ່ໄດ້ກໍານົດເປັນຢ່າງອື່ນໃນສັນຍາສະບັບນີ້.

3.2. ສະມາຊິກໄດ້ຖືກຊຸກຍູ້ໃຫ້ປະກອບສ່ວນ ໃນການກະກຽມ ແລະ ທົບທວນມາດຕະຖານສາກົນທີ່ກ່ຽວຂ້ອງເປັນໄລຍະ ໂດຍອົງການຈັດຕັ້ງສາກົນທີ່ເໝາະສົມ ຕາມຂໍ້ຈໍາກັດດ້ານຊັບພະຍາກອນທີ່ມີ.

---

[8] ບັນທຶກໄວ້ວ່າ ໃນວັກນີ້ໄດ້ກີດກັ້ນສະມາຊິກຈາກການຮຽກຮ້ອງເອກະສານຕ່າງໆ ເຊັ່ນ: ໃບປະກາດ, ໃບອະນຸມັດ ຫຼື ໃບອະນຸຍາດ ເປັນຂໍ້ກໍານົດໃນການນໍາເຂົ້າສິນຄ້າທີ່ຖືກຄວບຄຸມ ຫຼື ຄຸ້ມຄອງ.

3.3. ຄະນະກຳມະການຕ້ອງພັດທະນາຂັ້ນຕອນສຳລັບການແບ່ງປັນຂໍ້ມູນທີ່ກ່ຽວຂ້ອງ ແລະ ວິທີດຳເນີນງານທີ່ດີທີ່ສຸດ ໃນການປະຕິບັດມາດຕະຖານສາກົນ ຕາມຄວາມເໝາະສົມ. ຄະນະກຳມະການອາດເຊີນອົງການຈັດຕັ້ງສາກົນທີ່ກ່ຽວ ຂ້ອງ ເພື່ອປຶກສາຫາລືວຽກງານຂອງເຂົາເຈົ້າກ່ຽວກັບມາດຕະຖານສາກົນ. ອີງຕາມຄວາມເໝາະສົມ ຄະນະກຳມະການຕ້ອງລະບຸມາດຕະຖານສະເພາະທີ່ມີປະໂຫຍດສະເພາະກັບສະມາຊິກ.

**4 ການບໍລິການປະຕູດຽວ**

4.1. ສະມາຊິກຕ້ອງພະຍາຍາມສ້າງຕັ້ງ ແລະ ຮັກສາການບໍລິການປະຕູດຽວ ເພື່ອໃຫ້ຜູ້ຄ້າຂາຍສາມາດສົ່ງເອກະສານທີ່ກຳນົດໃຫ້ສົ່ງສຳລັບການນຳເຂົ້າ, ສົ່ງອອກ ແລະ ການຜ່ານຂອງສິນຄ້າ ໂດຍຜ່ານຈຸດເຂົ້າເມືອງດຽວໃນໜ່ວຍງານ ແລະ ອົງການທີ່ມີສ່ວນຮ່ວມ. ພາຍຫຼັງການກວດສອບເອກະສານ ແລະ/ຫຼື ຂໍ້ມູນ ໂດຍໜ່ວຍງານ ແລະ ອົງການທີ່ມີສ່ວນຮ່ວມ, ຕ້ອງໄດ້ແຈ້ງຜົນດັ່ງກ່າວໃຫ້ຜູ້ສະໝັກຜ່ານການບໍລິການປະຕູດຽວໃນເວລາອັນຄວນ.

4.2. ໃນກໍລະນີທີ່ໄດ້ຮັບເອກະສານ ແລະ/ຫຼື ຂໍ້ມູນ ຕາມການກຳນົດຜ່ານການບໍລິການປະຕູດຽວແລ້ວ, ເອກະສານ ແລະ/ຫຼື ຂໍ້ມູນ ທີ່ຄືກັນຕ້ອງບໍ່ຖືກຮຽກຮ້ອງໂດຍໜ່ວຍງານ ແລະ ອົງການທີ່ມີສ່ວນຮ່ວມ ຍົກເວັ້ນໃນກໍລະນີຮີບດ່ວນ ແລະ ກໍລະນີຍົກເວັ້ນອື່ນໆທີ່ໄດ້ໃຫ້ສາທາລະນະຊົນຮັບຮູ້.

4.3. ສະມາຊິກຕ້ອງແຈ້ງໃຫ້ຄະນະກຳມະການກ່ຽວກັບການດຳເນີນງານລະອຽດຂອງການບໍລິການປະຕູດຽວ.

4.4. ສະມາຊິກຕ້ອງໃຊ້ຂໍ້ມູນທາງດ້ານເຕັກໂນໂລຊີເພື່ອການສະໜັບສະໜູນປະຕູດຽວ ໃນຂອບເຂດທີ່ເປັນໄປໄດ້ ແລະ ສາມາດປະຕິບັດໄດ້.

**5 ການກວດກາກ່ອນການຈັດສົ່ງ**

5.1. ສະມາຊິກຕ້ອງບໍ່ຮຽກຮ້ອງໃຫ້ມີການກວດກາກ່ອນການຈັດສົ່ງທີ່ຕິດພັນກັບການຈັດກຸ່ມອັດຕາພາສີ ແລະ ການແຈ້ງມູນຄ່າເສຍພາສີ.

5.2. ໂດຍບໍ່ມີການອະຄະຕິກັບສິດຂອງສະມາຊິກທີ່ນຳໃຊ້ປະເພດການກວດກາກ່ອນການຈັດສົ່ງອື່ນໆ ທີ່ບໍ່ໄດ້ລະບຸໃນວັກທີ 5.1, ສະມາຊິກໄດ້ຖືກຊຸກຍູ້ບໍ່ໃຫ້ສະເໜີ ຫຼື ນຳໃຊ້ ຂໍ້ກຳນົດໃໝ່ກ່ຽວກັບການນຳໃຊ້ຂອງເຂົາເຈົ້າ.[9]

**6 ການນຳໃຊ້ນາຍໜ້າແຈ້ງເສຍພາສີ**

6.1. ໂດຍບໍ່ມີການອະຄະຕິກັບນະໂຍບາຍທີ່ກ່ຽວຂ້ອງກັບບາງສະມາຊິກ ທີ່ໄດ້ຮັກສາບົດບາດພິເສດສຳລັບການເປັນນາຍໜ້າແຈ້ງເສຍພາສີ ໃນການຈັດຕັ້ງປະຕິບັດສັນຍາສະບັບນີ້ ສະມາຊິກຕ້ອງບໍ່ສະເໜີການບັງຄັບໃຫ້ນຳໃຊ້ນາຍໜ້າແຈ້ງເສຍພາສີ.

6.2. ແຕ່ລະສະມາຊິກຕ້ອງແຈ້ງ ແລະ ເຜີຍແຜ່ມາດຕະການໃນການນຳໃຊ້ນາຍໜ້າແຈ້ງເສຍພາສີ. ການປ່ຽນແປງໃດໆໃນພາຍຫຼັງຕ້ອງໄດ້ແຈ້ງໃຫ້ຄະນະກຳມະການ ແລະ ເຜີຍແຜ່ທັນທີ.

6.3. ສະມາຊິກຕ້ອງນຳໃຊ້ລະບຽບການທີ່ໂປ່ງໃສ ແລະ ເປັນທຳ ໃນການອອກອະນຸຍາດໃຫ້ນາຍໜ້າແຈ້ງເສຍພາສີ.

**7 ຂັ້ນຕອນດ້ານຊາຍໃນທີ່ຄືກັນ ແລະ ຂໍ້ຮຽກຮ້ອງດ້ານເອກະສານທີ່ເປັນອັນໜຶ່ງດຽວ**

7.1. ໂດຍອີງຕາມວັກ 7.2 ແຕ່ລະສະມາຊິກຕ້ອງນຳໃຊ້ຂັ້ນຕອນພາສີດ້ານຊາຍໃນທີ່ຄືກັນ ແລະ ຂໍ້ກຳນົດດ້ານເອກະສານທີ່ເປັນອັນໜຶ່ງດຽວໃນການປ່ອຍ ແລະ ສະສາງ ສິນຄ້າ ທົ່ວອານາເຂດຂອງຕົນ.

7.2. ໂດຍບັນທຶກໃນມາດຕານີ້ທີ່ໄດ້ປ້ອງກັນສະມາຊິກຈາກ:

ກ. ການປະຕິບັດແຕກຕ່າງຕໍ່ກັບຂັ້ນຕອນ ແລະ ຂໍ້ກຳນົດດ້ານເອກະສານ ໂດຍອີງຕາມລັກສະນະຂອງສິນຄ້າ ຫຼື ປະເພດພາຫະນະຂົນສົ່ງ;

ຂ. ການປະຕິບັດແຕກຕ່າງຕໍ່ຂັ້ນຕອນ ແລະ ຂໍ້ກຳນົດດ້ານເອກະສານ ໂດຍອີງຕາມການຈັດການດ້ານຄວາມສ່ຽງ;

---

[9] ວັກຍ່ອຍນີ້ໄດ້ກ່າວເຖິງການກວດກາກ່ອນການຈັດສົ່ງທີ່ໄດ້ລະບຸໃນ ສັນຍາວ່າດ້ວຍການກວດກາກ່ອນການຈັດສົ່ງ ແລະ ບໍ່ໄດ້ກີດກັ້ນການກວດກາກ່ອນການຈັດສົ່ງສຳລັບຈຸດປະສົງຂອງ SPS.

ຄ. ການປະຕິບັດແຕກຕ່າງຕໍ່ຂັ້ນຕອນ ແລະ ຂໍ້ກຳນົດດ້ານເອກະສານ ໂດຍການຍົກເວັ້ນທັງໝົດ ຫຼື ບາງສ່ວນຂອງພາສີ ຫຼື ອາກອນນຳເຂົ້າ;

ງ. ນຳໃຊ້ລະບົບ ຫຼື ຂັ້ນຕອນ ການຈັດເອກະສານທີ່ເປັນອີເລັກໂທນິກ; ຫຼື

ຈ. ການປະຕິບັດແຕກຕ່າງຕໍ່ຂັ້ນຕອນ ແລະ ຂໍ້ກຳນົດດ້ານເອກະສານໃນລັກສະນະທີ່ບໍ່ສອດຄ່ອງກັບສັນຍາວ່າດ້ວຍມາດຕະການສຸຂານາໄມ ແລະ ສຸຂານາໄມພືດ.

**8 ສິນຄ້າທີ່ຖືກປະຕິເສດ**

8.1. ໃນກໍລະນີທີ່ສິນຄ້ານຳເຂົ້າຖືກປະຕິເສດໂດຍອົງການຄຸ້ມຄອງຂອງສະມາຊິກ ເນື່ອງຈາກບົກພ່ອງໃນການປະຕິບັດຕາມລະບຽບການດ້ານສຸຂານາໄມ ແລະ ສຸຂານາໄມພືດ ຫຼື ລະບຽບການດ້ານເຕັກນິກ ໂດຍອີງຕາມ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທຸກສະມາຊິກຕ້ອງອະນຸຍາດໃຫ້ຜູ້ນຳເຂົ້າມອບຄືນ ຫຼື ສົ່ງຄືນສິນຄ້າທີ່ຖືກປະຕິເສດໃຫ້ຜູ້ສົ່ງອອກ ຫຼື ຜູ້ທີ່ໄດ້ຮັບມອບສິດຈາກຜູ້ສົ່ງອອກ.

ເມື່ອໄດ້ໃຫ້ທາງເລືອກດັ່ງກ່າວ ແລະ ຜູ້ນຳເຂົ້າບໍ່ສາມາດປະຕິບັດໄດ້ພາຍໃນໄລຍະເວລາທີ່ສົມເຫດສົມຜົນ ອົງການຄຸ້ມຄອງອາດເລືອກປະຕິບັດວິທີອື່ນໃນການຈັດການກັບສິນຄ້າທີ່ບໍ່ສອດຄ່ອງດັ່ງກ່າວ.

**9 ການອະນຸຍາດນຳເຂົ້າສິນຄ້າແບບຊົ່ວຄາວ/ການແປຮູບຂາເຂົ້າ ແລະ ຂາອອກ**

ກ. ການອະນຸຍາດນຳເຂົ້າສິນຄ້າແບບຊົ່ວຄາວ

ແຕ່ລະສະມາຊິກຕ້ອງອະນຸຍາດໃຫ້ສິນຄ້າທີ່ຈະນຳເຂົ້າອານາເຂດພາສີໂດຍມີເງື່ອນໄຂ ໃຫ້ຍົກເວັ້ນຈາກການເສຍພາສີ ແລະ ອາກອນນຳເຂົ້າຖ້າສິນຄ້າດັ່ງກ່າວຖືກນຳເຂົ້າອານາເຂດພາສີສຳລັບວັດຖຸປະສົງສະເພາະ ກໍຄື ສຳລັບການສົ່ງອອກຄືນພາຍໃນໄລຍະເວລາສະເພາະທີ່ກຳນົດ ແລະ ບໍ່ໄດ້ຜ່ານການປ່ຽນແປງຍົກເວັ້ນການເສື່ອມຄຸນ ແລະ ການກາຍເປັນສິ່ງເສດເຫຼືອຕາມການນຳໃຊ້ ດັ່ງທີ່ລະບຸໄວ້ໃນກົດໝາຍ ແລະ ລະບຽບການຂອງຕົນ.

ຂ. ການແປຮູບຂາເຂົ້າ ແລະ ຂາອອກ

i. ແຕ່ລະສະມາຊິກຕ້ອງອະນຸຍາດໃຫ້ມີການແປຮູບຂາເຂົ້າ ແລະ ຂາອອກ ຂອງສິນຄ້າ ດັ່ງທີ່ລະບຸໄວ້ໃນກົດໝາຍ ແລະ ລະບຽບການຂອງຕົນ. ສິນຄ້າທີ່ອະນຸຍາດສຳລັບການແປຮູບຂາອອກອາດຖືກນຳເຂົ້າມາຄືນໂດຍທີ່ຖືກຍົກເວັ້ນພາສີ ແລະ ອາກອນເຕັມສ່ວນ ຫຼື ສ່ວນໃດໜຶ່ງຕາມການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການຂອງສະມາຊິກ.

ii. ສຳລັບຈຸດປະສົງຂອງມາດຕານີ້ ຄຳວ່າ "ການແປຮູບຂາເຂົ້າ" ໝາຍເຖິງຂັ້ນຕອນດ້ານພາສີ ທີ່ສິນຄ້າໃດໜຶ່ງຖືກນຳເຂົ້າມາສູ່ອານາເຂດພາສີ ທີ່ມີເງື່ອນໄຂໃນການຍົກເວັ້ນການເສຍພາສີ ແລະ ອາກອນ ຫຼື ອາກອນ ຫຼື ການສົ່ງອາກອນຄືນຕາມຄວາມເໝາະສົມ ເຕັມສ່ວນ ຫຼື ສ່ວນໃດໜຶ່ງ ໂດຍມີພື້ນຖານວ່າສິນຄ້າດັ່ງກ່າວແມ່ນສຳລັບອຸດສາຫະກຳ, ການແປຮູບ ຫຼື ການສ້ອມແປງ ແລະ ເພື່ອການສົ່ງອອກຕໍ່ໄປ.

iii. ສຳລັບຈຸດປະສົງຂອງມາດຕານີ້ ຄຳວ່າ "ການແປຮູບຂາອອກ" ໝາຍເຖິງຂັ້ນຕອນດ້ານພາສີ ທີ່ສິນຄ້າສາມາດໝູນວຽນໃນອານາເຂດພາສີ ເຊິ່ງຈະຖືກສົ່ງອອກຊົ່ວຄາວ ສຳລັບອຸດສາຫະກຳ, ການແປຮູບ ຫຼື ການສ້ອມແປງຢູ່ຕ່າງປະເທດ ແລະ ເພື່ອນຳເຂົ້າມາຄືນ.

**ມາດຕາ 11: ເສລີພາບຂອງການຜ່ານຂອງສິນຄ້າ**

1. ລະບຽບການ ຫຼື ພິທີການໃດໜຶ່ງທີ່ຕິດພັນກັບການສັນຈອນໃນການຜ່ານຂອງສິນຄ້າທີ່ສະມາຊິກນຳໃຊ້ຕ້ອງບໍ່:

ກ. ຮັກສາໄວ້ ຖ້າສະພາບການ ຫຼື ຈຸດປະສົງໃນການຮັບຮອງເອົາບໍ່ມີຢູ່ແລ້ວ ຫຼື ຖ້າມີການປ່ຽນແປງຂອງສະພາບການ ຫຼື ຈຸດປະສົງ ທີ່ສາມາດເຮັດໄດ້ໂດຍວິທີການທີ່ສົມເຫດສົມຜົນເປັນໄປໄດ້ໂດຍມີການຈຳກັດທາງດ້ານການຄ້າທີ່ໜ້ອຍກວ່າ.

ຂ. ນຳໃຊ້ໃນທາງທີ່ເຮັດໃຫ້ມີການຈຳກັດທີ່ເຊື່ອງຊ້ອນຕໍ່ການສັນຈອນໃນການຜ່ານຂອງສິນຄ້າ.

2. ການສັນຈອນໃນການຜ່ານຂອງສິນຄ້າຕ້ອງບໍ່ເປັນເງື່ອນໄຂໃນການເກັບຄ່າບໍລິການ ຫຼື ຄ່າຊັກ ໃນການຜ່ານຂອງສິນຄ້າ, ຍົກເວັ້ນຄ່າຊັກສໍາລັບການຂົນສົ່ງ ຫຼື ຄ່າໃຊ້ຈ່າຍເຫຼົ່ານັ້ນ ເທົ່າທຽມກັບຄ່າໃຊ້ຈ່າຍໃນການບໍລິຫານການຜ່ານຂອງສິນຄ້າ ຫຼື ຄ່າໃຊ້ຈ່າຍຂອງການບໍລິການ.

3. ສະມາຊິກຕ້ອງບໍ່ຊອກຫາ, ນໍາໃຊ້ ຫຼື ຮັກສາໄວ້ ຂໍ້ຈໍາກັດຕາມຄວາມສະໝັກໃຈ ຫຼື ມາດຕະການໃດໆ ທີ່ຄ້າຍຄືກັນຕໍ່ກັບການສັນຈອນໃນການຜ່ານຂອງສິນຄ້າ. ນີ້ແມ່ນປາສະຈາກອະຄະຕິຕໍ່ລະບຽບການແຫ່ງຊາດທີ່ມີຢູ່ປະຈຸບັນ ແລະ ອະນາຄົດ, ການຕົກລົງສອງຝ່າຍ ຫຼື ຫຼາຍຝ່າຍ ທີ່ຕິດພັນກັບລະບຽບການຂົນສົ່ງໃຫ້ສອດຄ່ອງກັບລະບຽບການຂອງ ອຄລ.

4. ແຕ່ລະສະມາຊິກຕ້ອງຍິນຍອມໃຫ້ປະຕິບັດຕໍ່ສິນຄ້າທີ່ຈະຜ່ານອານາເຂດຂອງສະມາຊິກອື່ນໃດໜຶ່ງ ບໍ່ໜ້ອຍກວ່າສິນຄ້າປະເພດດັ່ງກ່າວຖືກຂົນສົ່ງຈາກສະຖານທີ່ຜະລິດຂອງເຂົາເຈົ້າໄປຫາສະຖານທີ່ສຸດທ້າຍທີ່ບໍ່ຜ່ານອານາເຂດຂອງສະມາຊິກດັ່ງກ່າວ.

5. ສະມາຊິກຖືກຊຸກຍູ້ໃຫ້ສ້າງພື້ນຖານໂຄງລ່າງຕ່າງຫາກ (ເຊັ່ນ: ທາງ, ບ່ອນຈອດເຮືອ ຫຼື ສິ່ງອື່ນທີ່ຄ້າຍຄືກັນ) ສໍາລັບການສັນຈອນໃນການຜ່ານຂອງສິນຄ້າ ໂດຍອີງຕາມຄວາມສາມາດປະຕິບັດຕົວຈິງ.

6. ພິທີການ, ຂໍ້ກໍານົດດ້ານເອກະສານ ແລະ ການຄຸ້ມຄອງທາງດ້ານພາສີ ທີ່ຕິດພັນກັບການສັນຈອນໃນການຜ່ານຂອງສິນຄ້າ ຕ້ອງບໍ່ເປັນອຸປະສັກເກີນຄວາມຈໍາເປັນຕໍ່:

ກ. ການບົ່ງຊີ້ສິນຄ້າ; ແລະ

ຂ. ຮັບປະກັນການປະຕິບັດຕາມການຂໍ້ກໍານົດໃນການຜ່ານຂອງສິນຄ້າ.

7. ເມື່ອສິນຄ້າຢູ່ພາຍໃຕ້ຂັ້ນຕອນການຜ່ານ ແລະ ໄດ້ຮັບອະນຸຍາດໃຫ້ດໍາເນີນການຕາມຂັ້ນຕອນຈາກຈຸດເລີ່ມຕົ້ນໃນອານາເຂດຂອງສະມາຊິກ, ສິນຄ້າເຫຼົ່ານັ້ນຈະບໍ່ເສຍຄ່າຊັກທາງພາສີ ຫຼື ການລໍຖ້າທີ່ບໍ່ຈໍາເປັນ ຫຼື ຂໍ້ຈໍາກັດ ຈົນກວ່າຈະມີການສະຫຼຸບການຜ່ານຂອງສິນຄ້າຢູ່ສະຖານທີ່ສຸດທ້າຍໃນອານາເຂດຂອງສະມາຊິກ.

8. ສະມາຊິກຕ້ອງບໍ່ນໍາໃຊ້ລະບຽບການດ້ານເຕັກນິກ ແລະ ຂັ້ນຕອນການປະເມີນຄວາມສອດຄ່ອງໃນຄວາມໝາຍຂອງສັນຍາ ວ່າດ້ວຍສິ່ງກີດຂວາງດ້ານເຕັກນິກຂອງສິນຄ້າໃນການຜ່ານຂອງສິນຄ້າ.

9. ສະມາຊິກຕ້ອງອະນຸຍາດ ແລະ ຈັດໃຫ້ມີການຈັດ ແລະ ດໍາເນີນການລ່ວງໜ້າຂອງເອກະສານການຜ່ານຂອງສິນຄ້າ ແລະ ຂໍ້ມູນກ່ອນສິນຄ້າຈະມາຮອດ.

10. ໃນເວລາທີ່ການສັນຈອນໃນການຜ່ານຂອງສິນຄ້າຮອດຫ້ອງການພາສີ ທີ່ສິນຄ້າຈະອອກຈາກອານາເຂດຂອງສະມາຊິກ, ຫ້ອງການດັ່ງກ່າວຕ້ອງໄດ້ຍົກເລີກການດໍາເນີນການຜ່ານຂອງສິນຄ້າທັນທີ ຖ້າທຸກເງື່ອນໄຂໃນການຜ່ານຂອງສິນຄ້າໄດ້ຮັບການປະຕິບັດຄົບຖ້ວນ.

11.1 ເມື່ອສະມາຊິກຮຽກຮ້ອງການຮັບປະກັນໃນໃບຄໍາຮ້ອງສໍາລັບການຮັບປະກັນ, ການມັດຈໍາ ຫຼື ສິ່ງອື່ນໆທີ່ສົມມາພາຄວນທາງດ້ານການເງິນ ຫຼື ບໍ່ແມ່ນການເງິນ [10] ເປັນເຄື່ອງມືໃນການສັນຈອນໃນການຜ່ານຂອງສິນຄ້າ ສິ່ງຮັບປະກັນເຫຼົ່ານັ້ນຕ້ອງຈໍາກັດ ພຽງແຕ່ຮັບປະກັນວ່າຂໍ້ຮຽກຮ້ອງຂອງການສັນຈອນໃນການຜ່ານຂອງສິນຄ້າໄດ້ຮັບການປະຕິບັດຄົບຖ້ວນ.

11.2 ເມື່ອສະມາຊິກໄດ້ພິຈາລະນາວ່າຂໍ້ກໍານົດໃນການຜ່ານຂອງສິນຄ້າໄດ້ຮັບການສະໜອງຢ່າງຄົບຖ້ວນ ສິ່ງຮັບປະກັນຕ້ອງໄດ້ຮັບການສົ່ງຄືນທັນທີ ໂດຍບໍ່ໃຫ້ມີການລ່າຊ້າ.

11.3. ແຕ່ລະສະມາຊິກຕ້ອງອະນຸຍາດໃຫ້ມີການຮັບປະກັນແບບຄົບຖ້ວນ ທີ່ລວມຫຼາຍທຸລະກໍາຂອງຜູ້ດໍາເນີນການຜູ້ດຽວ ຫຼື ການຕໍ່ການຮັບປະກັນໂດຍບໍ່ມີການປ່ອຍສິນຄ້າອອກພາຍຫຼັງ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງຕົນ.

[10] ບັນທຶກໄວ້ວ່າ ໃນບົດບັນຍັດນີ້ຕ້ອງກີດກັ້ນສະມາຊິກຈາກການຮັກສາຂັ້ນຕອນທີ່ມີຢູ່ ເມື່ອປະເພດຂອງພາຫະນະສາມາດນໍາໃຊ້ເປັນສິ່ງຮັບປະກັນສໍາລັບການສັນຈອນໃນການຜ່ານຂອງສິນຄ້າ.

11.4 ແຕ່ລະສະມາຊິກຕ້ອງເຜີຍແຜ່ໃຫ້ສາທາລະນະຊົນຊາບກ່ຽວກັບຂໍ້ມູນທີ່ກ່ຽວຂ້ອງ ທີ່ໃຊ້ໃນການວາງການຮັບປະກັນ ລວມທັງທຸລະກຳດ່ຽວ ແລະ ຫຼາຍທຸລະກຳ ທີ່ສາມາດປະຕິບັດໄດ້.

11.5 ແຕ່ລະສະມາຊິກອາດກຳນົດການໃຊ້ຂະບວນການດ້ານພາສີ ຫຼື ການຄຸ້ມຄອງດ້ານພາສີສຳລັບການສັນຈອນໃນການຜ່ານຂອງສິນຄ້າພຽງແຕ່ໃນກໍລະນີທີ່ເຫັນວ່າມີຄວາມສ່ຽງສູງ ຫຼື ເມື່ອຕ້ອງໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການວ່າດ້ວຍພາສີ ທີ່ບໍ່ສາມາດຮັບປະກັນໂດຍການນຳໃຊ້ການຮັບປະກັນ. ໂດຍອີງຕາມມາດຕາ 1 ຕ້ອງໄດ້ເຜີຍແຜ່ລະບຽບການທົ່ວໄປທີ່ໃຫ້ນຳໃຊ້ຂະບວນການດ້ານພາສີ ຫຼື ການຄຸ້ມຄອງດ້ານພາສີ.

12. ສະມາຊິກຕ້ອງພະຍາຍາມຮ່ວມມື ແລະ ປະສານງານເຊິ່ງກັນ ແລະ ກັນໃນທັດສະນະສົ່ງເສີມເສລີພາບຂອງການຜ່ານຂອງສິນຄ້າ. ການຮ່ວມມື ແລະ ປະສານງານ ດັ່ງກ່າວອາດລວມເຖິງ ແຕ່ບໍ່ຈຳກັດພຽງແຕ່ຄວາມເຂົ້າໃຈຕໍ່ກັບ:

i. ຄ່າຊັກ;

ii. ຂໍ້ກຳນົດທາງດ້ານພິທີການ ແລະ ທາງດ້ານກົດໝາຍ; ແລະ

iii. ການດຳເນີນງານຕົວຈິງຂອງລະບອບການຜ່ານຂອງສິນຄ້າ.

13. ແຕ່ລະສະມາຊິກຕ້ອງພະຍາຍາມແຕ່ງຕັ້ງຈຸດປະສານງານການຜ່ານຂອງສິນຄ້າແຫ່ງຊາດ ທີ່ສາມາດຮອງຮັບທຸກຄຳຖາມ ແລະ ການສະເໜີ ທີ່ຕິດພັນກັບລະບົບການດຳເນີນງານຂອງການຜ່ານສິນຄ້າ ໂດຍສະມາຊິກອື່ນ.

**ມາດຕາ 12: ການຮ່ວມມືດ້ານພາສີ**

**1 ມາດຕະການສົ່ງເສີມຄວາມສອດຄ່ອງ ແລະ ການຮ່ວມມື**

1.1. ສະມາຊິກເຫັນດີຕໍ່ຄວາມສຳຄັນ ໃນການຮັບປະກັນໃຫ້ຜູ້ຄ້າຂາຍຮັບຮູ້ເຖິງການປະຕິບັດໃຫ້ສອດຄ່ອງຕໍ່ພັນທະຂອງເຂົາເຈົ້າ, ທັງຊຸກຍູ້ຄວາມສອດຄ່ອງແບບສະໝັກໃຈ ເພື່ອອະນຸຍາດໃຫ້ຜູ້ນຳເຂົ້າໄດ້ປັບປຸງແກ້ໄຂດ້ວຍຕົນເອງ ໂດຍທີ່ບໍ່ມີການໃສ່ໂທດໃນກໍລະນີທີ່ປະຕິບັດເໝາະສົມ, ແລະ ໃຫ້ນຳໃຊ້ມາດຕະການຄວາມສອດຄ່ອງເພື່ອລິເລີ່ມມາດຕະການທີ່ເຂັ້ມແຂງກວ່າເກົ່າສຳລັບຜູ້ຄ້າຂາຍ ທີ່ບໍ່ທັນປະຕິບັດສອດຄ່ອງເທື່ອ.[11]

1.2. ສະມາຊິກຖືກຊຸກຍູ້ໃຫ້ແບ່ງປັນຂໍ້ມູນກ່ຽວກັບການປະຕິບັດທີ່ດີທີ່ສຸດໃນການຈັດການຄວາມສອດຄ່ອງທາງດ້ານພາສີ, ລວມທັງຄະນະກຳມະການວ່າດ້ວຍການສົ່ງເສີມທາງດ້ານການຄ້າ. ສະມາຊິກຍັງຖືກຊຸກຍູ້ໃຫ້ຮ່ວມມືທາງໃນການແນະນຳທາງດ້ານເຕັກນິກ ຫຼື ຊ່ວຍເຫຼືອໃນການສ້າງຄວາມອາດສາມາດ ເພື່ອຈຸດປະສົງໃນການບໍລິຫານມາດຕະການຄວາມສອດຄ່ອງ ແລະ ສົ່ງເສີມປະສິດທິຜົນຂອງເຂົາເຈົ້າ.

**2. ການແລກປ່ຽນຂໍ້ມູນ**

2.1. ໂດຍອີງຕາມບົດບັນຍັດຂອງມາດຕານີ້ ເມື່ອມີການຮ້ອງຂໍ ສະມາຊິກຕ້ອງແລກປ່ຽນຂໍ້ມູນທີ່ໄດ້ລະບຸໃນວັກ 6 ຂ. ແລະ/ຫຼື ຄ. ເພື່ອຈຸດປະສົງຂອງການຢັ້ງຢືນການແຈ້ງການນຳເຂົ້າ ຫຼື ສົ່ງອອກ ໃນການບົ່ງຊີ້ກໍລະນີທີ່ມີເຫດຜົນພຽງພໍໃນການສົງໄສຄວາມເປັນຈິງ ແລະ ຄວາມຖືກຕ້ອງຂອງການແຈ້ງ.

2.2. ແຕ່ລະສະມາຊິກຕ້ອງໄດ້ແຈ້ງໃຫ້ຄະນະກຳມະການຊາບກ່ຽວກັບຂໍ້ມູນລະອຽດຂອງຈຸດຕິດຕໍ່ເພື່ອການແລກປ່ຽນຂໍ້ມູນນີ້ຂອງຕົນ.

**3 ການຢັ້ງຢືນ**

ສະມາຊິກຕ້ອງເຮັດການຮ້ອງຂໍຂໍ້ມູນພຽງແຕ່ພາຍຫຼັງໄດ້ມີການປະຕິບັດຂັ້ນຕອນການຢັ້ງຢືນ ທີ່ເໝາະສົມຂອງການແຈ້ງການນຳເຂົ້າ ຫຼື ສົ່ງອອກ ແລະ ພາຍຫຼັງທີ່ໄດ້ມີການກວດສອບເອກະສານທີ່ກ່ຽວຂ້ອງແລ້ວ.

**4 ການຮ້ອງຂໍ**

4.1. ສະມາຊິກທີ່ຮ້ອງຂໍຕ້ອງສະໜອງແກ່ສະມາຊິກທີ່ຖືກຮ້ອງຂໍ ຄຳຮ້ອງທີ່ເປັນລາຍລັກອັກສອນໃສ່ເຈ້ຍ ຫຼື ທາງອີເລັກໂຕນິກ ໂດຍນຳໃຊ້ພາສາທີ່ໄດ້ເຫັນດີໃນ ອຄລ ຫຼື ພາສາອື່ນ, ລວມທັງ:

[11] ກິດຈະກຳດັ່ງກ່າວມີຈຸດປະສົງລວມຂອງການຫຼຸດຜ່ອນຄວາມຖີ່ຂອງຄວາມບໍ່ສອດຄ່ອງ, ແລະ ນຳໄປສູ່ການຫຼຸດຜ່ອນຄວາມຕ້ອງການໃນການແລກປ່ຽນຂໍ້ມູນໃນການຕິດຕາມການຈັດຕັ້ງປະຕິບັດ.

ກ. ບັນຫາຕ່າງໆ ທີ່ລວມເຖິງເລກລຳດັບການແຈ້ງການສົ່ງອອກ ທີ່ສອດຄ່ອງກັບການແຈ້ງນຳເຂົ້າໃນບັນຫາ ຕາມຄວາມເໝາະສົມ ແລະ ສາມາດປະຕິບັດໄດ້;

ຂ. ຈຸດປະສົງໃນການຮ້ອງຂໍຂອງສະມາຊິກທີ່ຮ້ອງຂໍການຊອກຫາຂໍ້ມູນ ຫຼື ເອກະສານ, ທີ່ມີຊື່ ແລະ ຂໍ້ມູນລະອຽດຂອງບຸກຄົນໃນການຕິດຕໍ່ກ່ຽວກັບການຮ້ອງຂໍທີ່ກ່ຽວຂ້ອງ ຖ້າຮູ້;

ຄ. ເມື່ອມີການຮຽກຮ້ອງຈາກສະມາຊິກທີ່ຖືກຮ້ອງຂໍ ໃຫ້ມີການສະໜອງການຮັບຮອງ [12] ຂອງການຢັ້ງຢືນເມື່ອ ເໝາະສົມ.

ງ. ຂໍ້ມູນສະເພາະ ຫຼື ເອກະສານທີ່ຖືກຮ້ອງຂໍ;

ຈ. ບົ່ງຊີ້ຫ້ອງການທີ່ເລີ່ມຕົ້ນການຮ້ອງຂໍ;

ສ. ອີງຕາມບົດບັນຍັດຂອງ ກົດໝາຍພາຍໃນ ແລະ ລະບົບນິຕິກຳ ຂອງສະມາຊິກທີ່ຮ້ອງຂໍໃນການຄຸ້ມຄອງການເກັບກຳ, ການປົກປ້ອງ, ການນຳໃຊ້, ການເປີດເຜີຍ, ການຮັກສາໄວ້ ແລະ ການກຳຈັດຂໍ້ມູນທີ່ເປັນຄວາມລັບແລະ ຂໍ້ມູນສ່ວນບຸກຄົນ;

4.2. ຖ້າຫາກສະມາຊິກທີ່ຮ້ອງຂໍບໍ່ໄດ້ຢູ່ໃນຈຸດຢືນໃນການປະຕິບັດໃຫ້ສອດຄ່ອງກັບວັກຍ່ອຍ 4.1 ຕ້ອງໄດ້ລະບຸລະອຽດໃນການຮ້ອງຂໍ.

**5 ການປົກປ້ອງ ແລະ ຄວາມລັບ**

5.1. ໂດຍອີງຕາມມາດຕາ 5.2 ສະມາຊິກທີ່ຮ້ອງຂໍຕ້ອງ:

ກ. ຮັກສາທຸກຂໍ້ມູນ ຫຼື ເອກະສານທີ່ສະໜອງໂດຍສະມາຊິກທີ່ຮ້ອງຂໍຢ່າງເຄັ່ງຄັດໃນການເກັບຄວາມລັບ ແລະ ຢ່າງໜ້ອຍໃຫ້ການປົກປ້ອງ ແລະ ຄວາມລັບ ລະດັບດຽວກັນກັບທີ່ໄດ້ລະບຸພາຍໃຕ້ກົດໝາຍພາຍໃນ ແລະ ລະບົບນິຕິກຳຂອງສະມາຊິກທີ່ຖືກຮ້ອງຂໍ ດັ່ງທີ່ໄດ້ອະທິບາຍພາຍໃຕ້ວັກ 6.1 ຂ. ແລະ 6.1 ຄ.;

ຂ. ສະໜອງຂໍ້ມູນ ຫຼື ເອກະສານ ໃຫ້ພຽງແຕ່ໜ່ວຍງານພາສີທີ່ຄຸ້ມຄອງບັນຫາທີ່ກ່ຽວຂ້ອງ ແລະ ໃນການນຳໃຊ້ຂໍ້ມູນ ຫຼື ເອກະສານສະເພາະແຕ່ຈຸດປະສົງທີ່ໄດ້ລະບຸໃນການຮ້ອງຂໍ ຍົກເວັ້ນສະມາຊິກທີ່ຮ້ຖືກຮ້ອງຂໍເຫັນດີເປັນຢ່າງອື່ນເປັນລາຍລັກອັກສອນ;

ຄ. ບໍ່ເປີດເຜີຍຂໍ້ມູນ ຫຼື ເອກະສານ ໂດຍປາສະຈາກການອະນຸຍາດເປັນລາຍລັກອັກສອນຈາກສະມາຊິກທີ່ຖືກຮ້ອງຂໍ;

ງ. ບໍ່ນຳໃຊ້ຂໍ້ມູນ ຫຼື ເອກະສານ ທີ່ບໍ່ມີການຢັ້ງຢືນຈາກສະມາຊິກທີ່ຖືກຮ້ອງຂໍເປັນປັດໄຈໃນການຕັດສິນໃນການຫຼຸດຜ່ອນຄວາມສົງໄສໃນກໍລະນີໃດໆ;

ຈ. ເຄົາລົບເງື່ອນໄຂສະເພາະກໍລະນີໃດໜຶ່ງ ທີ່ໄດ້ວາງອອກໂດຍສະມາຊິກທີ່ຖືກຮ້ອງຂໍຕໍ່ກັບການຮັກສາ ແລະ ກຳຈັດຂໍ້ມູນ ຫຼື ເອກະສານ ທີ່ເປັນຄວາມລັບ ແລະ ຂໍ້ມູນສ່ວນບຸກຄົນ; ແລະ

ສ. ເມື່ອມີການຮ້ອງຂໍ ໃຫ້ແຈ້ງສະມາຊິກທີ່ຖືກຮ້ອງຂໍກ່ຽວກັບການຕັດສິນໃຈ ແລະ ການປະຕິບັດໃດໆກ່ຽວກັບບັນຫາ ທີ່ເປັນຜົນມາຈາກຂໍ້ມູນ ຫຼື ເອກະສານທີ່ໄດ້ສະໜອງໃຫ້.

5.2. ໂດຍພາຍໃຕ້ກົດໝາຍ ແລະ ລະບົບນິຕິກຳພາຍໃນ ສະມາຊິກທີ່ຮ້ອງຂໍອາດບໍ່ສາມາດປະຕິບັດໃຫ້ສອດຄ່ອງກັບວັກຍ່ອຍໃດໜຶ່ງຂອງ 5.1. ຖ້າເປັນດັ່ງນັ້ນ, ສະມາຊິກທີ່ຮ້ອງຂໍຕ້ອງໄດ້ລະບຸໄວ້ໃນຄຳຮ້ອງຂໍ.

5.3. ສະມາຊິກທີ່ຖືກຮ້ອງຂໍຕ້ອງປະຕິບັດຕໍ່ການຮ້ອງຂໍໃດໜຶ່ງ ແລະ ຢັ້ງຢືນຂໍ້ມູນ, ທີ່ໄດ້ຮັບພາຍໃຕ້ວັກ 4 ຢ່າງໜ້ອຍສຸດຕໍ່ກັບການປົກປ້ອງ ແລະ ຄວາມລັບທີ່ໄດ້ຍິນຍອມໂດຍສະມາຊິກທີ່ຖືກຮ້ອງຂໍ ໃນລະດັບດຽວກັນຂໍ້ມູນທີ່ຄ້າຍຄືກັນຂອງຕົນ.

**6 ການສະໜອງຂໍ້ມູນ**

6.1. ໂດຍອີງຕາມບົດບັນຍັດຂອງມາດຕານີ້ ສະມາຊິກທີ່ຖືກຮ້ອງຂໍ ໂດຍທັນທີຕ້ອງ:

[12] ໃນນີ້ອາດກວມເອົາຂໍ້ມູນທີ່ກ່ຽວຂ້ອງກັບການເຮັດການຢັ້ງຢືນໃນວັກ 12.3. ຂໍ້ມູນດັ່ງກ່າວຕ້ອງຂຶ້ນກັບລະດັບການປົກປ້ອງ ແລະ ຄວາມລັບທີ່ໄດ້ລະບຸໂດຍສະມາຊິກທີ່ດຳເນີນການຢັ້ງຢືນ.

ກ. ຕອບເປັນລາຍລັກອັກສອນຜ່ານເຈ້ຍ ຫຼື ອີເລັກໂທນິກ;

ຂ. ສະໜອງຂໍ້ມູນສະເພາະດັ່ງທີ່ໄດ້ວາງອອກໃນການແຈ້ງການນໍາເຂົ້າ ຫຼື ສົ່ງອອກ, ຫຼື ໃນການແຈ້ງ ໂດຍໃນຂອບເຂດສາມາດປະຕິບັດໄດ້ ພ້ອມກັບການອະທິບາຍລະດັບການປົກປ້ອງ ແລະ ຄວາມລັບ ທີ່ຮຽກຮ້ອງໂດຍສະມາຊິກທີ່ຮ້ອງຂໍ;

ຄ. ຖ້າມີການຮ້ອງຂໍ ການສະໜອງຂໍ້ມູນສະເພາະ ດັ່ງທີ່ໄດ້ວາງອອກໃນເອກະສານຄືດັ່ງລຸ່ມນີ້ ຫຼື ເອກະສານ ທີ່ໄດ້ສົ່ງໃຫ້ເພື່ອການແຈ້ງການນໍາເຂົ້າ ຫຼື ສົ່ງອອກ ໃນຂອບເຂດທີ່ສາມາດປະຕິບັດໄດ້ ເຊັ່ນ: ໃບແຈ້ງລາຄາ, ລາຍການການຫຸ້ມຫໍ່, ໃບແຫຼ່ງກໍາເນີດສິນຄ້າ ແລະ ໃບເກັບເງິນການບັນທຸກ, ໃນໃບສະເໜີທີ່ໄດ້ມີຮັບການຕື່ມຂໍ້ມູນ ທີ່ເປັນເຈ້ຍ ຫຼື ອີເລັກໂທນິກ ພ້ອມກັບການອະທິບາຍຂອງລະດັບການປົກປ້ອງ ແລະ ຄວາມລັບ ທີ່ໄດ້ກໍານົດໂດຍສະມາຊິກທີ່ຮ້ອງຂໍ;

ງ. ການຢືນຢັນວ່າເອກະສານທີ່ໄດ້ສະໜອງໃຫ້ເປັນສະບັບແທ້;

ຈ. ຖ້າຂໍ້ມູນ ຫຼື ການຕອບຕໍ່ການຮ້ອງຂໍ ຢູ່ພາຍໃນ 90 ວັນຈາກວັນທີ່ໄດ້ຮັບການຮ້ອງຂໍ ໃນຂອບເຂດທີ່ເປັນໄປໄດ້.

6.2. ພາຍໃຕ້ກົດໝາຍພາຍໃນ ແລະ ລະບົບນິຕິກໍາຂອງຕົນ ສະມາຊິກທີ່ຖືກຮ້ອງຂໍອາດກໍານົດການຮັບປະກັນກ່ອນປົດບັນຍັດຂໍ້ມູນ ເຊິ່ງຂໍ້ມູນສະເພາະຈະບໍ່ຖືກນໍາໃຊ້ເປັນຫຼັກຖານໃນການສືບສວນດ້ານອາຍາ, ຂັ້ນຕອນສານ, ຫຼື ຂັ້ນຕອນທີ່ບໍ່ແມ່ນພາສີ ໂດຍປາສະຈາກການອະນຸຍາດເປັນລາຍລັກອັກສອນຂອງສະມາຊິກທີ່ຖືກຮ້ອງຂໍ. ຖ້າສະມາຊິກທີ່ຮ້ອງຂໍບໍ່ໄດ້ຢູ່ໃນຈຸດຢືນທີ່ປະຕິບັດສອດຄ່ອງກັບຂໍ້ກໍານົດນີ້ ຄວນແຈ້ງຕໍ່ສະມາຊິກທີ່ຖືກຮ້ອງຂໍ.

**7 ການເລື່ອນ ຫຼື ການປະຕິເສດການຮ້ອງຂໍ**

7.1. ສະມາຊິກທີ່ຖືກຮ້ອງຂໍອາດເລື່ອນ ຫຼື ປະຕິເສດ ສ່ວນໃດໜຶ່ງ ຫຼື ທັງໝົດ ການຮ້ອງຂໍໃນການສະໜອງຂໍ້ມູນ ແລະ ດັ່ງນັ້ນ ຕ້ອງໄດ້ແຈ້ງໃຫ້ສະມາຊິກທີ່ຮ້ອງຂໍກ່ຽວກັບເຫດຜົນຂອງການກະທໍາດັ່ງກ່າວ ເມື່ອ:

ກ. ມັນຂັດກັບຜົນປະໂຫຍດຂອງສາທາລະນະຊົນ ດັ່ງທີ່ໄດ້ສະທ້ອນໃນກົດໝາຍພາຍໃນ ແລະ ລະບົບນິຕິກໍາຂອງສະມາຊິກທີ່ຖືກຮ້ອງຂໍ.

ຂ. ກົດໝາຍພາຍໃນ ແລະ ລະບົບນິຕິກໍາ ປ້ອງກັນການປ່ອຍຂໍ້ມູນ. ໃນກໍລະນີດັ່ງກ່າວ ຕ້ອງໄດ້ສະໜອງສໍາເນົາອ້າງອີງສະເພາະທີ່ກ່ຽວຂ້ອງ ໃຫ້ແກ່ສະມາຊິກທີ່ຮ້ອງຂໍ.

ຄ. ປົດບັນຍັດດ້ານຂໍ້ມູນຈະກີດຂວາງການຈັດຕັ້ງປະຕິບັດກົດໝາຍ ຫຼື ຂັດຂວາງການບໍລິຫານທີ່ຕໍ່ເນື່ອງ ຫຼື ການສືບສວນຂອງສານ, ການລົງໂທດ ຫຼື ການຮ້ອງຟ້ອງ.

ງ. ການກໍານົດໂດຍກົດໝາຍພາຍໃນ ແລະ ລະບົບນິຕິກໍາ ໃຫ້ມີການເຫັນດີຂອງຜູ້ນໍາເຂົ້າ ຫຼື ຜູ້ສົ່ງອອກ ທີ່ຄຸ້ມຄອງການເກັບກໍາ, ການປົກປ້ອງ, ການນໍາໃຊ້, ການເປີດເຜີຍ, ການຮັກສາ ແລະ ການກໍາຈັດຂໍ້ມູນທີ່ເປັນຄວາມລັບ ຫຼື ຂໍ້ມູນສ່ວນບຸກຄົນ ແລະ ທີ່ບໍ່ໄດ້ຮັບການເຫັນດີ.

ຈ. ໄດ້ຮັບການຮ້ອງຂໍຂໍ້ມູນພາຍຫຼັງໝົດກໍານົດໄລຍະເວລາຂອງການກໍານົດດ້ານນິຕິກໍາຂອງສະມາຊິກທີ່ຖືກຮ້ອງຂໍສໍາລັບການຮັກສາຂໍ້ມູນ.

7.2. ໃນກໍລະນີຂອງວັກ 4.2, 5.2 ຫຼື 6.2 ການດໍາເນີນການຂອງການຮ້ອງຂໍດັ່ງກ່າວຕ້ອງເປັນໄປຕາມການຕັດສິນໃຈຂອງສະມາຊິກທີ່ຖືກຮ້ອງຂໍ.

**8 ການຕອບແທນ**

ຖ້າສະມາຊິກທີ່ຮ້ອງຂໍເຫັນວ່າຕົນຈະບໍ່ສາມາດປະຕິບັດໃຫ້ສອດຄ່ອງກັບກໍລະນີຮ້ອງຂໍທີ່ຄ້າຍຄືກັນທີ່ຂໍໂດຍສະມາຊິກທີ່ຖືກຮ້ອງຂໍ, ຫຼື ຖ້າຍັງບໍ່ທັນໄດ້ມີການຈັດຕັ້ງປະຕິບັດມາດຕານີ້ ຕ້ອງໄດ້ແຈ້ງບອກໃນການຮ້ອງຂໍຂອງຕົນ. ການດໍາເນີນການຂອງການຮ້ອງຂໍດັ່ງກ່າວ ຕ້ອງເປັນໄປຕາມການຕັດສິນໃຈຂອງສະມາຊິກທີ່ຖືກຮ້ອງຂໍ.

**9 ຄ່າໃຊ້ຈ່າຍໃນການບໍລິຫານ**

9.1. ສະມາຊິກທີ່ຮ້ອງຂໍຕ້ອງໄດ້ຄຳນຶງເຖິງຊັບພະຍາກອນທີ່ຕິດພັນກັບການຮ້ອງຂໍ ແລະ ຄ່າໃຊ້ຈ່າຍ ທີ່ສະມາຊິກທີ່ຖືກຮ້ອງຂໍໃຊ້ໃນການບໍລິຫານການຕອບການຮ້ອງຂໍຂໍ້ມູນ. ສະມາຊິກທີ່ຮ້ອງຂໍຕ້ອງພິຈາລະນາສັດສ່ວນລະຫວ່າງຜົນປະໂຫຍດທາງດ້ານການເງິນໃນການຕິດຕາມການຮ້ອງຂໍຂອງຕົນ ແລະ ຄວາມພະຍາຍາມຂອງສະມາຊິກທີ່ຖືກຮ້ອງຂໍໃນການສະໜອງຂໍ້ມູນ.

9.2. ຖ້າສະມາຊິກທີ່ຖືກຮ້ອງຂໍໄດ້ຮັບການຮ້ອງຂໍຂໍ້ມູນຈຳນວນໃດໜຶ່ງທີ່ບໍ່ສາມາດຈັດການໄດ້ ຫຼື ການຮ້ອງຂໍຂໍ້ມູນທີ່ຢູ່ໃນຂອບເຂດທີ່ບໍ່ສາມາດຈັດການໄດ້ ຈາກສະມາຊິກໜຶ່ງ ຫຼື ຫຼາຍສະມາຊິກທີ່ຮ້ອງຂໍ, ແລະ ບໍ່ສາມາດປະຕິບັດຕາມການຮ້ອງຂໍພາຍໃນໄລຍະເວລາທີ່ສົມເຫດສົມຜົນ ສະມາຊິກທີ່ຖືກຮ້ອງຂໍດັ່ງກ່າວອາດຮ້ອງຂໍໃຫ້ສະມາຊິກທີ່ຮ້ອງຂໍໜຶ່ງ ຫຼື ຫຼາຍກວ່າໜຶ່ງ ໃຫ້ຈັດບູລິມະສິດ ໂດຍໃຫ້ມີທັດສະນະ ໃນການເຫັນດີຕໍ່ຂໍ້ຈຳກັດດ້ານການປະຕິບັດຕົວຈິງ ເມື່ອມີຂໍ້ຈຳກັດດ້ານຊັບພະຍາກອນ. ໃນກໍລະນີທີ່ບໍ່ມີວິທີການທີ່ເຫັນດີເປັນເອກະພາບ ການດຳເນີນການຂອງການຮຽກຮ້ອງດັ່ງກ່າວຕ້ອງເປັນໄປຕາມການຕັດສິນໃຈຂອງສະມາຊິກທີ່ຖືກຮ້ອງຂໍ ໂດຍອີງຕາມຜົນຂອງການໃຫ້ບູລິມະສິດຂອງເຂົາເຈົ້າ.

**10 ຂໍ້ຈຳກັດ**

ສະມາຊິກທີ່ຖືກຮ້ອງຂໍຕ້ອງບໍ່ຖືກຮຽກຮ້ອງໃຫ້:

ກ. ປ່ຽນແປງຮູບແບບຂອງການແຈ້ງ ແລະ ຂັ້ນຕອນການນຳເຂົ້າ ຫຼື ສົ່ງອອກຂອງເຂົາເຈົ້າ;

ຂ. ຮຽກຮ້ອງເອກະສານອື່ນນອກເໜືອຈາກເອກະສານທີ່ໄດ້ສົ່ງພ້ອມກັບການແຈ້ງການນຳເຂົ້າ ຫຼື ສົ່ງອອກ ດັ່ງທີ່ໄດ້ລະບຸໄວ້ໃນວັກ 6 ຄ.;

ຄ. ລິເລີ່ມການຮ້ອງຂໍ ເພື່ອເອົາຂໍ້ມູນ;

ງ. ປ່ຽນແປງໄລຍະເວລາຂອງການຮັກສາຂໍ້ມູນດັ່ງກ່າວ;

ຈ. ສະເໜີໃຫ້ນຳໃຊ້ເອກະສານທີ່ເປັນເຈ້ຍ ເມື່ອໄດ້ມີການນຳໃຊ້ຮູບແບບອີເລັກໂຕນິກແລ້ວ;

ສ. ແປຂໍ້ມູນ;

ຊ. ຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນ;

ຍ. ສະໜອງຂໍ້ມູນທີ່ມີອະຄະຕິຕໍ່ຜົນປະໂຫຍດທາງດ້ານການຄ້າທີ່ຊອບທຳຂອງວິສາຫະກິດໃດໜຶ່ງ, ທັງພາກລັດ ຫຼື ເອກະຊົນ.

**11 ການນຳໃຊ້ທີ່ບໍ່ໄດ້ຮັບອະນຸຍາດ ຫຼື ການເປີດເຜີຍ**

11.1. ໃນກໍລະນີທີ່ມີການລະເມີດເງື່ອນໄຂຂອງການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນທີ່ແລກປ່ຽນພາຍໃຕ້ມາດຕານີ້ ສະມາຊິກທີ່ຮ້ອງຂໍ ທີ່ໄດ້ຮັບຂໍ້ມູນຕ້ອງສື່ສານທັນທີກັບສະມາຊິກທີ່ຖືກຮ້ອງຂໍຂໍ້ມູນ ກ່ຽວກັບລາຍລະອຽດຂອງການນຳໃຊ້ທີ່ບໍ່ໄດ້ຮັບອະນຸຍາດ ຫຼື ການເປີດເຜີຍດັ່ງກ່າວ, ແລະ:

ກ. ນຳໃຊ້ມາດຕະການທີ່ຈຳເປັນໃນການແກ້ໄຂການລະເມີດ;

ຂ. ນຳໃຊ້ມາດຕະການໃນການປ້ອງກັນການລະເມີດໃນອະນາຄົດ; ແລະ

ຄ. ແຈ້ງສະມາຊິກທີ່ຖືກຮ້ອງຂໍກ່ຽວກັບມາດຕະການທີ່ໄດ້ຖືກນຳໃຊ້ພາຍໃຕ້ວັກຍ່ອຍ ກ. ແລະ ຂ. ຂ້າງເທິງ.

11.2. ສະມາຊິກທີ່ຖືກຮ້ອງຂໍອາດເລື່ອນພັນທະຂອງຕົນຕໍ່ສະມາຊິກທີ່ຮ້ອງຂໍພາຍໃຕ້ມາດຕານີ້ ຈົນກວ່າຈະມີການນຳໃຊ້ມາດຕະການທີ່ໄດ້ວາງອອກໃນວັກ 11.1.

**12 ສັນຍາສອງຝ່າຍ ແລະ ພາກພື້ນ**

12.1. ບັນທຶກໄວ້ວ່າ ໃນມາດຕານີ້ຕ້ອງປ້ອງກັນສະມາຊິກຈາກການເຂົ້າຮ່ວມ ຫຼື ຮັກສາ ສັນຍາສອງຝ່າຍ, ຫຼາຍຝ່າຍແບບສະໝັກໃຈ ຫຼື ພາກພື້ນ ໃນການແບ່ງປັນ ຫຼື ການແລກປ່ຽນຂໍ້ມູນ ແລະ ຂ່າວສານດ້ານພາສີ ລວມທັງທີ່ເປັນພື້ນຖານທີ່ຮັບປະກັນ ແລະ ໄວວາ ເຊັ່ນ: ພື້ນຖານອັດຕະໂນມັດ ຫຼື ການມາຮອດກ່ອນເວລາຂອງສິນຄ້າ.

12.2. ບັນທຶກໄວ້ວ່າ ໃນມາດຕານີ້ຕ້ອງຖືກຕີຄວາມ ເພື່ອດັດແປງ ຫຼື ກະທົບສິດ ຫຼື ພັນທະຂອງສະມາຊິກພາຍໃຕ້ສັນຍາສອງຝ່າຍ, ຫຼາຍຝ່າຍແບບສະໝັກໃຈ ຫຼື ພາກພື້ນ ດັ່ງກ່າວ ຫຼື ເພື່ອຄຸ້ມຄອງການແລກປ່ຽນຂໍ້ມູນ ແລະ ຂ່າວສານດ້ານພາສີພາຍໃຕ້ສັນຍາອື່ນໆ.

**ມາດຕາ 13: ການຕົກລົງທາງດ້ານສະຖາບັນ**

**1 ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ**

1.1. ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າໄດ້ຖືກສ້າງຕັ້ງ.

1.2. ຄະນະກຳມະການຕ້ອງໄດ້ມີການເປີດກວ້າງໃຫ້ມີການເຂົ້າຮ່ວມຂອງທຸກສະມາຊິກ ແລະ ຕ້ອງເລືອກປະທານຂອງຕົນ. ຄະນະກຳມະການຕ້ອງໄດ້ພົບປະຕາມຄວາມຕ້ອງການ ແລະ ວາດພາບໂດຍບົດບັນຍັດທີ່ກ່ຽວຂ້ອງຂອງສັນຍາສະບັບນີ້, ແຕ່ບໍ່ໜ້ອຍກວ່າປີລະເທື່ອ ສຳລັບຈຸດປະສົງໃນການສ້າງໂອກາດໃຫ້ສະມາຊິກໃນການປຶກສາຫາລືກ່ຽວກັບບັນຫາຕ່າງໆທີ່ຕິດພັນກັບການດຳເນີນງານຂອງສັນຍາສະບັບນີ້ ຫຼື ການສົ່ງເສີມຈຸດປະສົງຂອງຕົນ. ຄະນະກຳມະການຕ້ອງໄດ້ປະຕິບັດຄວາມຮັບຜິດຊອບດັ່ງກ່າວ ດັ່ງທີ່ໄດ້ມີການແຕ່ງຕັ້ງ ພາຍໃຕ້ສັນຍາສະບັບນີ້ ຫຼື ໂດຍບັນດາສະມາຊິກ. ຄະນະກຳມະການຕ້ອງໄດ້ສ້າງລະບຽບການຂອງຂັ້ນຕອນຂອງຕົນ.

1.3. ຄະນະກຳມະການອາດສ້າງຕັ້ງອົງການຍ່ອຍຫາກຖືກຮຽກຮ້ອງ. ທຸກອົງການຍ່ອຍດັ່ງກ່າວຕ້ອງລາຍງານຕໍ່ຄະນະກຳມະການ.

1.4. ຄະນະກຳມະການຕ້ອງພັດທະນາຂັ້ນຕອນສຳລັບການແບ່ງປັນຂໍ້ມູນ ແລະ ການປະຕິບັດທີ່ດີທີ່ສຸດ ຂອງສະມາຊິກ ດັ່ງເຫັນເໝາະສົມ.

1.5. ຄະນະກຳມະການຕ້ອງຮັກສາການຕິດຕໍ່ທີ່ສະໜິດແໜ້ນກັບອົງການຈັດຕັ້ງສາກົນອື່ນໆ ທີ່ຢູ່ໃນຂົງເຂດການອຳນວຍຄວາມສະດວກທາງດ້ານການຄ້າ ກໍຄື ອົງການພາສີໂລກ ໂດຍໃຫ້ມີຈຸດປະສົງຂອງການຮັບປະກັນຄຳແນະນຳທີ່ດີທີ່ສຸດທີ່ມີໃນການຈັດຕັ້ງປະຕິບັດ ແລະ ບໍລິຫານສັນຍາສະບັບນີ້ ແລະ ເພື່ອການຮັບປະກັນການຫຼີກລ່ຽງການຊໍ້າຊ້ອນທີ່ບໍ່ຈຳເປັນຂອງຄວາມພະຍາຍາມ. ໃນນີ້, ຄະນະກຳມະການອາດເຊີນຜູ້ຕາງໜ້າຂອງອົງການດັ່ງກ່າວ ຫຼື ອົງການຍ່ອຍຂອງເຂົາເຈົ້າ ເພື່ອ:

ກ. ເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການ; ແລະ

ຂ. ປຶກສາຫາລືກ່ຽວກັບບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດສັນຍາສະບັບນີ້.

1.6. ຄະນະກຳມະການຕ້ອງທົບທວນການດຳເນີນງານ ແລະ ການຈັດຕັ້ງປະຕິບັດສັນຍາສະບັບນີ້ 4 ປີ ຈາກມື້ທີ່ສັນຍາສະບັບນີ້ ມີຜົນສັກສິດ ແລະ ເປັນໄລຍະໃນພາຍຫຼັງ.

1.7. ສະມາຊິກຖືກຊຸກຍູ້ໃຫ້ຕັ້ງຄຳຖາມຕໍ່ຄະນະກຳມະການ ທີ່ຕິດພັນກັບບັນຫາການຈັດຕັ້ງປະຕິບັດ ແລະ ຜົນກະທົບ ຂອງສັນຍາສະບັບນີ້.

1.8. ຄະນະກຳມະການຕ້ອງຊຸກຍູ້ ແລະ ອຳນວຍຄວາມສະດວກໃນການປຶກສາຫາລືສະເພາະກິດ ພາຍໃນບັນດາສະມາຊິກກ່ຽວກັບບັນຫາສະເພາະພາຍໃຕ້ສັນຍາສະບັບນີ້ ໃນທັດສະນະທີ່ໃຫ້ໄດ້ຮັບຄວາມພຶງພໍໃຈຂອງການແກ້ໄຂບັນຫາທີ່ເປັນເອກະພາບທັນທີ.

**2 ຄະນະກຳມະການລະດັບຊາດວ່າດ້ວຍການອຳນວຍຄວາມສະດວກດ້ານການຄ້າ**

ແຕ່ລະສະມາຊິກຕ້ອງສ້າງຕັ້ງ ແລະ/ຫຼື ຮັກສາຄະນະກຳມະການລະດັບຊາດວ່າດ້ວຍການອຳນວຍຄວາມສະດວກດ້ານການຄ້າ ຫຼື ອອກແບບກົນໄກທີ່ມີຢູ່ໃນການອຳນວຍຄວາມສະດວກທັງການປະສານງານພາຍໃນ ແລະ ການຈັດຕັ້ງປະຕິບັດບົດບັນຍັດຂອງສັນຍາສະບັບນີ້.

**ພາກທີ II**

**ບັນດາບົດບັນຍັດ ວ່າດ້ວຍວິທີການປະຕິບັດແບບພິເສດ ແລະ ແຕກຕ່າງ ສຳລັບປະເທດກຳລັງພັດ ທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ**

## 1 ບັນດາຫຼັກການທົ່ວໄປ

1.1. ບັນດາບົດບັນຍັດທີ່ນອນໃນ ມາດຕາ 1 ເຖິງ 12 ຂອງສັນຍາສະບັບນີ້ ຈະຖືກຈັດຕັ້ງປະຕິບັດ ໂດຍບັນດາປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ທີ່ສອດຄ່ອງກັບພາກນີ້, ເຊິ່ງອີງໃສ່ບັນດາຮູບແບບທີ່ຖືກຕົກລົງເຫັນດີໃນ ເອກະສານຊ້ອນທ້າຍ D ຂອງຂອບສັນຍາ (WT/L/579) ເດືອນກໍລະກົດ 2004 ແລະ ຫຍໍ້ໜ້າທີ 33 ແລະ ເອກະສານຊ້ອນທ້າຍ E ຂອງ ຖະແຫຼງການກອງປະຊຸມລັດຖະມົນຕີ ທີ່ຮ່ອງກົງ (WT/MIN(05)/DEC).

1.2. ການຊ່ວຍເຫຼືອ ແລະ ສະໜັບສະໜູນແກ່ການສ້າງຂີດຄວາມອາດສາມາດ [13] ຄວນຖືກສະໜອງໃຫ້ເພື່ອຊ່ວຍເຫຼືອປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ໃນການຈັດຕັ້ງປະຕິບັດບັນດາບົດບັນ ຍັດຂອງສັນຍານີ້, ໂດຍສອດຄ່ອງກັບຄວາມເປັນຈິງ ແລະ ຄວາມອາດສາມາດ. ຂອບເຂດ ແລະ ໄລຍະເວລາຂອງການຈັດຕັ້ງປະຕິບັດບັນດາບົດບັນຍັດຂອງສັນຍາດັ່ງກ່າວ ຈະກ່ຽວຂ້ອງກັບຄວາມອາດສາມາດໃນການຈັດຕັ້ງປະຕິບັດ ຂອງປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ ເປັນສະມາຊິກ. ໃນຄະນະທີ່ປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກຍັງສືບຕໍ່ຂາດຄວາມອາດສາມາດທີ່ຈໍາເປັນ, ການຈັດຕັ້ງປະຕິບັດຂອງບັນດາບົດບັນຍັດທີ່ກ່ຽວຂ້ອງຈະບໍ່ຖືກຮຽກຮ້ອງຈົນກະທັ້ງຄວາມອາດສາມາດຂອງການຈັດຕັ້ງປະຕິບັດໄດ້ຮັບການຮຽກຮ້ອງ.

1.3. ປະເທດດ້ອຍພັດທະນາທີ່ເປັນສະມາຊິກ ຈະຖືກຮຽກຮ້ອງພຽງແຕ່ຮັບເອົາຂໍ້ຜູກພັນ ທີ່ເໝາະສົມກັບລະດັບການພັດທະນາ, ການເງິນ ແລະ ຄວາມຈໍາເປັນດ້ານການຄ້າຂອງຕົນ ຫຼື ອີງໃສ່ຄວາມອາດສາມາດທາງດ້ານການບໍລິຫານ ແລະ ສະຖາບັນຕ່າງໆ.

1.4. ບັນດາຫຼັກການເຫຼົ່ານີ້ຈະຖືກນໍາໃຊ້ ໂດຍຜ່ານບັນດາບົດບັນຍັດທີ່ລະບຸໄວ້ໃນ ພາກທີ II.

## 2. ໝວດຂອງບົດບັນຍັດ

2.1. 3 ໝວດຂອງບົດບັນຍັດ

a. ໝວດ A ລວມມີບັນດາບົດບັນຍັດ ປະເທດກໍາລັງພັດທະນາ ຫຼື ດ້ອຍພັດທະນາທີ່ເປັນສະມາຊິກ ກໍານົດການຈັດຕັ້ງປະຕິບັດຕໍ່ກັບການມີຜົນບັງຄັບໃຊ້ຂອງສັນຍານີ້ ຫຼື ໃນກໍລະນີປະເທດດ້ອຍພັດທະນາທີ່ເປັນສະມາຊິກແມ່ນພາຍໃນ 1 ປີ ຫຼັງຈາກສັນຍາມີຜົນບັງຄັບໃຊ້, ເຊິ່ງໄດ້ລະບຸໄວ້ໃນຫຍໍ້ໜ້າທີ 3.

b. ໝວດ B ລວມມີບັນດາບົດບັນຍັດ ປະເທດກໍາລັງພັດທະນາ ຫຼື ດ້ອຍພັດທະນາທີ່ເປັນສະມາຊິກ ກໍານົດການຈັດຕັ້ງປະຕິບັດ ໃນວັນທີຫຼັງຈາກໄລຍະເວລາຂ້າມຜ່ານ ຕາມການມີຜົນບັງຄັບໃຊ້ຂອງສັນຍາສະບັບນີ້, ເຊິ່ງໄດ້ລະບຸໄວ້ໃນຫຍໍ້ໜ້າທີ 4.

c. ໝວດ C ລວມມີບັນດາບົດບັນຍັດ ປະເທດກໍາລັງພັດທະນາ ຫຼື ດ້ອຍພັດທະນາທີ່ເປັນສະມາຊິກ ກໍານົດການຈັດຕັ້ງປະຕິບັດ ໃນວັນທີຫຼັງຈາກໄລຍະເວລາຂ້າມຜ່ານ ຕາມການມີຜົນບັງຄັບໃຊ້ຂອງສັນຍາສະບັບນີ້ ແລະ ຄວາມຮຽກຮ້ອງຕ້ອງການຂອງການສ້າງຂີດຄວາມສາມາດ ໃນການຈັດຕັ້ງປະຕິບັດຜ່ານບົດບັນຍັດຂອງການຊ່ວຍເຫຼືອ ແລະ ສະໜັບສະໜູນທາງດ້ານການສ້າງຄວາມອາດສາມາດ ເຊິ່ງໄດ້ລະບຸໄວ້ໃນຫຍໍ້ໜ້າທີ 4.

2.2. ແຕ່ລະປະເທດກໍາລັງພັດທະນາ ຫຼື ດ້ອຍພັດທະນາທີ່ເປັນສະມາຊິກ ຈະກໍານົດດ້ວຍຕົນເອງ ໂດຍອີງໃສ່ພື້ນຖານຄວາມເປັນຈິງຂອງຕົນເອງ, ບັນດາບົດບັນຍັດແມ່ນລວມໃນແຕ່ລະໝວດ A, B ແລະ C.

---

[13] ບັນດາຈຸດປະສົງຂອງສັນຍາສະບັບນີ້, "ການຊ່ວຍເຫຼືອ ແລະ ສະໜັບສະໜູນ" ອາດຈະຢູ່ໃນຮູບແບບດ້ານເຕັກນິກ, ການເງິນ ຫຼື ຮູບແບບຂອງການຕົກລົງການຊ່ວຍເຫຼືອຮ່ວມກັນ.

## 3. ການແຈ້ງ ແລະ ການຈັດຕັ້ງປະຕິບັດໝວດA

3.1. ອີງໃສ່ການມີຜົນບັງຄັບໃຊ້ຂອງສັນຍາສະບັບນີ້, ແຕ່ລະປະເທດກຳລັງພັດທະນາທີ່ເປັນສະມາ ຊິກຈະຈັດຕັ້ງປະຕິບັດບັນດາຂໍ້ຜູກໝັດຢູ່ໃນໝວດ A. ບັນດາຂໍ້ຜູກໝັດເຫຼົ່ານັ້ນໄດ້ກຳນົດພາຍໃຕ້ໝວດ A ຈະເປັນພາກສ່ວນສຳຄັນຂອງສັນຍາສະບັບນີ້.

3.2. ປະເທດດ້ອຍພັດທະນາທີ່ເປັນສະມາຊິກ ອາດແຈ້ງໃຫ້ຄະນະກຳມະການຂອງບົດບັນຍັດວ່າ ພວກເຂົາໄດ້ກຳນົດໃນໝວດ A ເປັນເວລາ 1 ປີ ຫຼັງຈາກການມີຜົນບັງຄັບໃຊ້ຂອງສະຍາສະບັບນີ້. ບັນດາຂໍ້ຜູກໝັດ ຂອງແຕ່ລະປະເທດພັດທະນາແລ້ວທີ່ເປັນສະມາຊິກ ໄດ້ກຳນົດໄວ້ໃນໝວດ A ຈະເປັນພາກສ່ວນສຳຄັນຂອງສັນຍາສະບັບນີ້.

## 4. ການແຈ້ງວັນທີຂອງການຈັດຕັ້ງປະຕິບັດໝວດB ແລະ C

4.1. ອີງໃສ່ບັນດາບົດບັນຍັດ ທີ່ປະເທດກຳລັງພັດທະນາທີ່ເປັນສະມາຊິກ ທີ່ບໍ່ຖືກກຳນົດໃນໝວດ A, ປະເທດສະມາຊິກອາດເຮັດໃຫ້ການຈັດຕັ້ງປະຕິບັດຊັກຊ້າ ທີ່ສອດຄ່ອງກັບຂັ້ນຕອນທີ່ລະບຸໄວ້ໃນຫຍໍ້ໜ້ານີ້.

ປະເທດກຳລັງພັດທະນາທີ່ເປັນສະມາຊິກໃນໝວດ B

a. ອີງໃສ່ຜົນບັງຄັບໃຊ້ຂອງສັນຍາສະບັບນີ້, ແຕ່ລະປະເທດກຳລັງພັດທະນາຈະແຈ້ງໃຫ້ຄະນະກຳມະການບົດບັນຍັດວ່າ ພວກເຂົາໄດ້ກຳນົດໃນໝວດ B ແລະ ວັນທີຂອງການຈັດຕັ້ງປະຕິບັດ. [14]

b. ບໍ່ໃຫ້ຊ້າກ່ອນ 1 ປີ ຫຼັງຈາກການມີຜົນບັງຄັບໃຊ້ຂອງສັນຍາສະບັບນີ້, ແຕ່ລະປະເທດກຳລັງພັດທະນາທີ່ເປັນສະມາຊິກ ຈະແຈ້ງໃຫ້ຄະນະກຳມະການ ກ່ຽວກັບວັນທີຂອງການຈັດຕັ້ງປະຕິບັດຂອງບັນດາບົດບັນຍັດ ທີ່ໄດ້ກຳນົດໄວ້ໃນໝວດ B. ຫາກບັນດາປະເທດພັດ ທະນາທີ່ເປັນສະມາຊິກ, ກ່ອນກຳນົດເສັ້ນຕາຍ, ທີ່ຕ້ອງການເວລາເພີ້ມເຕີມໃນການແຈ້ງວັນທີຈັດຕັ້ງປະຕິບັດ, ປະເທດສະມາຊິກອາດຮຽກຮ້ອງໃຫ້ຄະນະກຳມະການ ຕໍ່ໄລຍະວັນທີຂອງການແຈ້ງອອກໄປ.

ປະເທດກຳລັງພັດທະນາທີ່ເປັນສະມາຊິກໃນໝວດ C

c. ອີງໃສ່ຜົນບັງຄັບໃຊ້ຂອງສັນຍາສະບັບນີ້, ແຕ່ລະປະເທດກຳລັງພັດທະນາຈະແຈ້ງໃຫ້ຄະນະກຳມະການບົດບັນຍັດວ່າ ພວກເຂົາໄດ້ກຳນົດໃນໝວດ C ແລະ ວັນທີຂອງການຈັດຕັ້ງປະຕິບັດ. ເພື່ອຈຸດປະສົງຂອງຄວາມໂປ່ງໃສ, ການແຈ້ງທີ່ໄດ້ສົ່ງໃຫ້ຈະລວມເອົາຂໍ້ມູນຂ່າວສານ ວ່າດ້ວຍການຊ່ວຍເຫຼືອ ແລະ ການສະໜັບສະໜູນ ສຳລັບການສ້າງຂີດຄວາມສາມາດ ເຊິ່ງປະເທດສະມາຊິກຕ້ອງການເພື່ອການຈັດຕັ້ງປະຕິບັດ[15].

d. ພາຍໃນ 1 ປີ ຫຼັງຈາກຜົນບັງຄັບໃຊ້ຂອງສັນຍາສະບັບນີ້, ປະເທດກຳລັງພັດທະນາ ແລະ ຜູ້ໃຫ້ທຶນທີ່ເປັນສະມາຊິກກ່ຽວຂ້ອງ, ບັນດາການຈັດການທີ່ມີຢູ່ແລ້ວ, ແຈ້ງການອີງໃສ່ຫຍໍ້ໜ້າ 10.1 ແລະ ຂໍ້ມູນຂ່າວສານທີ່ໄດ້ສົ່ງໃຫ້ ອີງຕາມຫຍໍ້ໜ້າຍ່ອຍ c ຂ້າງເທິງ ຈະສະ ໜອງຂໍ້ມູນຂ່າວສານໃຫ້ຄະນະກຳມະການ ໃນການຈັດການທີ່ຈຳເປັນເພື່ອສະໜອງການຊ່ວຍເຫຼືອ ແລະ ສະໜັບສະໜູນໃຫ້ແກ່ການສ້າງຂີດຄວາມສາມາດໃນໝວດ C. [16] ບັນດາປະເທດກຳລັງພັດທະນາທີ່ເຂົ້າຮ່ວມສັນຍາ ຈະແຈ້ງ

[14] ແຈ້ງການທີ່ໄດ້ສົ່ງໃຫ້ອາດລວມເອົາຂໍ້ມູນເພີ້ມເຕີມ ທີ່ໄດ້ກຳນົດຄວາມເຂົ້າໃຈຂອງປະເທດສະມາຊິກວ່າເໝາະສົມ. ປະເທດສະມາຊິກຖືກຊຸກຍູ້ໃຫ້ສະໜອງຂໍ້ມູນ ກ່ຽວກັບອົງການຈັດຕັ້ງ/ນິຕິບຸກຄົນພາຍໃນທີ່ຮັບຜິດຊອບການຈັດຕັ້ງປະຕິບັດ.

[15] ປະເທດສະມາຊິກອາດລວມເອົາຂໍ້ມູນຂ່າວສານວ່າດ້ວຍບັນດາແຜນ ຫຼື ໂຄງການການຈັດຕັ້ງປະຕິບັດການອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ; ອົງການຈັດຕັ້ງ/ນິຕິບຸກຄົນທີ່ຮັບຜິດຊອບການຈັດຕັ້ງປະຕິບັດ; ແລະ ບັນດາຜູ້ໃຫ້ທຶນເຊິ່ງປະເທດສະມາຊິກ ອາດມີການຈັດການໃນການໃຫ້ການຊ່ວຍເຫຼືອຢູ່ແລ້ວ.

[16] ການຈັດການດັ່ງກ່າວຈະຂຶ້ນກັບເງື່ອນໄຂທີ່ຖືກຕົກລົງທັງສອງຝ່າຍ, ອາດເປັນທັງສອງຝ່າຍ ຫຼື ໂດຍຜ່ານບັນດາອົງການ ຈັດຕັ້ງສາກົນທີ່ເໝາະສົມ, ໂດຍສອດຄ່ອງກັບຫຍໍ້ໜ້າ 9.3.

ກ່ຽວກັບການຈັດການນັ້ນໃຫ້ຄະນະກຳມະການໂດຍທັນທີ. ຄະນະກຳມະການຈະເຊີນຜູ້ໃຫ້ທຶນທີ່ບໍ່ເປັນສະມາຊິກ ເພື່ອສະໜອງຂໍ້ມູນການຈັດການທີ່ມີຢູ່ແລ້ວ ຫຼື ສະຫຼຸບ.

e. ພາຍໃນ 18 ເດືອນ ຈາກວັນທີຂອງບົດບັນຍັດຂອງຂໍ້ມູນທີ່ຖືກກຳນົດໃນຫຍໍ້ໜ້າຍ່ອຍ 4.1 d., ສະມາຊິກຂອງຜູ້ໃຫ້ທຶນທີ່ກ່ຽວຂ້ອງ ແລະ ບັນດາປະເທດກຳລັງພັດທະນາທີ່ເປັນສະມາຊິກ ຈະແຈ້ງຄວາມຄືບໜ້າໃຫ້ຄະນະກຳມະການ ໃນບົດບັນຍັດການຊ່ວຍເຫຼືອ ແລະ ການສະໜັບສະໜູນ. ໃນຄະນະດຽວກັນ, ແຕ່ລະປະເທດກຳລັງພັດທະນາທີ່ເປັນສະມາຊິກ ຈະແຈ້ງລາຍລະອຽດວັນທີຂອງການຈັດຕັ້ງປະຕິບັດ.

4.2. ອີງໃສ່ບັນດາບົດບັນຍັດເຫຼົ່ານັ້ນ ປະເທດດ້ອຍພັດທະນາທີ່ເປັນສະມາຊິກບໍ່ໄດ້ກຳນົດພາຍໃຕ້ ໝວດ A, ບັນດາປະເທດດ້ອຍພັດທະນາທີ່ເປັນສະມາຊິກ ອາດເຮັດໃຫ້ການຈັດຕັ້ງປະຕິບັດຫຼ້າຊ້າ ທີ່ສອດຄ່ອງກັບຂັ້ນຕອນທີ່ລະບຸໄວ້ໃນຫຍໍ້ໜ້ານີ້.

ປະເທດດ້ອຍພັດທະນາທີ່ເປັນສະມາຊິກໃນໝວດ B

a. ປະເທດດ້ອຍພັດທະນາທີ່ເປັນສະມາຊິກ ຈະແຈ້ງໃຫ້ຄະນະກຳມະການບັນດາບົດບັນຍັດທີ່ມອບໃນໝວດ B ແລະ ແຈ້ງວັນທີແຈ້ງຕອບການຈັດຕັ້ງປະຕິບັດຂອງບັນດາບົດບັນຍັດເຫຼົ່ານີ້ ບໍ່ໃຫ້ຊ້າກວ່າ 1 ປີ ຫຼັງຈາກສັນຍາສະບັບນີ້ມີຜົນບັງຄັບໃຊ້, ໂດຍອີງໃສ່ການຜ່ອນ ຜັນສູງສຸດ ທີ່ມີໃຫ້ແກ່ບັນດາປະເທດດ້ອຍພັດທະນາທີ່ເປັນສະມາຊິກ.

b. ແຕ່ລະປະເທດດ້ອຍພັດທະນາທີ່ເປັນສະມາຊິກ ຈະແຈ້ງໃຫ້ຄະນະກຳມະການເພື່ອຢືນຢັນການກຳນົດຂອງບັດດາບົດບັນຍັດ ແລະ ແຈ້ງວັນທີຂອງການຈັດຕັ້ງປະຕິບັດ ບໍ່ໃຫ້ຊ້າກວ່າ 2 ປີ ຫຼັງຈາກວັນທີ່ການແຈ້ງໄດ້ຖືກກຳນົດພາຍໃຕ້ຫຍໍ້ໜ້າຍ່ອຍ a ຂ້າງເທິງ. ຖ້າຫາກປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ກ່ອນກຳນົດເສັ້ນຕາຍນີ້, ເຊື່ອວ່າພວກເຂົາຍັງຕ້ອງການເວລາເພີ້ມເຕີມເພື່ອແຈ້ງວັນທີແຈ້ງ, ປະເທດສະມາຊິກຈະຮຽກຮ້ອງໃຫ້ຄະນະກຳມະການຕໍ່ໄລຍະໃນການແຈ້ງວັນທີຈັດຕັ້ງປະຕິບັດສັນ ຍາ.

ປະເທດດ້ອຍພັດທະນາທີ່ເປັນສະມາຊິກໃນໝວດ C

c. ສຳລັບຈຸດປະສົງຄວາມໂປ່ງໃສ ແລະ ເພື່ອອຳນວຍຄວາມສະດວກການຈັດການກັບບັນດາ ຜູ້ໃຫ້ທຶນ, 1 ປີ ຫຼັງຈາກສັນຍາດັ່ງກ່າວມີຜົນບັງຄັບໃຊ້ ແຕ່ລະປະເທດດ້ອຍພັດທະນາທີ່ເປັນສະມາຊິກຈະແຈ້ງໃຫ້ຄະນະກຳມະການຂອງບົດບັນຍັດ ທີ່ກຳນົດໄວ້ໃນໝວດ C, ໂດຍອີງໃສ່ການຜ່ອນຜັນສູງສຸດ ທີ່ມີໃຫ້ແກ່ບັນດາປະເທດດ້ອຍພັດທະນາທີ່ເປັນສະມາຊິກ.

d. ແຕ່ລະປະເທດດ້ອຍພັດທະນາ ທີ່ເປັນສະມາຊິກ ຈະແຈ້ງຂໍ້ມູນຂ່າວສານການຊ່ວຍເຫຼືອ ແລະ ການສະໜັບສະໜູນແກ່ການສ້າງຂີດຄວາມສາມາດ ທີ່ປະເທດສະມາຊິກຕ້ອງການເພື່ອຈັດຕັ້ງປະຕິບັດ 1 ຫຼັງຈາກວັນທີໄດ້ຖືກກຳນົດໃນຫຍໍ້ໜ້າຍ່ອຍ c. ຂ້າງເທິງ.[17]

e. ແຕ່ລະປະເທດດ້ອຍພັດທະນາທີ່ເປັນສະມາຊິກ ແລະ ບັນດາສະມາຊິກຜູ້ໃຫ້ທຶນທີ່ກ່ຽວຂ້ອງພາຍໃນ 2 ປີ ຫຼັງຈາກແຈ້ງການພາຍໃຕ້ຫຍໍ້ໜ້າຍ່ອຍ d. ຂ້າງເທິງ, ໂດຍອີງໃສ່ຂໍ້ມູນຂ່າວສານທີ່ໄດ້ສົ່ງໃຫ້ອີງຕາມຫຍໍ້ໜ້າຍ່ອຍ d. ຂ້າງເທິງ ຈະສະໜອງຂໍ້ມູນຂ່າວສານໃຫ້ຄະນະກຳມະການ ກ່ຽວກັບການຈັດການທີ່ຈຳເປັນເພື່ອສະໜອງການຊ່ວຍເຫຼືອ ແລະ ສະໜັບສະໜູນໃຫ້ແກ່ການສ້າງຂີດຄວາມ

[17] ບັນດາປະເທດສະມາຊິກ ອາດລວມເອົາຂໍ້ມູນຂ່າວສານວ່າດ້ວຍບັນດາແຜນ ຫຼື ໂຄງການການຈັດຕັ້ງປະຕິບັດການອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ ແລະ ຂໍ້ມູນຂ່າວສານວ່າດ້ວຍອົງການຈັດຕັ້ງ/ນິຕິບຸກຄົນທີ່ຮັບຜິດຊອບການຈັດ ຕັ້ງປະຕິບັດ; ແລະ ບັນດາຜູ້ໃຫ້ທຶນເຊິ່ງປະເທດສະມາຊິກ ອາດມີການຈັດການໃນການໃຫ້ການຊ່ວຍເຫຼືອຢູ່ແລ້ວ.

ສາມາດໃນໝວດ C.[18] ບັນດາປະເທດດ້ອຍພັດທະນາ ທີ່ເຂົ້າຮ່ວມສັນຍາຈະແຈ້ງໃຫ້ຄະນະກຳມະການ ໃນການຈັດການດັ່ງກ່າວໂດຍທັນທີ. ບັນດາປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ໃນຄະນະດຽວກັນຈະແຈ້ງວັນທີຂອງການຈັດຕັ້ງປະຕິບັດຂໍ້ຜູກພັນໝວດ C ທີ່ຮັບຜິດຊອບໂດຍການຊ່ວຍເຫຼືອດັ່ງກ່າວ. ຄະນະກຳມະການຈະເຊີນຜູ້ໃຫ້ທຶນທີ່ບໍ່ເປັນສະມາຊິກ ເພື່ອສະໜອງຂໍ້ມູນການຈັດ ການທີ່ມີຢູ່ແລ້ວ ຫຼື ບົດສະຫຼຸບ.

f. ພາຍໃນ 18 ເດືອນ ຈາກວັນທີຂອງບົດບັນຍັດຂອງຂໍ້ມູນທີ່ຖືກກຳນົດໃນຫຍໍ້ໜ້າຍ່ອຍ 4.2 e., ສະມາຊິກຂອງຜູ້ໃຫ້ທຶນທີ່ກ່ຽວຂ້ອງ ແລະ ບັນດາປະເທດດ້ອຍພັດທະນາທີ່ເປັນສະມາຊິກຈະແຈ້ງຄວາມຄືບໜ້າໃຫ້ຄະນະກຳມະການ ໃນບົດບັນຍັດການຊ່ວຍເຫຼືອ ແລະ ການສະໜັບສະໜູນ. ໃນຄະນະດຽວກັນ, ແຕ່ລະປະເທດດ້ອຍພັດທະນາທີ່ເປັນສະມາຊິກ ຈະແຈ້ງລາຍລະອຽດວັນທີຂອງການຈັດຕັ້ງປະຕິບັດ.

4.3. ບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ໄດ້ຮັບຮູ້ຄວາມຫຍຸ້ງຍາກໃນການສົ່ງວັນທີການຈັດຕັ້ງປະຕິບັດ ໃຫ້ທັນກັບກຳນົດເສັ້ນຕາຍທີ່ລະບຸໄວ້ໃນຫຍໍ້ໜ້າ 4.1 ແລະ 4.2 ຍ້ອນວ່າຂາດການສະໜັບສະໜູນຈາກຜູ້ໃຫ້ທຶນ ຫຼື ບໍ່ມີຄວາມຄືບໜ້າໃນບົດບັນຍັດການຊ່ວຍເຫຼືອ ແລະ ການສະໜັບສະໜູນ ເຊິ່ງຄວນແຈ້ງໃຫ້ຄະນະກຳມະການໄວເທົ່າທີ່ຈະໄວໄດ້ ກ່ອນເວລາກຳນົດເສັ້ນຕາຍເຫຼົ່ານັ້ນ. ບັນດາສະມາຊິກຕົກລົງໃຫ້ຄວາມຮ່ວມມືເພື່ອຊ່ວຍເຫຼືອ ໃນການແກ້ໄຂຄວາມຫຍຸ້ງຍາກ, ໂດຍອີງໃສ່ສະພາບຄວາມເປັນຈິງສະເພາະ ແລະ ບັນຫາພິເສດຕ່າງໆທີ່ປະເທດສະມາຊິກກຳລັງວິຕົກກັງວົນ. ຄະນະກຳມະການຈະຈັດຕັ້ງປະຕິບັດເພື່ອແກ້ໄຂຂໍ້ຫຍຸ້ງຍາກຕາມຄວາມເໝາະສົມ ແລະ ຈຳເປັນ, ໂດຍການຕໍ່ອາຍຸກຳນົດເສັ້ນຕາຍແກ່ສະມາຊິກ ທີ່ມີຄວາມຫຍຸ້ງຍາກໃນການແຈ້ງວັນທີຈັດຕັ້ງປະຕິບັດ.

4.4. ກອງເລຂາຈະເຕືອນສະມາຊິກ ຖ້າຫາກສະມາຊິກນັ້ນບໍ່ໄດ້ແຈ້ງວັນທີຈັດຕັ້ງປະຕິບັດບັນດາບົດບັນຍັດ ເຊິ່ງໄດ້ກຳນົດໄວ້ໃນໝວດ B ຫຼື C 3 ເດືອນ ກ່ອນກຳນົດເສັ້ນຕາຍທີ່ໄດ້ລະບຸໄວ້ໃນຫຍໍ້ໜ້າ 4.1 b. ຫຼື 4.1 e., ຫຼື ໃນກໍລະນີຂອງປະເທດດ້ອຍພັດທະນາທີ່ເປັນສະມາຊິກໃນຫຍໍ້ໜ້າທີ 4.2 b. ຫຼື 4.2 f., ຖ້າຫາກສະມາຊິກບໍ່ໄດ້ກໍ່ປະຕິບັດໄດ້ໃນຫຍໍ້ໜ້າ 4.2 b., ເພື່ອຕໍ່ອາຍຸກຳນົດເສັ້ນຕາຍ ແລະ ຍັງບໍ່ໄດ້ແຈ້ງວັນທີການຈັດຕັ້ງປະຕິບັດ, ປະເທດສະມາຊິກຈະຈັດຕັ້ງປະຕິບັດບົດບັນຍັດຕ່າງໆພາຍໃນ ໄລຍະເວລາ 1 ປີ ຫຼັງຈາກກຳນົດເສັ້ນຕາຍຖືກກຳນົດໃນຫຍໍ້ໜ້າ 4.1 b., 4.1 e., ຫຼື ໃນກໍລະນີຂອງປະເທດດ້ອຍພັດທະນາທີ່ເປັນສະມາຊິກໃນຫຍໍ້ໜ້າ 4.2 b. ຫຼື 4.2 f., ຫຼືຖືກຕໍ່ອາຍຸໂດຍຫຍໍ້ໜ້າ 4.3.

4.5. ຄະນະກຳມະການຈະບັນທຶກບັນດາເອກະສານຊ້ອນທ້າຍ ເຊິ່ງລວມມີວັນທີຂອງການຈັດຕັ້ງປະຕິບັດ ຂອງແຕ່ລະປະເທດສະມາຊິກຂອງບົດບັນຍັດຂອງໝວດ B ແລະ ໝວດ C, ລວມທັງວັນທີທີ່ລະບຸໄວ້ໃນຫຍໍ້ໜ້າ 4.4 ບໍ່ໃຫ້ຊ້າກວ່າ 60 ວັນ ຫຼັງຈາກວັນທີການແຈ້ງວັນທີການຈັດຕັ້ງປະຕິບັດຂອງໝວດ B ແລະ ໝວດ C ທີ່ສອດ ຄ່ອງກັບຫຍໍ້ໜ້າ 4.1, 4.2 ແລະ 4.3, ເຊິ່ງສ້າງເປັນເອກະສານຊ້ອນທ້າຍຂອງພາກສ່ວນສຳຄັນຂອງສັນຍາສະບັບນີ້.

**5. ກົນໄກການເຕືອນລ່ວງໜ້າ: ການຕໍ່ອາຍຸວັນທີການຈັດຕັ້ງປະຕິບັດບົດບັນຍັດໃນໝວດB ແລະ C**

5.1.

[18] ການຈັດການດັ່ງກ່າວຈະຂຶ້ນກັບເງື່ອນໄຂທີ່ຖືກຕົກລົງທັງສອງຝ່າຍ, ອາດເປັນທັງສອງຝ່າຍ ຫຼື ໂດຍຜ່ານບັນດາອົງການ ຈັດຕັ້ງສາກົນທີ່ເໝາະສົມ, ໂດຍສອດຄ່ອງກັບຫຍໍ້ໜ້າ 9.3.

a. ບັນດາປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ພິຈາລະນາຕົນເອງຕໍ່ການປະສົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດບົດບັນຍັດ ເຊິ່ງມັນຖືກກໍານົດໃນໝວດ B ແລະ C ໂດຍວັນທີທີ່ກໍານົດພາຍໃຕ້ຫຍໍ້ໜ້າ 4.1 b ແລະ 4.1 e., ຫຼື ໃນກໍລະນີຂອງປະເທດດ້ອຍພັດທະນາທີ່ເປັນສະມາຊິກໃນຫຍໍ້ໜ້າ 4.2 b. ຫຼື 4.2 f., ແລະ ຄວນແຈ້ງໃຫ້ຄະນະກໍາມະການ. ບັນດາປະເທດກໍາລັງພັດທະນາຈະແຈ້ງໃຫ້ຄະນະກໍາມະການບໍ່ໃຫ້ເກີນ 120 ວັນ ກ່ອນວັນໝົດອາຍຸຂອງວັນທີຈັດຕັ້ງປະຕິບັດ. ບັນດາປະເທດດ້ອຍພັດທະນາຈະແຈ້ງໃຫ້ຄະນະກໍາມະການ ບໍ່ໃຫ້ເກີນ 90 ວັນ ກ່ອນວັນໝົດອາຍຸຂອງວັນທີຈັດຕັ້ງປະຕິບັດ.

b. ການແຈ້ງໃຫ້ຄະນະກໍາມະການຈະສະແດງໃຫ້ເຫັນວັນທີໃໝ່ ໂດຍບັນດາປະເທດກໍາລັງພັດ ທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ຄາດຫວັງເພື່ອສາມາດຈັດຕັ້ງປະຕິບັດບົດບັນຍັດທີ່ກ່ຽວຂ້ອງ. ແຈ້ງການອາດຈະສະແດງໃຫ້ເຫັນບັນດາເຫດຜົນ ຂອງຄວາມຫຼ້າຊ້າໃນການຈັດຕັ້ງປະຕິບັດທີ່ອາດເປັນໄປໄດ້. ບັນດາເຫດຜົນດັ່ງກ່າວອາດລວມເອົາຄວາມຕ້ອງການຂອງການຊ່ວຍເຫຼືອທີ່ຖືກຄາດຫວັງໄວ້ກ່ອນລ່ວງໜ້າ ຫຼື ການຊ່ວຍເຫຼືອເພີ່ມເຕີມເພື່ອຊ່ວຍເຫຼືອການສ້າງຂີດຄວາມອາດສາມາດ.

5.2. ຖ້າຫາກຄວາມຕ້ອງການເວລາເພີ່ມເຕີມໃນການຈັດຕັ້ງປະຕິບັດ ຂອງປະເທດກໍາລັງພັດທະນາທີ່ເປັນສະມາຊິກບໍ່ເກີນ 18 ເດືອນ ຫຼື ຄວາມຕ້ອງການເວລາເພີ່ມເຕີມໃນການຈັດຕັ້ງປະຕິບັດ ຂອງປະເທດດ້ອຍພັດທະນາທີ່ເປັນສະມາຊິກບໍ່ເກີນ 3 ປີ, ຄວາມຕ້ອງການເວລາເພີ່ມເຕີມໃນການຈັດຕັ້ງປະຕິ ບັດຂອງປະເທດສະມາຊິກມີຢ່າງເຕັມສ່ວນ ໂດຍປາດສະຈາກການຄັດຄ້ານຈາກຄະນະກໍາມະການ.

5.3. ຖ້າຫາກປະເທດກໍາລັງພັດທະນາ ຫຼື ດ້ອຍພັດທະນາທີ່ເປັນສະມາຊິກ ຮຽກຮ້ອງການຕໍ່ອາຍຸຄັ້ງທໍາອິດຍາວນານກວ່າທີ່ໄດ້ສະໜອງໃຫ້ໃນຫຍໍ້ໜ້າ 5.2 ຫຼື ຄັ້ງທີ 2 ຫຼື ຄັ້ງອື່ນໆຕໍ່ໄປອີກ, ພວກເຂົາອາດຈະສົ່ງຄວາມຕ້ອງການໃນການຕໍ່ໃຫ້ຄະນະກໍາມະການ ເຊິ່ງລວມມີຂໍ້ມູນຂ່າວສານທີ່ອະທິບາຍໃນຂໍ້ 5.1 b. ບໍ່ໃຫ້ເກີນ 120 ວັນ ຕໍ່ກັບບັນດາປະເທດກໍາລັງພັດທະນາ ແລະ ບໍ່ໃຫ້ເກີນ 90 ວັນ ຕໍ່ກັບບັນດາປະເທດດ້ອຍພັດທະນາ ກ່ອນວັນໝົດອາຍຸວັນທີຈັດຕັ້ງປະຕິບັດຂອງສັນຍາສະບັບຕົ້ນ ຫຼື ວັນທີຕໍ່ອາຍຸຄັ້ງຕໍ່ໄປ.

5.4. ຄະນະກໍາມະການຈະພິຈາລະນາໃຫ້ຄວາມເຫັນໃຈ ຄວາມຕ້ອງການສໍາລັບການຕໍ່ອາຍຸ ຕາມສະພາບຄວາມເປັນຈິງຂອງສະມາຊິກທີ່ຍື່ນສະເໜີຄວາມຕ້ອງການ. ສະພາບການເຫຼົ່ານີ້ອາດລວມມີຄວາມຫຍຸ້ງຍາກ ແລະ ຄວາມຫຼ້າຊ້າຂອງການໄດ້ຮັບຄວາມຊ່ວຍເຫຼືອ.

**6. ການຈັດຕັ້ງປະຕິບັດຂອງໝວດB ແລະ C**

6.1. ເພື່ອໃຫ້ສອດຄ່ອງກັບຫຍໍ້ໜ້າ 1.2, ຖ້າຫາກປະເທດກໍາລັງພັດທະນາ ຫຼື ປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ໄດ້ສໍາເລັດບັນດາຂັ້ນຕອນທີ່ລະບຸໄວ້ໃນຫຍໍ້ໜ້າຍ່ອຍ 4.1 ຫຼື 4.2 ແລະ ຫຍໍ້ໜ້າ 5 ແລະ ຖ້າຫາກການຕໍ່ອາຍຸທີ່ຖືກຮຽກຮ້ອງໄດ້ຖືກສະໜອງໃຫ້ ຫຼື ຖ້າຫາກປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ມີປະສົບປະການຕໍ່ກັບສະພາບການທີ່ບໍ່ສາມາດເຫັນໄດ້ ເຊິ່ງຈໍາກັດການຕໍ່ອາຍຸທີ່ຖືກສະໜອງໃຫ້ພາຍໃນຫຍໍ້ໜ້າ 5, ປະເມີນດ້ວຍຕົນເອງວ່າຄວາມອາດສາມາດເພື່ອຈັດຕັ້ງປະຕິບັດບົດບັນຍັດພາຍໃຕ້ໝວດ C ຍັງສືບຕໍ່ຂາດແຄນ, ປະເທດສະມາຊິກດັ່ງກ່າວຈະແຈ້ງໃຫ້ຄະນະກໍາມະການຂອງຄວາມບໍ່ມີຄວາມສາມາດເພື່ອຈັດຕັ້ງປະຕິບັດບົດບັນຍັດທີ່ກ່ຽວຂ້ອງ.

6.2. ຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າ ຈະສ້າງຕັ້ງກຸ່ມຊ່ຽວຊານໂດຍທັນທີ ແລະ ບໍ່ວ່າໃນກໍລະນີໃດແມ່ນບໍ່ໃຫ້ໜ້ອຍກວ່າ 60 ວັນ ຫຼັງຈາກຄະນະກໍາມະການໄດ້ຮັບແຈ້ງການຈາກ ປະເທດກໍາລັງພັດທະນາ ຫຼື ປະເທດດ້ອຍພັດທະນາທີ່ເປັນສະມາຊິກ. ກຸ່ມຊ່ຽວຊານຈະຍືນຍັນບັນຫາ ແລະ ໃຫ້ຄໍາແນະນໍາໃຫ້ຄະນະກໍາມະການພາຍໃນເວລາ 120 ວັນ ຂອງການປະສົມປະສານກັນ.

6.3. ກຸ່ມຊ່ຽວຊານຈະປະສົມປະສານຊ່ຽວຊານອິດສະຫຼະ 5 ທ່ານ, ທີ່ມີຄວາມຊຳນິຊຳນານສູງທາງດ້ານການອຳນວຍຄວາມສະດວກທາງດ້ານການຄ້າ, ການຊ່ວຍເຫຼືອ ແລະ ການສະໜັບສະໜູນການສ້າງຄວາມອາດສາມາດ. ການປະສົມປະສານຂອງກຸ່ມຊ່ຽວຊານ ຈະຮັບປະກັນຄວາມສົມດູນລະຫວ່າງສະມາຊິກທີ່ເປັນປະເທດກຳລັງພັດທະນາ ແລະ ພັດທະນາ. ຖ້າຫາກປະເທດດ້ອຍພັດທະນາທີ່ເປັນສະມາຊິກທີ່ມີສ່ວນຮ່ວມ, ກຸ່ມຊ່ຽວຊານຈະລວມເອົາຢ່າງໜ້ອຍສຸດ 1 ປະເທດສະມາຊິກທີ່ມາຈາກປະ ເທດດ້ອຍພັດທະນາ. ຖ້າຫາກຄະນະກຳມະການບໍ່ສາມາດຕົກລົງການປະສົມປະສານຂອງກຸ່ມຊ່ຽວ ຊານພາຍໃນເວລາ 20 ວັນຂອງການສ້າງຕັ້ງຄະນະກຳມະການ, ຜູ້ອຳນວຍການໃຫ່ຍ ໂດຍການປຶກສາຫາລືກັບປະທານຂອງຄະນະກຳມະການຈະຕັດສິນໃຈການປະສົມປະສານກຸ່ມຊ່ຽວຊານ ໂດຍສອດຄ່ອງກັບບັນດາເງື່ອນໄຂຂອງຫຍໍ້ໜ້ານີ້.

6.4. ກຸ່ມຊ່ຽວຊານຈະພິຈາລະນາການປະເມີນຕົນເອງຂອງສະມາຊິກ ທີ່ຂາດຄວາມອາດສາມາດ ແລະ ຈະໃຫ້ຄຳແນະນຳ ແກ່ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ. ໃນເວລາພິຈາລະນາກ່ຽວກັບຄຳແນະນຳຂອງກຸ່ມຊ່ຽວຊານກ່ຽວຂ້ອງກັບປະເທດດ້ອຍພັດທະນາ ທີ່ເປັນສະມາຊິກ, ຄະນະກຳມະການຈະດຳເນີນການທີ່ເໝາະສົມ ເຊິ່ງຈະອຳນວຍຄວາມສະດວກຜົນສຳເລັດຂອງການຈັດຕັ້ງປະຕິບັດເພີ່ມຄວາມອາດສາມາດແບບຍືນຍົງ.

6.5. ປະເທດສະມາຊິກຈະບໍ່ຈຳເປັນຕ້ອງດຳເນີນການພາຍໃຕ້ ຄວາມເຂົ້າໃຈຂອງການແກ້ໄຂຂໍ້ຂັດແຍ່ງ ໃນບັນຫານີ້ຈາກເວລາຂອງປະເທດກຳລັງພັດທະນາທີ່ເປັນສະມາຊິກ ແຈ້ງໃຫ້ຄະນະກຳມະການຄວາມບໍ່ມີຄວາມອາດສາມາດຈັດຕັ້ງປະຕິບັດບົດບັນຍັດທີ່ກ່ຽວຂ້ອງ ຈົນກະທັ້ງກອງປະຊຸມຄັ້ງທຳອິດຂອງຄະນະກຳມະການ ຫຼັງຈາກພວກເຂົາໄດ້ຮັບຄຳແນະນຳຂອງກຸ່ມຊ່ຽວຊານ. ທີ່ກອງປະຊຸມ, ຄະນະກຳມະການຈະພິຈາລະນາຄຳແນະນຳຂອງກຸ່ມຊ່ຽວຊານ. ສຳລັບປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ການດຳເນີນການພາຍໃຕ້ຄວາມເຂົ້າໃຈຂອງການແກ້ໄຂຂໍ້ຂັດແຍ່ງ ຈະບໍ່ນຳໃຊ້ໃນບົດບັນຍັດທີ່ກ່ຽວຂ້ອງ ຈາກວັນທີຂອງແຈ້ງການໃຫ້ຄະນະກຳມະການ ຂອງຄວາມບໍ່ມີຄວາມສາມາດຈັດຕັ້ງປະຕິບັດບົດບັນຍັດຈົນກະທັ້ງຄະນະກຳມະການຕັດສິນໃຈຕໍ່ກັບບັນຫາ ຫຼື ພາຍໃນ 24 ເດືອນ ຫຼັງຈາກກອງປະຊຸມຄະນະກຳມະການຄັ້ງທຳອິດລະບຸໄວ້ຂ້າງເທິງ ຫຼື ກ່ອນໜ້ານັ້ນ.

6.6. ຖ້າຫາກປະເທດດ້ອຍພັດທະນາທີ່ເປັນສະມາຊິກ ສູນເສຍຄວາມອາດສາມາດເພື່ອຈັດຕັ້ງປະຕິບັດ ຂໍ້ຜູກພັດຂອງໝວດ C, ພວກເຂົາອາດແຈ້ງໃຫ້ຄະນະກຳມະການ ແລະ ຕິດຕາມບັນດາຂະບວນການທີ່ລະບຸໄວ້ໃນຫຍໍ້ໜ້າທີ 6.

**7. ການເຄື່ອນຍ້າຍລະຫວ່າງໝວດB ແລະ C**

ປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ຜູ້ເຊິ່ງໄດ້ແຈ້ງບັນດາບົດບັນຍັດພາຍໃຕ້ໝວດ B ແລະ C ອາດຍ້າຍບັນດາບົດບັນຍັດ ລະຫວ່າງ ໝວດຕ່າງໆໂດຍຜ່ານການສະໜອງຂອງແຈ້ງການໃຫ້ແກ່ຄະນະກຳມະການ. ຖ້າຫາກປະເທດສະມາຊິກສະເໜີເພື່ອຍ້າຍບົດບັນຍັດຈາກໝວດ B ແລະ C, ປະເທດສະມາຊິກຈະສະໜອງຂໍ້ມູນຂ່າວສານວ່າດ້ວຍການຊ່ວຍເຫຼືອ ແລະ ການສະໜັບສະໜູນທີ່ຕ້ອງການແກ່ການສ້າງຄວາມອາດສາມາດ

7.2. ໃນກໍລະນີທີ່ມີຄວາມຕ້ອງການເວລາເພີ່ມເຕີມ ເພື່ອຈັດຕັ້ງປະຕິບັດບົດບັນຍັດ ເຊິ່ງເປັນຜົນຂອງໝວດຂອງສັນຍາທີ່ຖືກຍົກຍ້າຍຈາກໝວດ B ເຖິງ C, ປະເທດສະມາຊິກອາດຈະ:

a. ນຳໃຊ້ບົດບັນຍັດຫຍໍ້ໜ້າ 5, ລວມທັງໂອກາດສຳລັບການຕໍ່ອາຍຸແບບໂອໂຕເມຕິກ; ຫຼື

b. ຄວາມຕ້ອງການ ແລະ ການກວດກາໂດຍຄະນະກຳມະການ ຂອງຄວາມຕ້ອງການເວລາເພີ່ມເຕີມຂອງປະເທດສະມາຊິກ ເພື່ອຈັດຕັ້ງປະຕິບັດບົດບັນຍັດ ແລະ ຖ້າຫາກມີຄວາມຈຳເປັນສຳລັບການຊ່ວຍເຫຼືອ ແລະ ການສະໜັບສະໜູນສຳລັບການສ້າງຄວາມອາດສາມາດ ລວມທັງຄວາມເປັນໄປໄດ້ໃນການທົບທວນ ແລະ ການໃຫ້ຄຳແນະນຳໂດຍກຸ່ມຊ່ຽວຊານພາຍໃຕ້ຫຍໍ້ໜ້າ 6; ຫຼື

c. ໃນກໍລະນີປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ທຸກວັນທີຈັດຕັ້ງປະຕິບັດໃໝ່ທີ່ມີໄລຍະເວລາຍາວກວ່າ 4 ປີ ຫຼັງຈາກວັນທີຕົວຈິງ ພາຍໃຕ້ໝວດ B ຈະຕ້ອງການການອະນຸມັດໂດຍຄະນະກຳມະການ. ພ້ອມດຽວກັນນັ້ນ, ປະເທດດ້ອຍພັດທະນາຈະສືບຕໍ່ການຂໍຄວາມຊ່ວຍເຫຼືອຕໍ່ຈາກຫຍໍ້ໜ້າທີ 5. ມີຄວາມເຂົ້າໃຈວ່າການຊ່ວຍເຫຼືອ ແລະ ການສະໜັບສະໜູນການສ້າງຂີດຄວາມສາມາດແມ່ນມີຄວາມຕ້ອງການ ສຳລັບປະເທດດ້ອຍພັດທະນາທີ່ເປັນສະມາຊິກ.

## 8. ໄລຍະເວລາອະນຸໂລມສຳລັບການສະເໜີຄວາມເຂົ້າໃຈວ່າດ້ວຍບັນດາກົດລະບຽບ ແລະ ລະບຽບການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງ

8.1. ສຳລັບໄລຍະເວລາ 2 ປີ ຫຼັງຈາກສັນຍາສະບັບນີ້ມີຜົນບັງຄັບໃຊ້, ບັນດາບົດບັນຍັດຂອງ ມາດຕາ XXII ແລະ XXIII ຂອງ GATT 1994 ທີ່ໄດ້ຂະຫຍາຍ ແລະ ນຳໃຊ້ໂດຍຄວາມເຂົ້າໃຈວ່າດ້ວຍບັນ ດາກົດລະບຽບ ແລະ ລະບຽບການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງ ຈະບໍ່ນຳໃຊ້ເພື່ອການແກ້ໄຂຂໍ້ຂັດແຍ່ງຕໍ່ກັບປະເທດດ້ອຍພັດທະນາທີ່ເປັນສະມາຊິກ ທີ່ກ່ຽວຂ້ອງກັບບົດບັນຍັດເຊິ່ງປະເທດສະມາຊິກໄດ້ກຳນົດໃນໝວດ A.

8.2. ສຳລັບໄລຍະເວລາ 6 ປີ ຫຼັງຈາກສັນຍາສະບັບນີ້ມີຜົນບັງຄັບໃຊ້, ບັນດາບົດບັນຍັດຂອງ ມາດຕາ XXII ແລະ XXIII ຂອງ GATT 1994 ທີ່ໄດ້ຂະຫຍາຍ ແລະ ນຳໃຊ້ໂດຍຄວາມເຂົ້າໃຈວ່າ ບັນດາກົດລະບຽບ ແລະ ລະບຽບການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງ ຈະບໍ່ນຳໃຊ້ເພື່ອການແກ້ໄຂຂໍ້ຂັດແຍ່ງຕໍ່ກັບປະເທດດ້ອຍພັດທະນາທີ່ເປັນສະມາຊິກ ທີ່ກ່ຽວຂ້ອງກັບບົດບັນຍັດເຊິ່ງປະເທດສະມາຊິກໄດ້ກຳນົດໃນໝວດ A.

8.3. ສຳລັບໄລຍະເວລາ 2 ປີ ຫຼັງຈາກການຈັດຕັ້ງປະຕິບັດຂອງບັນດາບົດບັນຍັດພາຍໃຕ້ໝວດ B ແລະ C ໂດຍປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ບັນດາບົດບັນຍັດຂອງ ມາດຕາ XXII ແລະ XXIII ຂອງ GATT 1994 ທີ່ໄດ້ຂະຫຍາຍ ແລະ ນຳໃຊ້ໂດຍຄວາມເຂົ້າໃຈວ່າດ້ວຍບັນດາກົດລະບຽບ ແລະ ລະບຽບການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງ ຈະບໍ່ນຳໃຊ້ເພື່ອການແກ້ໄຂຂໍ້ຂັດແຍ່ງຕໍ່ກັບປະເທດດ້ອຍພັດທະນາທີ່ເປັນສະມາຊິກ ທີ່ກ່ຽວຂ້ອງກັບບົດບັນຍັດເຫຼົ່ານັ້ນ.

8.4. ເຖິງຢ່າງໃດກໍ່ຕາມ, ໄລຍະເວລາອະນຸໂລມສຳລັບການສະເໜີຄວາມເຂົ້າໃຈວ່າດ້ວຍບັນດາກົດລະ ບຽບ ແລະ ລະບຽບການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງ, ກ່ອນການສະເໜີຄວາມຕ້ອງການການປຶກສາຫາລືອີງໃສ່ ມາດຕາ XXII ແລະ XXIII ແລະ ທັງໝົດບາດກ້າວຂອງຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ ທີ່ກ່ຽວຂ້ອງກັບວິທີການ ຂອງປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ປະເທດສະມາຊິກຈະໃຫ້ການພິຈາລະນາສະເພາະໃຫ້ແກ່ສະຖານະການພິເສດຂອງບັນດາປະເທດດ້ອຍພັດທະນາທີ່ເປັນສະມາຊິກ. ພ້ອມດຽວກັນນັ້ນ, ບັນດາປະເທດສະມາຊິກຈະປະຕິບັດການຍົກເອົາບັນຫາ ທີ່ຢູ່ພາຍໃຕ້ຄວາມເຂົ້າໃຈວ່າດ້ວຍບັນດາກົດລະບຽບ ແລະ ລະບຽບການຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງ ທີ່ລວມມີປະເທດດ້ອຍພັດທະນາທີ່ເປັນສະມາຊິກ.

8.5. ແຕ່ລະປະເທດສະມາຊິກຈະຮຽກຮ້ອງ ໃນລະຫວ່າງ ໄລຍະເວລາອະນຸໂລມທີ່ໄດ້ອະນຸຍາດພາຍໃຕ້ຫຍໍ້ໜ້ານີ້, ເຊິ່ງສະໜອງໂອກາດທີ່ພຽງພໍໃຫ້ແກ່ບັນດາສະມາຊິກເພື່ອການສົນທະນາ ທີ່ກ່ຽວຂ້ອງກັບບັນຫາຕ່າງໆທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຂອງສັນຍາສະບັບນີ້.

## 9. ບັນບັນຍັດຂອງການຊ່ວຍເຫຼືອສຳລັບການສ້າງຂີດຄວາມສາມາດ

9.1. ບັນດາສະມາຊິກຜູ້ໃຫ້ທຶນຕົກລົງ ເພື່ອອຳນວຍຄວາມສະດວກບົດບັນຍັດ ຂອງການຊ່ວຍເຫຼືອ ແລະ ການສະໜັບສະໜູນຄວນຖືກສະໜອງໃຫ້ປະເທດດ້ອຍພັດທະນາ ທີ່ເປັນສະມາຊິກ ໂດຍອີງໃສ່ເງື່ອນໄຂການຕົກລົງທັງສອງຝ່າຍ ແລະ ທັງສອງຝ່າຍ ຫຼື ໂດຍຜ່ານບັນດາອົງການຈັດຕັ້ງສາກົນທີ່ເໝາະສົມ. ຈຸດປະສົງແມ່ນເພື່ອຊ່ວຍເຫຼືອປະ ເທດກຳລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກເພື່ອຈັດຕັ້ງປະຕິບັດບັນດາບົດບັນຍັດຂອງ ພາກທີ I ຂອງສັນຍາສະບັບນີ້.

9.2. ໂດຍອີງໃສ່ຄວາມຕ້ອງການສະເພາະ ຂອງປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ການຊ່ວຍເຫຼືອ ແລະ ສະໜັບສະໜູນທີ່ເປັນເປົ້າໝາຍ ຄວນຖືກສະໜອງໃຫ້ປະເທດດ້ອຍພັດທະນາທີ່ເປັນສະມາຊິກ ເຊັ່ນດຽວກັນເພື່ອໃຫ້ການຊ່ວຍເຫຼືອພວກເຂົາໃນການສ້າງຄວາມອາດສາມາດແບບຍືນຍົງ ເພື່ອຈັດຕັ້ງປະຕິບັດບັນດາຂໍ້ຜູກໝັດຂອງພວກເຂົາ. ຜ່ານກົນໄກການຮ່ວມມືພັດທະນາທີ່ກ່ຽວຂ້ອງ ແລະ ສອດຄ່ອງກັບບັນດາຫຼັກການຂອງການຊ່ວຍເຫຼືອດ້ານເຕັກນິກ ແລະ ການສ້າງຂີດຄວາມສາມາດທີ່ອ້າງອີງໃສ່ຫຍໍ້ໜ້າທີ 9.3, ບັນດາຄູ່ຮ່ວມພັດທະນາຈະພະຍາຍາມເພື່ອສະໜອງການຊ່ວຍເຫຼືອ ແລະ ສະໜັບສະໜູນໃນຂົງເຂດນີ້ ໃນວິທີການເຊິ່ງບໍ່ສາມາດຕໍ່ລອງກັບບັນດາບຸລິມະສິດການພັດທະນາທີ່ມີຢູ່ແລ້ວ.

9.3. ບັນດາປະເທດສະມາຊິກ ຈະພະຍາຍາມນຳໃຊ້ບັນດາຫຼັກການລຸ່ມນີ້ ເພື່ອສະໜອງການຊ່ວຍເຫຼືອ ແລະ ການສະໜັບສະໜູນ ສຳລັບການສ້າງຂີດຄວາມສາມາດ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຂອງສັນຍາສະບັບນີ້:

a. ໃຫ້ຄວາມສຳຄັນແກ່ຂອບການພັດທະນາທັງໝົດຂອງປະເທດສະມາຊິກ ແລະ ພາກພື້ນ ຖ້າຫາມີຄວາມກ່ຽວຂ້ອງ ແລະ ເໝາະສົມ, ໂຄງການການປະຕິຮູບ ແລະ ການຊ່ວຍເຫຼືອທາງດ້ານເຕັກນິກທີ່ກຳລັງດຳເນີນການຢູ່;

b. ລວມເອົາບັນດາກິດຈະກຳທີ່ສອດຄ່ອງ ແລະ ເໝາະສົມເພື່ອແກ້ໄຂສິ່ງທ້າທາຍຕ່າງໆຂອງພາກພື້ນ ແລະ ອະນຸພາກພື້ນ ແລະ ສະໜັບສະໜູນການເຊື່ອມໂຍງພາກພື້ນ ແລະ ອະນຸພາກພື້ນ;

c. ຮັບປະກັນວ່າບັນດາກິດຈະກຳ ການປັບປຸງການອຳນວຍຄວາມສະດວກທາງດ້ານການຄ້າ ຂອງພາກເອກະຊົນ ທີ່ກຳລັງຈັດຕັ້ງປະຕິບັດແມ່ນນອນຢູ່ໃນກິດຈະກຳຂອງການຊ່ວຍເຫຼືອ;

d. ສະໜັບສະໜູນການປະສານງານ ລະຫວ່າງ ບັນດາປະເທດສະມາຊິກ ແລະ ສະຖາບັນຕ່າງໆທີ່ກ່ຽວຂ້ອງ, ລວມທັງບັນດາປະຊາຄົມເສດຖະກິດພາກພື້ນ, ເພື່ອຮັບປະກັນປະສິດ ທິພາບສູງສຸດ ແລະ ໝາກຜົນຈາກການຊ່ວຍເຫຼືອນີ້. ເຊິ່ງລວມມີ:

i. ການປະສານງານ, ໃນເບື້ອງຕົ້ນແມ່ນໃນປະເທດ ແລະ ພາກພື້ນ ບ່ອນເຊິ່ງການຊ່ວຍເຫຼືອໄດ້ຖືກສະໜອງໃຫ້ ລະຫວ່າງບັນດາປະເທດສະມາຊິກ ແລະ ຜູ້ໃຫ້ທຶນ ແລະ ລະຫວ່າງ ຜູ້ໃຫ້ທຶນສອງຝ່າຍ ແລະ ຫຼາຍຝ່າຍ ເຊິ່ງຄວນແນໃສ່ເພື່ອຫຼີກລ້ຽງໂຄງການຊ່ວຍເຫຼືອທີ່ຊ້ຳຊ້ອນກັນ ແລະ ບໍ່ສອດຄ່ອງກັບການປັບປຸງ ໂດຍຜ່ານການປະສານງານຢ່າງໃກ້ຊິດຂອງການມີສ່ວນຮ່ວມຂອງການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການສ້າງຂີດຄວາມສາມາດ.

ii. ສຳລັບປະເທດດ້ອຍພັດທະນາທີ່ເປັນສະມາຊິກ, ການຊຸກຍູ້ຂອບການເຊື່ອມໂຍງຄວນເປັນພາກສ່ວນໜຶ່ງຂອງຂະບວນການປະສານງານນີ້; ແລະ

iii. ບັນດາປະເທດສະມາຊິກຄວນສະໜັບສະໜູນການປະສານງານ ລະຫວ່າງ ການຄ້າ ແລະ ພະນັກງານພັດທະນາ, ທັງຢູ່ໃນປະເທດ ແລະ ເຈນນີວາ ໃນການຈັດຕັ້ງປະຕິບັດຂອງສັນຍາ ແລະ ການຊ່ວຍເຫຼືອທາງດ້ານເຕັກນິກ.

f. ສົ່ງເສີມການນໍາໃຊ້ໂຄງສ້າງການປະສານງານພາຍໃນປະເທດ ແລະ ພາກພື້ນທີ່ມີຢູ່ແລ້ວ ເຊັ່ນ: ກອງປະຊຸມໂຕະມົນ ແລະ ກຸ່ມສົນທະນາ ເພື່ອປະສານສົມທົບ ແລະ ຄຸ້ມຄອງກິດຈະກໍາການຈັດຕັ້ງປະຕິບັດ; ແລະ

g. ຊຸກຍູ້ບັນດາປະເທດກໍາລັງພັດທະນາທີ່ເປັນສະມາຊິກ ເພື່ອສະໜອງການສ້າງຂີດຄວາມສາມາດໃຫ້ປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາ ແລະ ພິຈາລະນາໃຫ້ການຊ່ວຍ ເຫຼືອບັນດາກິດຈະກໍາເຫຼົ່ານັ້ນຖ້າຫາກມີຄວາມຈໍາເປັນ.

9.4. ຄະນະກໍາມະການຈະຈັດວາລະກອງປະຊຸມຢ່າງໜ້ອຍ 1 ຄັ້ງຕໍ່ປີເພື່ອ:

a. ສົນທະນາບັນຫາຕ່າງໆທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຂອງບັນດາບົດບັນຍັດ ຫຼື ພາກຍ່ອຍຂອງບົດບັນຍັດ;

b. ທົບທວນຄວາມຄືບໜ້າໃນບົດບັນຍັດ ຂອງການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການສ້າງຂີດຄວາມສາມາດ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຂອງສັນຍາ, ລວມທັງປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ທີ່ບໍ່ໄດ້ຮັບການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການສ້າງຂີດຄວາມສາມາດທີ່ພຽງພໍ;

c. ແລກປ່ຽນປະສົບການ ແລະ ຂໍ້ມູນກ່ຽວກັບບັນດາໂຄງການຊ່ວຍເຫຼືອ ແລະ ການຈັດຕັ້ງປະຕິບັດ, ລວມທັງບັນດາສິ່ງທ້າທາຍ ແລະ ຜົນສໍາເລັດ;

d. ທົບທວນບັນດາແຈ້ງການຂອງຜູ້ໃຫ້ທຶນທີ່ລະບຸໄວ້ໃນຫຍໍ້ໜ້າ 10; ແລະ

e. ທົບທວນການດໍາເນີນງານຂອງຫຍໍ້ໜ້າ 9.2.

## 10. ຂໍ້ມູນຂ່າວສານວ່າດ້ວຍການຊ່ວຍເຫຼືອທີ່ຖືກສົ່ງໃຫ້ແກ່ຄະນະກໍາມະການ

10.1. ເພື່ອສະໜອງຄວາມໂປ່ງໃສໃຫ້ປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ໃນບົດບັນຍັດຂອງການຊ່ວຍເຫຼືອ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດຂອງ ພາກທີ I, ແຕ່ລະປະເທດທີ່ເປັນສະມາຊິກຈະຊ່ວຍເຫຼືອ ບັນດາປະເທດກໍາລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ກັບການຈັດຕັ້ງປະຕິບັດສັນຍາສະບັບນີ້ ຈະສົ່ງໃຫ້ແກ່ຄະນະກໍາມະການ ນັບແຕ່ສັນຍາມີຜົນບັງຄັບໃຊ້ ແລະ ປີຕໍ່ປີ. ຂໍ້ມູນຕໍ່ໄປນີ້ວ່າດ້ວຍການຊ່ວຍເຫຼືອ ແລະ ການສະໜັບສະໜູນການສ້າງຂີດຄວາມສາມາດໄດ້ຖືກຊໍາລະໃນໄລຍະ 12 ເດືອນ ກ່ອນ ແລະ ຖ້າມີຄວາມຈໍາເປັນຈະສົ່ງໃຫ້ໃນ 12 ເດືອນຕໍ່ໜ້າ[19]:

a. ລາຍລະອຽດຂອງການຊ່ວຍເຫຼືອ ແລະ ສະໜັບສະໜູນສໍາລັບການສ້າງຂີດຄວາມສາມາດ;

b. ສະຖານະພາບ ແລະ ຈໍານວນເງິນທີ່ຜູກໝັດ/ຊໍາລະ;

c. ບັນດາຂັ້ນຕອນສໍາລັບການຊໍາລະເງິນຂອງການການຊ່ວຍເຫຼືອ ແລະ ສະໜັບສະໜູນ;

d. ປະເທດທີ່ໄດ້ຮັບຜົນປະໂຫຍດ, ຫຼື, ມີຄວາມຈໍາເປັນໃນພາກພື້ນ; ແລະ

e. ອີງການຈັດຕັ້ງປະຕິບັດໃນປະເທດສະມາຊິກ ທີ່ສະໜອງການຊ່ວຍເຫຼືອ ແລະ ໃຫ້ການສະໜັບສະໜູນ. ຂໍ້ມູນຂ່າວສານຈະຖືກສະໜອງໃຫ້ ໃນຮູບແບບສະເພາະໃນຮູບແບບທີ່ລະບຸສະເພາະໃນ ເອກະສານຊ້ອນທ້າຍ 1. ຖ້າເປັນກໍລະນີຂອງສະມາຊິກ OECD, ຂໍ້ມູນຂ່າວສານຈະຖືກສົ່ງໃຫ້ສາມາດອີງໃສ່ຂໍ້ມູນທີ່ກ່ຽວຂ້ອງຈາກລະບົບ

[19] ຂໍ້ມູນຂ່າວສານທີ່ໄດ້ສະໜອງໃຫ້ຈະສະທ້ອນໃຫ້ເຫັນເຖິງຄວາມຕ້ອງການ ທີ່ເປັນຕົວຂັບເຄື່ອນຄວາມເປັນຈິງຂອງບົດບັນຍັດການຊ່ວຍເຫຼືອທາງດ້ານເຕັກນິກ.

ການລາຍງານຜູ້ສະໜອງສິນເຊື່ອ OECD. ປະເທດກຳລັງພັດທະນາທີ່ເປັນສະມາຊິກປະກາດຂໍ້ມູນຂອງຕົນ ໃນຖານະເປັນຜູ້ສະໜອງການຊ່ວຍເຫຼືອ ແລະ ສະໜັບສະໜູນ ແມ່ນຖືກຮຽກຮ້ອງໃນການສະໜອງຂໍ້ມູນຂ້າງເທິງ.

10.2. ບັນດາສະມາຊິກຜູ້ໃຫ້ທຶນ ຊ່ວຍເຫຼືອປະເທດກຳລັງພັດທະນາ ແລະ ດ້ອຍພັດນາທີ່ເປັນສະມາຊິກຈະສົ່ງໃຫ້ຄະນະກຳມະການ:

a. ບັນດາຈຸດຕິດຕໍ່ພົວພັນທີ່ຮັບຜິດຊອບ ສຳລັບການສະໜອງການຊ່ວຍເຫຼືອ ແລະ ສະໜັບສະໜູນສຳລັບການສ້າງຂີດຄວາມສາມາດ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດຂອງບັນດາບົດບັນຍັດຂອງພາກທີ I ຂອງສັນຍາສະບັບນີ້ ລວມທັງບ່ອນທີ່ມີຄວາມຈຳເປັນສະເພາະ, ຂໍ້ມູນຂ່າວສານຂອງຈຸດຕິດຕໍ່ພົວພັນພາຍໃນປະເທດ ແລະ ຂົງເຂດການຊ່ວຍເຫຼືອ ແລະ ການສະໜັບສະໜູນທີ່ຖືກສະໜອງໃຫ້;

b. ຂໍ້ມູນຂ່າວສານວ່າດ້ວຍຂະບວນການ ແລະ ບັນດາກົນໄກສຳລັບການຮຽກຮ້ອງການຊ່ວຍ ເຫຼືອ ແລະ ການສະໜັບສະໜູນ.

ປະເທດກຳລັງພັດທະນາທີ່ເປັນສະມາຊິກ ແຈ້ງຂໍ້ມູນຂອງຕົນໃນຖານະເປັນຜູ້ສະໜອງການຊ່ວຍເຫຼືອ ແລະ ສະໜັບສະໜູນ ແມ່ນຖືກຮຽກຮ້ອງໃຫ້ສະໜອງຂໍ້ມູນຂ້າງເທິງ.

10.3. ບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ມີຄວາມຕັ້ງໃຈເພື່ອນຳໃຊ້ການຊ່ວຍເຫຼືອ ແລະ ການສະໜັບສະໜູນການອຳນວຍຄວາມສະດວກທາງດ້ານການຄ້າທີ່ກ່ຽວຂ້ອງ ຈະສະເໜີຕໍ່ຄະນະກຳມະການຂໍ້ມູນຂ່າວສານ ວ່າດ້ວຍຈຸດຕິດຕໍ່ພົວພັນ ຂອງຫ້ອງການທີ່ຮັບຜິດຊອບການປະສານງານ ແລະ ຈັດບຸລິມະສິດການຊ່ວຍເຫຼືອ ແລະ ການສະໜັບສະໜູນນັ້ນ.

10.4. ບັນດາປະເທດສະມາຊິກຈະສະໜອງຂໍ້ມູນຂ່າວສານໃນຫຍໍ້ໜ້າ 10.2 ແລະ 10.3 ຜ່ານລະບົບອິນເຕີເນັດ ແລະ ຈະປັບປຸງຂໍ້ມູນທີ່ສົ່ງໃຫ້ຖ້າຫາກມີຄວາມຈຳເປັນ. ກອງເລຂາຈະເຜີຍແຜ່ຂໍ້ມູນດັ່ງກ່າວສູ່ສາທາລະນະຊົນ.

10.5. ຄະນະກຳມະການຈະເຊີນບັນດາອົງການຈັດຕັ້ງພາກພື້ນ ແລະ ສາກົນທີ່ກ່ຽວຂ້ອງ (ເຊັ່ນ: IMF, OECD, UNCTAD, WCO, ຄະນະກຳມາທິການ UN ປະຈຳພາກພືນ, ທະນາຄານໂລກ, ຫຼື ສາຂາຍ່ອຍຕ່າງໆ ແລະ ທະນາຄານພັດທະນາພາກພື້ນ) ແລະ ອົງການຈັດຕັ້ງອື່ນໆໃນການຮ່ວມມືເພື່ອສະໜອງຂໍ້ມູນ ໂດຍອີງໃສ່ເນື້ອໃນຂອງຫຍໍ້ໜ້າ 10.1, 10.2 ແລະ 10.4.

## ບົດບັນຍັດສຸດທ້າຍ

1. ສຳລັບຈຸດປະສົງຂອງສັນຍາສະບັບນີ້, ຄຳວ່າ "ສະມາຊິກ" ແມ່ນເຂົ້າໃຈວ່າລວມເອົາອົງການຈັດ ຕັ້ງທີ່ມີສິດອຳນາດຂອງສະມາຊິກນັ້ນ.

2. ບັນດາບັນຍັດທັງໝົດຂອງສັນຍາສະບັບນີ້ ແມ່ນຜູກໝັດປະເທດສະມາຊິກທັງໝົດ.

3. ບັນດາປະເທດສະມາຊິກ ຈະຈັດຕັ້ງປະຕິບັດສັນຍາສະບັບນີ້ ນັບແຕ່ວັນທີມີຜົນບັງຄັບໃຊ້. ບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກ ເຊິ່ງເລືອກນຳໃຊ້ບັນດາບົດບັນຍັດຂອງ ພາກທີ II ຈະຈັດຕັ້ງປະຕິບັດສັນຍາສະບັບນີ້ ໂດຍສອດຄ່ອງກັບ ພາກທີ II.

4. ປະເທດສະມາຊິກທີ່ຮັບຮອງເອົາສັນຍາສະບັບນີ້ ຫຼັງຈາກມີຜົນບັງຄັບໃຊ້ຈະຈັດຕັ້ງປະຕິບັດຂໍ້ຜູກໝັດໃນໝວດ B ແລະ C ໂດຍອີງໃສ່ໄລຍະເວລາທີ່ກ່ຽວຂ້ອງ ຈາກວັນທີສັນຍາມີຜົນບັງຄັບໃຊ້.

5. ບັນດາສະມາຊິກຂອງສະຫະພັນພາສີ ຫຼື ອົງການເສດຖະກິດພາກພື້ນ ອາດຮັບຮອງເອົາຮູບແບບພາກພື້ນເພື່ອຊ່ວຍເຫຼືອໃນການຈັດຕັ້ງປະຕິບັດ ຂອງບັນດາພັນທະຂອງພວກເຂົາພາຍໃຕ້ສັນຍາວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ ລວມທັງຜ່ານການສ້າງຕັ້ງ ແລະ ນຳໃຊ້ຂອງອົງການຈັດຕັ້ງພາກພື້ນ.

6. ເຖິງຢ່າງໃດກໍ່ຕາມ, ການແປຄວາມໝາຍລວມໃນເອກະສານຊ້ອນທ້າຍ 1 A, ບໍ່ມີເນື້ອໃນໃດໃນສັນຍາສະບັບນີ້ຈະຖືກຕີຄວາມໝາຍວ່າ ລົບລ້າງບັນດາພັນທະຂອງສະມາຊິກພາຍໃຕ້ສັນຍາ GATT 1994. ພ້ອມດຽວກັນນັ້ນ, ບໍ່ມີເນື້ອໃນໃດໃນສັນຍາສະບັບນີ້ຈະຖືກຕີຄວາມໝາຍວ່າ ລົບລ້າງບັນດາສິດ ແລະ ພັນທະຂອງສະມາຊິກ ພາຍໃຕ້ສັນຍາວ່າດ້ວຍອຸປະສັກທາງດ້ານເຕັກນິກຕໍ່ການຄ້າ ແລະ ສັນຍາວ່າດ້ວຍການນຳໃຊ້ມາດຕະການສຸຂານາໄມ້ພືດ ແລະ ສັດ.

7. ຂອງການຍົກເວັ້ນທັງໝົດ ແລະ ຂໍ້ບັງຄັບຕ່າງໆ [20] ພາຍໃຕ້ສັນຍາທົ່ວໄປວ່າດ້ວຍອັດຕາພາສີ ແລະ ການຄ້າ GATT 1994 ຫຼື ພາກອື່ນທີ່ກ່ຽວຂ້ອງ ແມ່ນຖືກຍົກເວັ້ນອີງຕາມ ມາດຕາ IX:3 ແລະ ມາດຕາ IX:4 ຂອງສັນຍາ Marrakesh ໃນການສ້າງຕັ້ງອົງການ WTO ແລະ ການປັບປຸງທີ່ມີຜົນບັງຄັບໃຊ້ຂອງສັນຍາສະບັບນີ້ ຈະນຳໃຊ້ຕໍ່ກັບບັນດາບົດບັນຍັດຂອງສັນຍາສະບັບນີ້.

8. ບັນດາບົດບັນຍັດຂອງ ມາດຕາ XXII ແລະ XXIII ຂອງສັນຍາທົ່ວໄປວ່າດ້ວຍອັດຕາພາສີ ແລະ ການຄ້າ 1994 ດັ່ງທີ່ໄດ້ອະທິບາຍ ແລະ ນຳໃຊ້ໂດຍຄວາມເຂົ້າໃຈວ່າດ້ວຍຂໍ້ກຳນົດ ແລະ ຂັ້ນຕອນຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງອາດຈະນຳໃຊ້ໃນການປຶກສາຫາລື ແລະ ການແກ້ໄຂຂໍ້ຄັດແຍ່ງພາຍໃຕ້ສັນຍາສະບັບນີ້, ຍົກເວັ້ນຂໍ້ກຳນົດສະເພາະທີ່ລະບຸໄວ້ໃນສັນຍາສະບັບນີ້.

9. ບັນດາຂໍ້ສະຫງວນອາດບັນຈຸເຂົ້າໃນບົດບັນຍັດຕ່າງໆ ຂອງສັນຍາສະບັບນີ້ ໂດຍປາດສະຈາກການອະນຸຍາດຂອງບັນດາປະເທດສະມາຊິກອື່ນ.

10. ບັນດາຂໍ້ຜູກພັນຂອງໝວດ A ຂອງບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກລະບຸໃນເອກະສານຊ້ອນທ້າຍຂອງສັນຍາສະບັບນີ້ ທີ່ສອດຄ່ອງກັບຫຍໍ້ໜ້າ 3.1 ແລະ 3.2 ຂອງ ພາກທີ II ຈະປະກອບສ່ວນເປັນພາກສ່ວນທີ່ສຳຄັນຂອງສັນຍາສະບັບນີ້.

11. ບັນດາຂໍ້ຜູກພັນຂອງໝວດ B ຂອງບັນດາປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາທີ່ເປັນສະມາຊິກລະບຸໃນເອກະສານຊ້ອນທ້າຍຂອງສັນຍາສະບັບນີ້ ໂດຍອີງໃສ່ຫຍໍ້ໜ້າ 4.5 ຂອງ ພາກທີ II ຈະປະກອບສ່ວນເປັນພາກສ່ວນທີ່ສຳຄັນຂອງສັນຍາສະບັບນີ້.

---

[20] ການຍົກເວັ້ນລວມເອົາທັງ ມາດຕາ V: 7 ແລະ X: 1 ຂອງສັນຍາ GATT 1994 ແລະ ຂໍ້ມູນເພີ່ມເຕີມຕໍ່ ມາດຕາ VIII ຂອງສັນຍາ GATT 1994.